# ບ່ງນມກໍທອປີ



ປາໄນ
ດວງຈໍາປາ
ແສງ ພູຜາເງິນ
ດອກເກດ
ທໍ່ງ ອູບຍູງ

# ບ່ທແມກ້ທອງ



ປາໂມ
ດວງຈຳປາ
ແລງ ພູຜາເງິນ
ດອກເກດ
ທົ່ງ ອູບມູງ

# ບໍ່ບານກໍຫອມ

*ໂຣມເຣື່ອງສັ້ນ ຂອງ*

- ປາໄມ
- ດວງຈຳປາ
- ແລງ ມູຜາເງິນ
- ດອກເກດ
- ທົ່ງ ອູບມຸງ

# ອ່ານໄຜ່ໜາມ

*ອອກວາງຕລາດທຸກ ໆ ທ້າຍເດືອນ*

ຊ່ອຍໃຫ້ພັງສືລາວກ້າວໜ້າ — ຊ່ອຍພັທນາພາສາຂອງຊາດ

ແລະຊ່ອຍປ້ອງກັນການແຊກແຊງຂອງພັງສືຕ່າງດ້າວ

ສບັບພິເສດ ຂອງ "ໄຜ່ໜາມ"
ມະຫາສີລາ ວີຣະວົງສ໌ : ເຈົ້າຂອງ
ນາງດາຣາ ກັລຍາ : ບັນນາທິການ-ຜູ້ຈັດການທົ່ວໄປ

-ສງວນລິຂສິດ-

ພິມຄັ້ງທີ່ນຶ່ງ ຈຳນວນ 1200 ເຫລັ້ມ

ພຶສຈິກາ 2515

# ສາຣະບານ


| ເຣື່ອງ | ໂດຍ | ໜ້າ |
| --- | --- | --- |
| ບໍ່ບານສັງມາຫອມ | ● ອຸທິນ ບຸນຍະວົງສ໌ | 12 |
| ພາບຊີວິດ | ● ປາໄນ | 23 |
| ເຫດເກີດ.... | ● ດວງຈຳປາ | 35 |
| ໂລກກົມ | ● ດອກເກດ | 44 |
| ຣາຄາຂອງຄວາມຕາຍ | ● ແລງ ມູພາເງິນ | 55 |
| ຫົວລົມໝາວ | ● ປາໄນ | 64 |
| ລູກເຂີຍ | ● ທິ່ງ ອູບມຸງ | 74 |
| ຣົດເມລ໌ບໍ່ປະຈຳທາງ | ● ດອກເກດ | 96 |
| ທິດຕາສູ້ຕາຍ | ● ປາໄນ | 104 |
| ເຮືອນເຊົ່າສີນ້ຳຈາງ ໆ | ● ແລງ ມູພາເງິນ | 116 |
| ສຳນຶກຂອງຈິໂກະ | ● ແລງ ມູພາເງິນ | 127 |
| ໒.໙.໒.໑ | ● | 137 |

# ບໍ່ບານສັງມາຫອມ ?

ກິ່ນນັ້ນ ຫອມມາແຕ່ໄກ
ຫອມມາກັບລົມ ມາກັບອາກາດ ມາຈາກຟາກ
ຟ້າ
ຫອມມາຈາກກາລເວລາ ທີ່ຜ່ານພົ້ນໄປຕັ້ງດົນ
ແສນດົນ
ນິດ....
ແລະໃນຄວາມນິດສງັດນັ້ນ
ມັນຫອມ ຫອມແລ້ວກໍຫອມ
ຫອມເຂົ້າໄປໃນຈິດ ຫອມເຂົ້າໄປໃນໃຈ
ຫອມທຸກກາລເວລາ
ຊຶ່ນອົກເມື່ອໄດ້ກິ່ນ ຖວິນເມື່ອໄດ້ຟັງ

ຄິດຢາກດົມ ຢາກດອມ ຢາກແນບເນື້ອ

ໂອ້ດອກໄມ້ເອີຍ ດອກໄມ້ ແຫ່ງກາລເວລາ

ດອກໄມ້ແຫ່ງຄວາມສເນຫາ ແຫ່ງຄວາມຊື່ນຊ້ອຍ

ລຽນກັນເປັນພອງ ເປັນແຖວ ເປັນຣະບຽບ

ເຫິງຄວາມຫວ່າງເປົ່າ ຂາວສອາດ ແລະຣະບຣຽບ

ດອກໄມ້ແຫ່ງຄວາມສູງສົ່ງ

ເປັນສິ່ງອະມະຕະຢ່າງດຽວໃນກາລເວລາ

ບານຮັບສາຍຝົນ ສາຍລົມ ແລະ ແສງແດດ

ບານຮ້ອຍອັນ ພັນອັນ ໝື່ນນໍ້

*ດອກໄມ້ ແຫ່ງສວນອັກສອນ*

× × ×

*ຄຶກແລ້ວ....*

*ສວນອັກສອນແຫ່ງແດນລານຊ້າງ*

ໄກອອກໄປໃນກາລເວລາ ໃນຄວາມຫວ່າງເປົ່າ

ໄກອອກໄປໃນວັນແຫ່ງຄວາມຫລັງ

ດົນແສນດົນ ຫ່າງແສນຫ່າງ

ສວນອັກສອນ ແຫ່ງແດນລານຊ້າງ ງົດງາມ ສົດໃສ

ຫອມຫວນ ເບັ່ງບານ ຮ້ອຍສີພັນສີ

ພ້າຮັກ ພ້ານິສມັຍ ພ້າອອນຊອນ

ຊື່ນອົກເມື່ອໄດ້ຍາຍ ຊື່ນໃຈເມື່ອໄດ້ເບິ່ງ

ລຽນກັນຢູ່ເທິງຄວາມຫວ່າງເປົ່າ ຂາວສະອາດ ແລະ ຮາບ

ຮຽບ

ໂອ້...ສວນອັກສອນ ແຫ່ງແດນລານຊ້າງ

ເທິງຟ້າ ຮາຕຣີສີດຳປະດັບດ້ວຍດວງດາວ

ສົ່ງແສງ ເບັ້ນ ຍິບຍັບ ສຸກໃສຢູ່ໄກແສນໄກ

ເໝືອນດັ່ງພາບດອກໄມ້ຖືກແຕ້ມລົງໃນພົມສີດຳສນິດ

ງາມດາວເດັ່ນຟ້າ ງາມເດືອນໃນເວຫາ

ງາມດອກໄມ້ ແຫ່ງກາລເວລາ

*ງາມບຸບຜາແຫ່ງສວນອັກສອນ*

× × ×

*ແຕ່....*

*ແສງນາບແມບໄດ້ປາກົດຂື້ນໃນທ້ອງຟ້າ*

ສະແດງເຖິງຄວາມ ພິນາດ ຄວາມໂກທາ ບ້າບິ່ນ

ດວງດາວຖືກລຶບຫາຍໄປ

ບໍ່ມີແສງຍິບຍັບ ບໍ່ມີດອກໄມ້ປະດັບຮາຕຣີ

ໄຟ!.... ໄຟ!...ໄຟ!....

ໄຟ ໃໝ້ ອານາຈັກລານຊ້າງ!

ໄໝ້ໄປທົ່ວຟ້າ ທົ່ວພະສຸທາ ໄໝ້ໝົດທຸກຢ່າງ

ໄໝ້ສວນອັກສອນ ໄໝ້ບຸບຜາມາລີ

ທຸກຢ່າງພິນາດ!

ເຫລືອໄວ້ແຕ່ເຖົ່າຖ່ານ ຄວາມຫວ່າງເປົ່າ ຄວາມໂສກາ

ອະນິຈາ...

ນ້ຳຕາ

ສຽງສະອື້ນ

*ສຽງຮ່ຳຮ້ອງ ເຣໄຣ*

× × ×

*ມິດ....*

*ເວລາໄດ້ຜ່ານໄປດົນແສນດົນ*

ດວງດາວປາກົດຕົວໃນທ້ອງຟ້າອີກເທື່ອໃໝ່

ສົ່ງແສງສຸກໃສທີ່ຂອບຟ້າ

ດອກໄມ້ໃນສວນອັກສອນ ປາກົດຂຶ້ນມາໃໝ່

ມັນສົດຊື່ນ ງອກງາມ ກຳລັງເບັ່ນຈູມເບັ່ນຈີ

ກ້ອງຟ້າສີຄາມ ກາງສາຍລົມແລະແສງແດດ

ມັນສົດຊື່ນ ຫອມຫວນ ຫອມແລ້ວກໍ່ຫອມ

"ຫອມກິ່ນຫຍັງນໍ?" ສຽງນຶ່ງຖາມມາ

"ຫອມດອກອັກສອນ" ຂ້າພະເຈົ້າຕອບ

*ດອກອັກສອນແຫ່ງແດນລານຊ້າງ ປາກົດຂຶ້ນໃຫ້ເຫັນໃຫມ່ອີກແລ້ວ*

ເພື່ອນລາວທັງຫລາຍ ທີ່ມີອິນຍານ ຮັກຫອມ ພາສາຂອງຊາດ ຈຶ່ງໄດ້ຊ່ອຍກັນທະນຸບຳຣຸງໃຫ້ງອກງາມ ເຊັ່ນຊ່ອຍກັນທົດນ້ຳໃສ່ຝຸ່ນ

ໃຫ້ດອກໄມ້ດອກນີ້ເບ່ງບານ ຫອມຫອນ

ເປັ່ນເຄື່ອງປະດັບ ວັທນະທັມ ເອ້ບ້ານເອ້ເມືອງ

ເປັ່ນຈູມຈິກຫອມ ບານກໍຍິ່ງຫອມ

ເປັນດອກໄມ້ ອະມະຕະ

"ມາຊ່ອຍກັນເຮັດສວນອັກສອນນ້ອຍໆນີ້ເທາະ" ດວງຈຳປາຊວນ

"ເອົາ ແຕ່ເຮັດຢ່າງໃດລະ?" ຂ້າພະເຈົ້າຖາມ

"ບໍ່ຍາກ ເອົາເຣືອງສັ້ນມາຈັກເຣືອງນຶ່ງ"

"ບໍ່ພໍ ຕ້ອງສອງເຣືອງຂຶ້ນໄປ" ປາໄມສເນີແນະ

"ຕົກລົງ ແຕ່ຂໍເວລາຈັກໜ້ອຍ" ຂ້າພະເຈົ້າວ່າ

ແລ້ວໃນຕົ້ນເດືອນຕຸລານີ້ ພວກເຮົາກໍຮີບໂຮມ ເຣືອງສັ້ນມາຈົນພຽງພໍສຳລັບພິມເປັ່ນເຫລັ້ມ ເພື່ອປະດັບສວນອັກສອນນ້ອຍ ໆ

ສຳລັບຄວາມບັນເທີງ ສາຣະ ແຕ່ຜູ້ອ່ານ.

ພວກເຮົາປຶກສາກັນວ່າ ຈະໂຮມໃຈກັນສ້າງສວນອັກສອນຕໍ່ໄປເລື້ອຍໆ ເພື່ອໃຫ້ມັນເບັ່ງບານເປັນສິ່ງເຊີດໜ້າຊູຕາແກ່ບ້ານເມືອງ.

*ແລະຂະນະທີ່ຍັງບໍ່ບານ ກໍຈະໃຫ້ມັນຫອມ*
*ຫອມຈູມຈິ ແຫ່ງດອກອັກສອນ*
*ແລ້ວ "ບໍ່ບານກໍຫອມ" ກໍເປັນເຫລັ້ມອອກມາ ດັ່ງທີ່ປາກົດຕໍ່ໜ້າທ່ານຜູ້ອ່ານຢູ່ໃນຂະນະນີ້*



ຄຸ້ມຂຸມຕາ ວຽງຈັນ

ຕຸລາ ໒໕໑໕

(1972

ໂຮມຄຳກອນ

ຊຸດ

# ກະວີຊາວບ້ານ

ຂອງ

# ປາໃບ

*ຍັງມີຂາຍບໍ່ຂາດ  ນຳຮ້ານຂາຍປຶ້ມທົ່ວໄປ*

ແລະສັ່ງຊື້ໂດຍກົງຈາກສຳນັກພິມ *"ໄຜ່ຫນາມ"* ກໍໄດ້

ຕິດຕໍ່ທາງຈົດໝາຍສົ່ງ

*ຕູ້ ປ.ນ.* 230 *ວຽງຈັນ*

ທ່ານເຄີຍອ່ານຫລືຍັງ ?

# "ໄຜ່ໜາມ"

ນິຕຍະສານ ຣາຍເດືອນ

■ ບົດຄວາມ ສາຣະຄະດີ ເບັ້ນຕາອ່ານ ມ່ວນ ມັນ ທັນໂລກ

■ ນິຍາຍເຣື່ອງສັ້ນຂອງຄນະ ປາໄນ–ດວງຈຳປາ ແລະ ມັນຂຽນອື່ນ ໆ ອີກ

■ ຝຶກຝົນພາສາລາວຂອງທ່ານ ດ້ວຍການອ່ານ "ໄຜ່ໜາມ"

■ ຈອກຊື້ ຈອກຫາ "ໄຜ່ໜາມ" ມາໄວ້ອ່ານຫລິ້ນສາແຕ່ບັດນີ້... ທ່ານຈະບໍ່ຜິດຫວັງ

# ເຊີນສົ່ງເຣື່ອງສັ້ນເຂົ້າຊີງຣາງວັນ "ຫຣຽນຄຳ" ຂອງ ໄຜ່ໜາມ

*ກະຕິກາມີງ່າຍ ໆ :*

1– ນາມປາກກາລະເຣື່ອງ ແຈ້ງຊື່ແທ້ມາພ້ອມເພື່ອເປັນຫລັກຖານ

2– ຍາວບໍ່ຕ່ຳກວ່າ 3 ໜ້າ ຫລືບໍ່ເກີນ 6 ໜ້າຕີຈັກ (ຂນາດ 21×33 ຊມ.)

3– ສົ່ງຮອດກ່ອນວັນທີ່ 1 ກຸມພາ 2515

4– ເປັນເຣື່ອງແຕ່ງຂຶ້ນເອງ ບໍ່ໃສ່ຮ້າຍປ້າຍສີ ຫລືອ້າງເຖິງບຸກຄົນທີ່ມີຕົວຕົນ ບໍ່ຕໍ່ຕ້ານຫລືສນັບສນູນລັດທິການເມືອງໃດ ໆ

5– ຂຽນສະກົດຕາມສຽງ ແລະຕາມທີ່ເຫັນສົມຄວນ

6– ຕ້ອງເປັນເຣື່ອງທີ່ຍັງບໍ່ເຄີຍລົງພິມຢູ່ໃສມາກ່ອນ

*ທົດລອງສີມືການຂຽນຂອງທ່ານຫລິ້ນ ໆ*

*ທ່ານອາຈໄດ້ເປັນເຈົ້າຂອງຫຣຽນຄຳ*

*ໜັກນຶ່ງບາດ ຈາກ "ໄຜ່ໜາມ"*

- ຄວາມຕາຍ ເປັ່ນພຽງແຕ່ການເດີນທາງໄປສູ່ໂລກແຫ່ງຄວາມສງົບ–ເປັ່ນອິສຣະຈາກທຸກ.... ແຕ່ການເຮັດໃຫ້ໃຜອື່ນຫລືຕົນເອງເຖິງແກ່ຄວາມຕາຍ ກໍຍັງຖືເປັ່ນໂທດຜິດແລະບາບ ສະນັ້ນສຸຈຣິດຊົນທັງຫລາຍ ຈຶ່ງບໍ່ລ້າງຜານພາລຊົນ

- ຈາກວິວັທນາການທາງວັດຖຸ ເຮົາເຫັນຄວາມສີວິໄລຊຶງແຫຍ້ຜາບແພ້ຄວາມປ່າເຖື່ອນ ໃນທຸກສະຖານ.... ສ່ວນໃນດ້ານສັງຄົມວັທນະທັມ ເຮົາຈະເຫັນຄວາມປ່າເຖື່ອນ ຊຶງແຫຍ້ເຂົ້າມາແທນບ່ອນຄວາມຈະເຣີນເມືອງສີວິໄລ ຈຶ່ງກາຍເປັ່ນເຖື່ອນແຫ່ງຄວາມຊົ່ວຊ້າທັງປວງ....

# ໑໑

# ພາບຊີວິດ

ໂດຍ ປາໄບ

ລົມຮ້ອນແຮງຂອງດວງອາທິດ ສາດລົງທົ່ວທ້ອງທົ່ງອັນເຫລືອງງາມແຫ່ງນັ້ນ ປານກັບວ່າຈຸເຜົາຜານໃຫ້ລຸກໄຫມ້ຂຶ້ນເປັ່ນໄຟ.... ແປວແດດເຕັ້ນໄຕ່ຢູ່ເທິງຄໍກ່ອງຂອງຮວງເຂົ້າຢ່າງບໍ່ເປັ່ນຈັງຫວະ.... ໃບວີທີ່ແຍ່ພົ້ນຂຶ້ນມາປະທະກັບສາຍລົມອ່ອນ ໆ ສັ່ນສະທ້ານຢູ່ຈັ່ງຊັ້ນຕລອດເວລາ....



ໃນກາງທົ່ງອັນກວ້າງໃຫຍ່ ມີຊີວິດມະນຸດຜູ້ອົດທົນພາກພຽນ ແລະເຂັ້ມແຂງ ກົ້ມໂຕລົງເກັບກ່ຽວຜົນງານຂອງເຂົາເຈົ້າ ຢູ່ເປັນຍ່ານ ໆ ເບິ່ງແຕ່ໄກ ເຮົາສາມາດແນມເຫັນພາບອັນອົບອຸ່ນ ແລະຊວນຜັ່ນມັນໄດ້ດ້ວຍຫົວໃຈຊື່ນຊົມຍິນດີ.... ເຮົາເຫັນຊາວນາກ່ຽວເຂົ້ານຳກັນ–ພ້ອມກັນ ແລະພ້ອມໃຈກັນ ດ້ວຍຄວາມອົດທົນອັນຍາວນານ ເຂົາເຈົ້າກ່ຽວໄປດ້ວຍຄວາມເມື່ອຍລ້າແລະລຳບາກຍິ່ງ ກາງແສງແດດອັນແຮງກ້ານັ້ນ ໃບໜ້າຂອງເຂົາເຈົ້າ ດົງເຕັມໄປດ້ວຍເຫື່ອໃຄເມັດໃຫຍ່ ໆ ລາງເທື່ອມັນດົງໄຫລເຂົ້າຕາຈົນແສບ.

ເບິ່ງພຸ້ນແມ້! ຊາວນາຜູ້ນຶ່ງເງີຍໜ້າຂຶ້ນ ເອົາແອນທີ່ມີກ່ຽວຢູ່ໃນກຳມື ປ້າຍເຊັດເຫື່ອອອກຈາກໜ້າຜາກ ລາວນຸ່ງເສື້ອສີດຳໝົ່ນມົນ ແລະທາງດ້ານຫລັງ ມັນຖືກແດດເຜົາຈົນເປັນສີໝອກແລ້ວ ເສື້ອລາວດີຊີປຽກສຸ່ມຍ້ອນເຫື່ອຜິວກາຍລາວ ດີຊີມີແຕ່ຊ່າເກືອແຫ້ງ ໆ ຕິດຢູ່... ລາວບັນຈົງອາງຮອງເຂົ້າໃນກຳມືລົງເປັນຜ່ອນ ໆ ດ່ອງເດີຍແລະຣະມັດຣະວັງ ເພື່ອບໍ່ໃຫ້ເມັດເຂົ້າຫລົ່ນຖິ້ມ ແລ້ວກໍກົ້ມລົງເກັບກ່ຽວຕໍ່ໄປ....

ມັນເປັນພາບອັນດູດດື່ມຊຶມຊາບ ເຖິງດວງຈິດໃຈຂອງຜູ້ເບິ່ງ ເຊັ່ນຂ້າພະເຈົ້າຜູ້ຊຶ່ງເບິ່ງແລ້ວ ເກັບເອົາມາຄິດ.

ເຂົາເຈົ້າກຳລັງເອົາຫລັງສູ້ຟ້າ ໜ້າສູ້ດິນ ອາບເຫື່ອຕາງນ້ຳ

ໃນກາງທົ່ງກວ້າງ ອັນເຫລືອງງາມຈັບຈິດຈັບໃຈ ມັນເປັ່ນພາບຊຶ່ງສະແດງເຖິງຄວາມຍາກລຳບາກ ເປັ້ນພາບທີ່ດອນທີ່ໄດ້ຮັບຮາງວັນອັນຍິ່ງໃຫຍ່ ແຕ່ມັນກໍ່ຖືກລືມໄລຍ່າງໜ້າເສົ້າໃຈ ໃນກາງເມືອງຫລວງອັນມີແຕ່ແສງສີ ຜູ່ບໍຣິໂພກຜົນອຽກຈາກນ້າເຫື່ອຂອງຊາວນາມັ້ນ ລາງຄົນກໍນັ່ງຕາກພັດລົມ ລາງຄົນກໍ່ນັ່ງອາບຄວາມເຢັ້ນ ຢູ່ໃນຫ້ອງປັ້ບອາກາດອັນທັນສມັຍ ມັນຊ່າງຜິດກັນປານຟ້າກັບດິນ ອີຫຍັງຈັ່ງຊີ້ ໃນເມື່ອສະຖານທີ່ຢູ່ບໍ່ໄດ້ຫ່າງໄກກັນເລີຍ.

ເຂົາເຈົ້າກໍ່ຮຽວມັນຢ່າງຖນຸຖນອມຮັກແພງ ແລະເສັຽດາຍເຂົ້າທຸກເມັດທີ່ຕົກຫລົ່ນ ເສັຽດາຍມັນສົມກັບທີ່ປູກມັນຂຶ້ນດ້ວຍຄວາມຍາກລຳບາກ ເຖິງແມ່ນວ່າຄົນພວກນີ້ຈະບໍ່ຮູ້ຈັກດາວທຽມ ຈະບໍ່ຮູ້ຈັກມະນຸດອະວະກາດ ເຖິງແມ່ນລູກສາວຂອງເຂົາເຈົ້າ ຈະບໍ່ຮູ້ຈັກກິ່ນນ້າຫອມແລະເຄື່ອງສຳອາງ ເພື່ອເສີມສວຍຄວາມງາມອັນຈອມປອມຂອງໂລກກໍຕາມ *ແຕ່ເມື່ອເຂົາເຈົ້າອິ່ມທ້ອງແລ້ວທຸກຄາບ ກ່ອນຈິລຸກໄປກິນນ້າລ່ອງຄໍ ເຂົາເຈົ້າກໍຍັງຮູ້ຈັກພະນົມມືເພື່ອສະແດງຄວາມຮູ້ສຶກ ເຖິງບຸນຄຸນຂອງເຂົາ ທີ່ລ້ຽງເຂົາເຈົ້າມາແຕ່ນ້ອຍຈົນໃຫຍ່ ແຕ່ໜຸ່ມຈົນເຖົ້າແຕ່ເກີດຈົນຕາຍ*

ແສງຮ້ອນແຮງຂອງດວງອາທິດ ສາດລົງທົ່ວທ້ອງທົ່ງ ອັນເຫລືອງງາມແຫ່ງນັ້ນ... ສາວນ້ອຍໃນຊຸດສີດຳເກົ່າ ໆ ເປື້ອນ ໆ ເງີກໜ້າຂຶ້ນຈາກໜ້ານາ ໃບໜ້າສຸ່ມນ້ຳເຫື່ອບັງຢູ່ໃນກຸບ ທີ່ສຸບໃສ່ກັນແດດ ນາງຍ່າງຜ່າຕໍເຝືອງຄາບ ໆ ໄປຫາຄູຄັນນາ ເຊິ່ງມີກ້ານຕານສອງສາມກ້ານສັກສຽບເປັ່ນຊຸ້ມທົ່ມເຊົາ ພໍຍ່ອນກົ້ນລົງນັ່ງກ້ອງທົ່ມໃບຕານ ນາງກໍພ່າວຍົກຕີນເປື່ອຍເປົ່າຂຶ້ນພິຈາຣະນາ ມັນຄົງຈະແຕກເທີບແລ້ວກໍ່ມາຖືກຕໍ່ເຝືອງຕຳເອົາອີກ

ຂ້າພະເຈົ້າຄຶດໃນໃຈຈັ່ງຊັ້ນ ແຕ່ການຄຶດວ່າ ຕີນຂອງສາວນ້ອຍຜູ້ນັ້ນແຕກເທີບ ຂ້າພະເຈົ້າບໍ່ໄດ້ຄຶດໃນທາງດູໝິ່ນນິນທາ ບໍ່ແມ່ນຄືພວກຄົນໃນເມືອງ ຊຶ່ງຫລຽວເບິ່ງຕີນຜູ້ສາວບ້ານນອກຊຶ່ງມາຍ່າງເລາະຊົມບຸນທາດຫລວງ ແລ້ວອ່າຍຫົວໄປຄິກ ໆ ນຳໝູ່ ແຕ່ກົງກັນຂ້າມຂ້າພະເຈົ້າອາດພາບດ້ວຍຄວາມເຫັນອົກເຫັນໃຈເປັ່ນທີ່ສຸດ ຄຶດວ່າສາວນາງຄົງໄດ້ຮັບຄວາມເຈັບປວດຈາກການນັ້ນ ໆ ເຫັນໃຈທີ່ນາງຄົງບໍ່ມີໂອກາດໄປນັ່ງຊະເມ໊ຍເຈ໊ຍຢູ່ໃນຮ້ານເສີມສວຍ ໃຫ້ຊ່າງຜູ້ນຸ່ງແຕ່ສົ້ງນ້ອຍ ໆ ກັບເສື້ອໂລ່ມບາງ ໆ ຍົກຊາມນ້ຳອຸ່ນມາແຊ່ລ້າງໃຫ້ ແລ້ວ ັນຈົງຕັດໜັງຮ້າຍອອກ ເອົາຕີນນັ້ນມາວາງເທິງຕັກຢ່າງລົ້ງເດີຍ ປາສ-
າກຮູດຂີ້ດຽດ ຂ້າພະເຈົ້າຄຶດໃນທຳນອງນີ້ ແລະນາງກໍຄົງບໍ່

ຮູ້ຊ້າດອກວ່າ ອັນເລັບຕີນເລັບມືແດງ ໆ ສ້ອຍແຫລມ ພົມຈິງກອງຂີ້ຄວາຍນັ້ນ ເຂົາເຮັດຈັ່ງໃດກັນ ເສັຽເງິນນຳມັນມື້ລະທໍ່ໃດ ໆ ນາງອາດຈະເຄີຍເຂົ້າໃນເມືອງຢູ່ແດ່ ອາດຊິເຄີຍເຫັນພວກຍິງສາວດາວສມັຍໃນຊຸດເສື້ອຜ້າອາພອນອັນຈົບງາມ ຕັດຫຍິບດ້ອຍຊ່າງຝີມືດີ (ແພງປານແກ້ວ) ນາງອາດຊິເຄີຍຫລຽວແນມນຳພວກນີ້ ດ້ວຍສາຍຕາອິດສາແລະອອນຊອນ ນາງອາດຊິຢາກເຮັດຄືກັນ ແຕ່ນາງຜູ້ເປັນສາວຊາວນາຄົງບໍ່ມີໂອກາດອັນຟູມເຟືອຍນີ້

— ຫັ້ນລະ ! ສົມນ້ຳໜ້າ ! ບອກໃຫ້ໃສ່ເກີບສຸບ ມັນບໍ່ຢາກໃສ່ ຈັກມັນມົວອາຍໃຜ ! ສຽງຊາວນາຜູ້ຍິງເຖົ້າ ໆ ຮ້ອງໃສ່

ສຽງນັ້ນລອຍມາກັບສາຍລົມ ພໍ່ງໄດ້ຍິນແຕ່ພຽງຄ່ອຍ ໆ ແລ້ວຜູ້ເຈົ້າຂອງສຽງ ກໍກົ້ມໜ້າກ່ຽວຕໍ່ໄປ

— ຢ່າຄິດຊິຕາຍຫລາຍທ້ອນ ມັນຢູ່ໄກຫົວໃຈດອກ !

ຊາຍຊາວນາຜູ້ເຖົ້າສອດສຽງຫົວ ໆ ຂຶ້ນມາອີກ ສາວຊາວນາຜູ້ທີ່ໂຕດ້ອຍອາພອນສີດຳເກົ່າຖຸມຕີນລົງ

ແລ້ວຄວາເອົາບັ້ງທິງ ທີ່ພິງຢູ່ກັບຊຸ້ມໃບຕານຂຶ້ນມາຈໍ່ປາກ ເງິກົ້ນມັນຂຶ້ນເພື່ອໃຫ້ນ້ຳທີ່ບັນຈຸຢູ່ໃນນັ້ນ ໄຫລລົງ... ອັນເຫືອດແຫ້ງ ນາງດື່ມມັນດ້ວຍຄວາມແຊບນົວ ເ...

ແສງຮ້ອນແຮງຂອງດວງອາທິດ ສາດລົງທົ່ວທ້ອງທົ່ງ ອັນເຫລືອງງາມແຫ່ງນັ້ນ... ສາວນ້ອຍໃນຊຸດສີດຳເກົ່າ ໆ ເປື້ອນ ໆ ເງີກໜ້າຂຶ້ນຈາກໜ້ານາ ໃບໜ້າສຸ່ມນ້າເຫື່ອບັງຢູ່ໃນກຸບ ທີ່ສຸບໃສ່ກັນແດດ ນາງຍ່າງຜ່າຕໍ່ເຟືອງຄາບ ໆ ໄປຫາຄູຄັນນາ ເຊິ່ງມີກ້ານຕານສອງສາມກ້ານສັກສຽບເປັນຊຸ້ມທົ່ມເຊົາ ພໍ່ຍ່ອມກົ້ມລົງນັ່ງກ້ອງທົ່ມໃບຕານ ນາງກໍ່ພ້າວຍົກຕີນເປືອຍເປົ່າຂຶ້ນພິຈາຣະນາ ມັນຄົງຈະແຕກເທີບແລ້ວກໍ່ມາຖືກຕໍ່ເຟືອງຕຳເອົາອີກ

ຂ້າພະເຈົ້າຄິດໃນໃຈຈັ່ງຊັ້ນ ແຕ່ການຄິດວ່າ ຕີນຂອງສາວນ້ອຍຜູ້ນັ້ນແຕກເທີບ ຂ້າພະເຈົ້າບໍ່ໄດ້ຄິດໃນທາງດູໝິ່ນນິນທາ ບໍ່ແມ່ນຄືພວກຄົນໃນເມືອງ ຊຶ່ງຫລຽວເບິ່ງຕີນຜູ້ສາວບ້ານນອກຊຶ່ງມາຍ່າງເລາະຊົມບຸນທາດຫລວງ ແລ້ວອ່າຍຫົວໄປຄຶກ ໆ ນຳໝູ່ ແຕ່ກົງກັນຂ້າມຂ້າພະເຈົ້າອາດພາບດ້ວຍຄວາມເຫັນອົກເຫັນໃຈເປັນທີ່ສຸດ ຄິດວ່າສາວນາງຄົງໄດ້ຮັບຄວາມເຈັບປວດຈາກການນັ້ນ ໆ ເຫັນໃຈທີ່ນາງຄົງບໍ່ມີໂອກາດໄປນັ່ງຊະເນີຍເຈີຍຢູ່ໃນຮ້ານເສີມສວຍ ໃຫ້ຊ່າງຜູ້ນຸ່ງແຕ່ສົ້ງນ້ອຍ ໆ ກັບເສື້ອໂລ່ນບາງ ໆ ຍົກຊາມນ້າອຸ່ນມາແຊ່ລ້າງໃຫ້ ແລ້ວບັນຈົງຕັດໜັງຮ້າຍອອກ ເອົາຕີນນັ້ນມາວາງເທິງຕັກຢ່າງລຶ້ງເຄີຍ ປາສ–ຈາກການລັງກຽດຂີ້ດຽດ ຂ້າພະເຈົ້າຄິດໃນທຳນອງນີ້ ແລະນາງກໍ່ຄົງບໍ່

ຮູ້ຊ້ຳດອກວ່າ ອັນເລັບຕີນເລັບມືແດງ ໆ ສ້ວຍແຫລມ ພົມຊົງກອງຂື້ ຄວາຍນັ້ນ ເຂົາເຮັດຈັ່ງໃດກັນ ເສັຽເງິນນໍາມັນນໍ້ລະທໍ່ໃດ ໆ ນາງ ອາດຈະເຄີຍເຂົ້າໃນເມືອງຢູ່ແດ່ ອາດຊິເຄີຍເຫັນພວກຍິງສາວດາວສມັຍ ໃນຊຸດເສື້ອຜ້າອາພອນອັນຈົບງາມ ຕັດຫຍິບດ້ວຍຊ່າງຝີມືດີ (ແພງປານ ແກ້ວ) ນາງອາດຊິເຄີຍຫລຽວແນມນໍາພວກນີ້ ດ້ວຍສາຍຕາອິດສາ ແລະອອນຊອນ ນາງອາດຊິຢາກເຮັດດີກັນ ແຕ່ນາງຜູ້ເປັ້ນສາວຊາວນາ ດົງບໍ່ມີໂອກາດອັນຟູມເຟືອຍນີ້

— ຫັ້ນລະ ! ລົມນ້ຳພ້າ ! ບອກໃຫ້ໃສ່ເກີບສຸບ ມັນບໍ່ ຢາກໃສ່ ຈັກມັນມົວອາຍໃຜ ! ສຽງຊາວນາຜູ້ຍິງເຖົ້າ ໆ ຮ້ອງໃສ່

ສຽງນັ້ນລອຍມາກັບສາຍລົມ ພໍ່ງໄດ້ຍິນແຕ່ພຽງຄ່ອຍ ໆ ແລ້ວຜູ້ເຈົ້າຂອງສຽງ ກໍກົ້ມໜ້າກ່ຽວຕໍ່ໄປ

— ຢ່າດີຊິຕາຍຫລາຍທ້ອນ ມັນຢູ່ໄກຫົວໃຈດອກ !

ຊາຍຊາວນາຜູ້ເຖົ້າສອດສຽງຫ້າວ ໆ ຂຶ້ນມາອີກ ສາວຊາວ ນາຜູ້ທີ່ໂຕດ້ວຍອາພອນສີດໍາເກົ່າຖຸມຕີນລົງ

ແລ້ວຄວາເອົາບັ້ງທີງ ທີ່ພິງຢູ່ກັບຊຸມໃບຕານຂຶ້ນມາຈໍ່ໃສ່ ປາກ ເງີງກົ້ນມັນຂຶ້ນເພື່ອໃຫ້ນ້ຳທີ່ບັນຈຸຢູ່ໃນນັ້ນ ໄຫລລົນລົງອາບຮູດໍ ອັນເຫືອດແຫ້ງ ນາງດື່ມມັນດ້ວຍຄວາມແຊບນົວ ເບິ່ງປານວ່າອິດຫິວ

ມາແລ້ວຫລາຍມື້ ມັນຄົງມີຣົດຊາດດີກວ່ານ້ຳໝາກໄມ້ກະປ໋ອງ ທີ່ນອກ ຜູ້ດີມີເງິນດື່ມກິນກັນ ເພື່ອບຳຣຸງສຸຂພາບ ແລະສ່ວນສັດໃຫ້ໄດ້ສັດສ່ວນ ຊາວນາຈັ່ງສາວນ້ອຍຜູ້ນີ້ ແມ່ນວ່ານາງຈັກມີໂອກາດເຂົ້ານັ່ງໃນຮ້ານມາ ແດ່ໃນຊີວິດ ຮູ້ຈັກສັ່ງແຕ່ພຽງເຝີກັບໂອລຽງ ກໍຄົງຄຶດວ່າວິເສດແລ້ວ

ແສງອັນຮ້ອນແຮງຂອງດວງອາທິດ ສາດລົງທົ່ວທ້ອງທົ່ງ ອັນເຫລືອງງາມແຫ່ງນັ້ນ... ໄກອອກໄປພຸ້ນເກືອບສຸດສາຍຕາ ເດັກນ້ອຍອາຍຸວ່າງແປດ–ເກົ້າປີ ນັ່ງຄາບຢູ່ເທິງຫລັງຄວາຍເຖິກດຳໝຳເຕັມຄໍ ບັກດຳລ້າສັນແຂ້ງແຮງໂຕນັ້ນເງີກໜ້າຂຶ້ນ ເຂົາແຫລມໂຄ້ງຂອງມັນຫລຽດເຂົ້າຫາໝຳທີ່ຕັ້ງໂຈ້ໂກ້ຢູ່ສັນຄໍເມື່ອຖືກພັດໃຫ້ຍ່າງ ມັນກ້າວຍ່າງເຊື່ອງຊ້າຕາມຄວາມປະສົງຂອງເດັກນ້ອຍ ພໍຮອດຮ່ອງເໝືອງອັນຄົດລ້ຽວ ທີ່ມີນ້ຳເຫລືອຢູ່ພຽງເຄິ່ງແຂ່ງ ເດັກນ້ອຍຜູ້ເຂັ້ມແຂງທົນທານຕໍ່ດິນຟ້າອາກາດ ແລະທົນຊາດບ້ານບ່າຂາດດອນ ກໍບ່ອຍເຊືອກໃຫ້ຍາມບັກໝຳໃຫຍ່ກົ້ມລົງດູດກິນນ້ຳຮ່ອງເໝືອງກາງທົ່ງທີ່ລອຍໂຕຢູ່ເທິງໜ້າຂີ້ຕົມໃນຮ່ອງນັ້ນ ມັນກ້າວລົງໄປຕື່ມອີກສອງສາມກ້າວ ເດັກນ້ອຍດຶງເຊືອກໃຫ້ຕ່າວແຕ່ມັນບໍ່ຍອມຟັ່ງ ກັບຄູ້ຂາໜ້າລົງ ເດັກນ້ອຍຈຶ່ງຕ້ອງໂຕນອອກ ກໍພໍດີກັບທີ່ມັນຖົ້ມໂຕລົງແຊ່ຕົມໃນນ້ຳ ແມ່ນລ່ະ ມັນລົງນອນແຊ່ຕົມໃນນ້ຳເພື່ອຄວາມຊຸ່ມເຢັ່ນ ເພາະມັນທົນຕໍ່ແສງແດດອັນຮ້ອນແຮງນັ້ນບໍ່ໄດ້

ມັນທົນກົ້ມກັດກິນເຟືອງໃໝ່ ໆ ມາແຕ່ເຊົ້າ ຈົນແດດແກ່ກ້າ ໜັງສີດຳ ຖືກແດດເຜົາຈົນເຫລື້ອມ ມັນກໍ້ງເກືອກເອົາຄວາມຊຸ່ມເຢັນຢ່າງສຳຣານ ບານໃຈ ເດັກນ້ອຍຊ່ອຍຫວິດນ້ຳສາດໃສ່ຫລັງແລະຫົວ ມັນຫລັບຕາ ຢ່າງມີຄວາມສຸກສຸດແສນ ແລະພໍມັນເກືອກກໍ້ງຢູ່ຈົນສົມໃຈແລ້ວ ທ້າວ ນ້ອຍກໍດຶງໃຫ້ລຸກຂຶ້ນ ຈູງຍ່າງມາທາງຕີນດົງທີ່ມີຖຽງ ແລະຮົ່ມໄມ້ໃບ ດົກໜົກແກ່ນພີ້

– ເອີ້ ເອົາມັນໄປຜູກໄວ້ຮົ່ມຂາມພຸ້ນເດີ !

ສຽງຊາຍຊາວມາຜູ່ເຖົ້າຮ້ອງບອກ ເມື່ອທ້າວນ້ອຍຈູງຄວາຍ ບັກໝຳໃຫຍ່ກາຍມາໃກ້ ໆ ທ້າວນ້ອຍບໍ່ຕອບ ແຕ່ກໍຈູງບັກໝຳໃຫຍ່ໄປ ຜູກໄວ້ກ້ອງຮົ່ມຂາມພ່ອຍດົກຈົນງ່າກ່ອງ ຫັນຂ້າງສູ້ແດດຢູ່ຕີນບ່ຳ ຕາມ ຄຳບອກຂອງຊາຍຊາວມາຜູ່ເຖົ້ານັ້ນ

ແສງອັນຮ້ອນແຮງຂອງດວງອາທິດ ສາດລົງທົ່ວທ້ອງທົ່ງ ອັນເຫລືອງງາມນັ້ນ.... ເງົາຫົວຂອງຄົນຢືນຕາກແດດທ່ຽງໂຕພໍດີ ເວລາ ມັນເລີຍເພນໄປດົນແລ້ວ ແສງຂອງມັນຍິ່ງທະວີຄວາມຮ້ອນຂຶ້ນອີກ ຊາວນາຍ່າງເຍີບ ໆ ຂຶ້ນມາເບັ່ນໝູ່ ໆ ເບັດໝ້າໃສ່ຖຽງຂອງໃຜລາວ ເມື່ອຍ່າງມາ ພໍໄດ້ຍິນຄວາມເວົ້າ ກໍມີສຽງຮ້ອງຖາມກັນ ຢອກລໍ້ກັນ ຢ່າງສນຸກສນານ ເບັ່ນກັນເອງ

— ໂອ້ຍ ໄດ້ຫຍັງກິນກັບເຂົ້າບໍ ?

ສຽງຮ້ອງຖາມລອຍມາໃນອາກາດ ແລ້ວກໍມີສຽງຕອບລອຍໂຕ້ໄປອີກ

— ເຮີຍ ! ດີຈີແມ່ນລາບປາຂຽງດົນສາຕິບໍ ! ມີສຽງຫົວເຕີເຕີ່ນປົນໄປນຳຄຳຕອບນັ້ນ

— ເອີ ອັນນີ້ຄືຈີແມ່ນກ້ອຍໝາກຮຸ່ງຕາມເຄີຍນັ້ນລະ !

ສຽງນິ່ງຕອບຈັ່ງຊີ້ ແລ້ວຕ່າງຄົນຕ່າງມຸ່ງໜ້າເມືອຖຽງ ເບິ່ງຊາວນາພາກັນສົດຊື່ນຍິ້ມ ເມື່ອໄດ້ພັກເຊົາໃນຮົ່ມໄມ້ຊາຍຄາຖຽງແລ້ວລົມອ່ອນ ໆ ພັດມາ ປານຄົນຂີ້ຄ້ານບິດຄີງ ແຕ່ມັນກໍຍັງເຢັນສະບາຍດີຈົນມີສຽງຈົ່ມດັງ ໆ ປານຈີຕັ້ງໃຈໃຫ້ມີຄົນໄດ້ຍິນວ່າ

— ໂອ້ຍ ແມ່ນອ້າຍບ່າວບ້ານໃດ ຕາຍເບີ້ນລົມບໍ ກະສັງມາເຢັ້ນດີແທ້ ! !

ຫລັງຈາກນັ້ນ ກໍມີສຽງສາກຕຳຄົກ ສຽງມີດພັກຂຽງດັງປົກ ໆ ບ໊ອກ ໆ ມາຈາກຖຽງໃຕ້ແດ່ຖຽງເໜືອແດ່ ຊາຍຊາວນາຜູ້ເຖົ້າຍັງບໍ່ທັນຂຶ້ນເທິງຖຽງ ລາວຍ່າງເລີຍເຂົ້າໄປໃນປ່າເທິງເຕີບ ຈຶ່ງກັບອອກມາ ໃນກຳມືມີໃບໄມ້ຫລາຍຢ່າງທີ່ກິນໄດ້ ໃນກຳມືມີຜັກສຳຫລັບກິນເປັນອາຫານ...

ມັນງ່າຍແລະໄວດີ ແນ່ນອນລະຊີວິດຊາວນາ ເປັນຊີວິດທີ່

ງ່າຍ ໆ ຢູ່ກໍງ່າຍ–ກິນກໍງ່າຍ ເຖິງຈະເມື່ອຍຍາກລຳບາກ ຊາວນາກໍຍັງເປັນຊາວນາຕລອດມາ ຍັງຄົງເປັນກະດູກສັນຫລັງຂອງຊາດຕລອດມາ ປີແລ້ວປີອີກຈົນຮອດເຊັ່ນ.... ຮອດຫລາຍ ໆ ເຊັ່ນຄົນ ແລະມັນກໍໃຫ້ຜົນຕອບແທນທີ່ເຊື່ອໄດ້ວ່າ ເປັນສິ່ງທີ່ດີທີ່ຄວນແກ່ການຍົກຍ້ອງສັຣເສີນ ແລະກໍບໍ່ແມ່ນຊິມາດູຖູກຫຸ່ມຮໍກັນໄດ້....

ສາວຊາວນາ ຜູ້ບໍ່ຮູ້ຈັກກິນນ້ຳອົບນ້ຳຫອມນີ້ລະ ທີ່ມືຂອງນາງກຳດ້າມກ່ຽວ ໆ ເຂົ້າ ໃຫ້ເຮົາໄດ້ຫຸງຕົ້ມເຮັດເຂົ້າພົມກິນ ນາງສົມແລ້ວທີ່ຊິຖືກເອີ້ນວ່າ *"ໂພສົບເທວີ"*

*"ໂອ້ພຣະນາງໂພສົບເທວີທີ່ຮັກ"* ຂ້າພະເຈົ້າຮ່ຳເພິງໃນໃຈດັ່ງນັ້ນ "ເຖິງແມ່ນວ່າເຮົາຈະເຫັນພາບອະຣິຍະບົດຂອງເຈົ້າແຕ່ໄກກໍຕາມ ເຖິງແມ່ນວ່າໃບໜ້າທີ່ລີ້ຢູ່ໃນກຸບນັ້ນຈະງາມຫລືບໍ່ກໍຕາມແຕ່ເຮົາກໍຮູ້ດີວ່າ ນ້ຳໃຈຂອງນາງນັ້ນປະເສີດແລ້ວ ແລະນ້ຳມືຂອງນາງກໍແສນປະເສີດ ຈົນສຸດທີ່ຈະຫາເອົາຄຳເວົ້າພາສາໃດ ໆ ມາກ່າວອ້າງປຽບປຸນໄດ້ ຖ້າຫາກແມ່ນວ່ານື້ໃດເຮົາຄິດຢາກມີຄອບຄົວ ຖ້າແມ່ນວ່ານື້ໃດເຮົາຢາກມອບຫົວໃຈອັນເພື່ອແຜ່ຂອງເຮົານີ້ ໃຫ້ເປັນຂອງຂວັນແຫ່ງຄວາມຮັກແກ່ອິດຖີເພດແລ້ວ ເຮົາຈະດັ້ນດອນຊອນບ່າມາຫາເຈົ້າອີກ *ເຮົາຈະບໍ່ລັງເລໃຈທີ່ຈະປະກາດວ່າ ເຮົາຮັກເຈົ້າ ຮັກ*

*ນ້ຳມີ ນ້ຳເຫື່ອ ນ້ຳແຮງ ນ້ຳໃຈ* ແມ່ນລະ ສາວຊາວນາຜູ່ດອນຊິໄດ້ຮັບສົມອ້າງວ່າ ເປັນໂພສົບເທວີ ເອີຍ! ເຮົາຫລົງຮັກເຈົ້າ *ຮັກດ້ວຍຈິວິດແລະວິນຍານ ເຮົາຮັກດ້ວຍຮັກ"*

ແສງອັນຮ້ອນແຮງຂອງດວງອາທິດ ສາດລົງທົ່ວທ້ອງທົ່ງນາອັນເຫລືອງງາມແຫ່ງນັ້ນ ປານກັບວ່າຊິເຜົາຜານໃຫ້ລຸກໄໝ້ຂຶ້ນເປັນໄຟ... ແປວແດດເຕັ້ນໄຕ່ຢູ່ເທິງດໍກ່ອງຂອງຮວງເຂົ້າ ຍ່າງບໍ່ເປັນຈັ່ງຫວະ ໃບວີທີ່ແຍ່ພົ້ນຂຶ້ນມາປະທະກັບສາຍລົມອ່ອນ ໆ ສັ່ນສະທ້ານຢູ່ຈັ່ງຊັ້ນຕລອດເວລາ ຂ້າພະເຈົ້າຢຽດໂຕຢູ່ເທິງເດີ່ນຫຍ້າສີຂຽວ ກ້ອງຮົ່ມໝາກແງວນັ້ນດ້ວຍສຸຂາຣົມ *ພາບຈີວິດອັນຫນັກຫນ່ວງ ຂອງທົ່ງໄຮ່ທົ່ງນາ ຈຶມຊາບເຂົ້າເຖິງຫົວໃຈ* ຂ້າພະເຈົ້າຫລັບຕາລົງດ່ອຍ ໆ ເພື່ອຈົດຈຳພາບເຫລົ່ານັ້ນໄວ້ ໃຫ້ເປັນອັມຕະນິຍາຍແຫ່ງຄວາມຊົງຈຳ *ມັນເປັນພາບ* ແຫ່ງຄວາມຈິງອັນສູງຄ່າ ທີ່ຫາຊິບໍ່ໄດ້ອີກແລ້ວໃນຕລາດການສະແດງຂອງຈິຕກອນຜູ່ເຮືອງນາມປານໃດກໍ່ຕາມ ມັນເປັນພາບທີ່ກິນໃຈຂ້າພະເຈົ້າ ເພາະ *ມັນເປັນພາບຈີວິດທີ່ສະທ້ອນອອກມາ ໃນລັກສນະແຫ່ງຄວາມເປັນຈິງ ແມ່ນແລ້ວມັນເປັນພາບຈີວິດ ຂ້າພະເຈົ້າຮັກພາບນີ້ ຂ້າພະເຈົ້າຮັກຈີວິດ ແລະຂ້າພະເຈົ້າກໍ່ຮັກພາບນີ້ດັ່ງຈີວິດ...* ■

## *ສາວໃສ້ - ສາວໃຈ້*

ເລີກການຂື້ນເຮືອນມາ ຍາແມ່ບໍ່ໄດ້ຍິນສຽງນົກແສງກາ ເອີ້ນຖາມຂ່າວດີທຸກມື້ ກໍເລີຍຫລູບລິລູເຂົ້າໄປສ້ສາວໃຈ້ ຢູ່ໃນຄົວທັນທີ

— ນົກໄປໃສອີດໍາ ດືບໍ່ເຫັນມັນຢູ່ໃນຕຸ້ມ ແລ້ວກະບໍ່ໄດ້ ຍິນສຽງມັນປາກ ?'

— ຈັ້ງວ່າ ຂະນ້ອຍກະບໍ່ຮູ້ດີກັນ ! ໄດ້ຍິນແຕ່ແມວດໍາຮູ້ ຂອງຍາແມ່ມັ້ນແລ້ວ ໃບ່ "ແກ້ວ–ແກ້ວ–ກິນເຂົ້າກັບກ້ວຍບໍ່" ຢູ່ ຍັ້ງມື້ !

## ໑

## ເຫດເກີດ...

ໂດຍ ດວງຈຳປາ

"ບ໊າ ! ເຈົ້າມາຄືເຫລື້ອມຜິງ ໆ ຢູ່ທຸກມື້ແທ້ ຣຶ ! ຝົນຕົກຂື້ນຕົມຖ້ວມເມືອງຢູ່ປານນີ້ ເຈົ້າກໍ່ຍັງ ສະອາດສົດໃສເຢັ້ຍມ່ຳທ້າແຜ່ນດິນອຽງຈັນຢູ່ໄດ້ໝັ້ !" ແລນໂຣເອັ້ເກົ່າ ໆ ສົມກັບທີ່ຕິດປ້າຍເຫລືອງເອົາໄວ້ ທ້ອງຂື້ນ ເມື່ອແລ່ນສແລບເຂົ້າມາຣຽງອັດຖຸຕ່ອນງານນຳສມັຍ

ຄວາມຈິງ ເບັນຊ໌ສະບໍ້ອຕ ນອນໃນອູ່ອັນມີຊາຍຄາຢ່າງດີຕລອດຄືນ ແຈ້ງມາ ແລະແລ່ນເຂົ້າອອກດຸດອກຈັ່ງຕ້ອງມາຢູ່ຣຽງແລນ

ໂຮເວີ້ໃນລາງເທື່ອທີ່ນັ້ນ ທາງນີ້ຮູ້ວ່າຕາກແດດແລະຝົນຢູ່ຫັ້ນຕລອດກາລ ຣົດເກົ່າເກືອບຊິພັງຄືມັນ ເຈົ້າຂອງຍ່ອມບໍ່ໄຍດີພໍ່ຊິຫາຫລັງຄາງມຫົວໃຫ້

“ເຣື່ອງເຫລື້ອມຂອງນ້ອງມັນທັມດາດອກ ເອີ້ຍ.... ໃໝ່ ໆ ງາມ ໆ ແພງ ໆ ທັງແມ່ນເງິນເພິ່ນຈົກຊື້ເອງຈັ່ງຊີ້ ເພິ່ນກໍຕ້ອງບົວຣະບັດແດ່ ຊັ້ນລ່ະ ກະບໍ່ມີຫຍັງຍາກ ພໍເພິ່ນຂັບຂ້ອຍໄປຣອດໂຮງການ ພວກໂຊເຟີ້ ກຸລີບໍ້ດກວາດ ກໍຫຸ້ມມາເຊັດ ວ່າແຕ່ຈັກຂ້ອຍມອດແມ່ນທາງເຊັດບໍ່ເຊົາມື ບໍ່ເຫລື້ອມກໍບໍ່ທົນ !” ສບ໋ອຕເບັ້ນຊ໌ເຮັດສຽງຊົງຂີ້ຄຸຍປະກອບໃຫ້ສົມທ່າທາງຂອງຕົນ.

“ເຈົ້າກະເວົ້າໄດ້ຊັ້ນແລ້ວ ແນວເພິ່ນພວມຮັກພວມຫອມຫາກຄືບໍ່ເຫັນເພິ່ນໃຊ້ປໂຍດເຈົ້າພໍປານໃດດອກ ຜັດແຕ່ເຈົ້າມາຢູ່ກໍເຫັນມີແຕ່ແອ່ນນຳອາດຍາພໍ່ບໍ່ເຊົາ ພວກຍາແມ່ແລະລູກ ໆ ເພິ່ນບໍ່ເຫັນຫັນໄດ້ນັ່ງພໍສິບເທື່ອ ຕາເຫລືອກໍມີແຕ່ຂ້ອຍນີ້ຄ້າຮ້າຍ ຍາແມ່ຊິໄປຕລາດໄປສວນ ກໍຂ້ອຍ ບັນທຸກເອົາໜໍ່ກ້ວຍໄປປູກເບາະ ໃສ່ປາເນົ່າ ໆ ມາແຕ່ທ່າງ່ອນມາເຮັດປາແດກເບາະ.... ເວົ້າມາຂ້ອຍຢາກປະຕິວັດຈັກເທື່ອລອງເບິ່ງເພິ່ນຊິເອົາເຈົ້າໄປຂົນຕາງບໍ່....”

“ໂອ້ຍ ບໍ່ມີທາງ ຂນາດຂ້ອຍ ໃໝ່ອ່ຽມ ອ່ອງຕ່ອງ ອອກ

ຈາກຮ້ານຍາພໍ່ກໍເອົາໄປສູດຢູ່ວັດຍ່າງດີ ເຣື່ອງຫຍັງຂ້ອຍຊິໄປສ່ຽງຂົນແມວຂີ໊ດຽດ.... ຂນາດຂ້ອຍມັນຕ້ອງໃຫ້ແຕ່ຜູ້ງາມ ໆ ລະບໍນັ້ງ ຍາພໍ່ຈັ່ງຊີ໊ກໍແຕ່ງຊຸດກອມເປລ ບໍ່ເອັ໋ນມິ໊ ຊາຍາແມ່ເຈົ້າຫຍັງໝ້າແຫລ້ ຄ້ຽວໝາກບໍ່ຄາຍ ຂຶ້ນມານັ້ງຂ້ອຍ ກໍຍ່ຳແຕ່ນ້ຳໝາກເປື໊ອນຊຸ໋ນຕີ໊ ຍາແມ່ພໍ່ຈັ້ງມອບເວນເຈົ້າໃຫ້ຍາແມ່ ເຖີງຊິເບັ້ນຣົດຫລວງກໍເອົາມາໄວ້ໃຊ້ວຽກເຣືອນເບັ້ນປະຈຳ ສ່ວນຂ້ອຍເພີ່ນຂັບໄປການໄປແລ່ນວຽກ ຈັ້ງສົນພ້າສົນເພີ່ນ ຮູ້ບໍ ?"

"ຄັນເຈົ້າບໍ່ມັກ ເພດຂອງຍາແມ່ແບບນີ໊ ກໍບໍ່ມີຜູ້ຍິງນັ້ງຣົດເຈົ້າໃຫ້ແລ້ວນ້ ສົນພໍດີຍາແມ່ແຮ່ງບໍ່ມັກໄປໃສນຳຍາພໍ່ຈັກເທື່ອ ຄັກເຈົ້າລະບໍ່ຫັ໋ນ ສົນໃຈແລ້ວບ້ ?" ແລນໂຣເວີ໊ເວົ໋າແດກໃສ່ຄົນດ້ວຍຄວາມເຫລືອໃຈທີ່ເຂົາຫາວ່າຕົນບໍ່ມີປໂຍດທາງສັງຄົມເສັຽແລ້ວ ບໍ່ຄຶດເຫັນດາວຕົກມາໃໝ່ ໆ ກໍອີ່ເຖົ໋ານີ໊ແລ້ວຣັບໃຊ້ທຸກແນວ ແຕ່ຍ້ອນວ່າເບັ້ນຣົດຫລວງແລະໃຊ້ຍ່າງບໍ່ມີປານີ ບໍ່ຈັກວ່າຈັກມື້ມາຂັບ....ຂັບຣະຂັບຣາມ.... ເພັ໋ນເພີ໊ກໍດັນຂັບໄປ.... ເທີງຕາມເທີງກໍຈື່ງວ່າເກືອບຊິຫລຸດອອກຈາກກັນເບັ້ນຕ່ອນໃຫ້ເບິ່ງຈັ່ງຊີ໊ແລ້ວ ຄຶດໄປຄຶດມາກໍຄືຄວາມສບ້ອຕນັນວ່າຢູ່ ລອງແມ່ນເງິນເພີ່ນຈົກຊິ໊ດູ້ ຄັນບໍ່ພຽນກວ່ານີ໊ສາແລ້ວເຈັບໃຈທີ່ເກີດມາເບັ້ນຂອງຫລວງເມືອງລາວ ເຂົາບໍ່ຣັກບໍ່ແໜງ !

ຜາກົດວ່າ ເບັນຊ໌ສບໍ່ອຕ ບໍ່ປະໃຫ້ ແລມໂຣເວີ້ຮ້າງຕິຫຍັງໄດ້ ນາງຄຸຍຕໍ່ໄປວ່າ :

"ຜູ້ຍິງທີ່ຂີ່ຂ້ອຍມັນຫວື : ? ຮື ! ເວົ້າທີ່ກະຖຸມພີ້....ງານອ່ອງຕ່ອງຄືນາງພ້ານີ້... ເຈົ້າບໍ່ເຫັນດອກ... ຍາພໍ່ເອົາຂ້ອຍໄປຮັບເຂົາ ບາດຍາມໃດຍາແມ່ພາລູກໄປສອນໝົດມື້ມັນລ່ະຈິບໍ່ ເພິ່ນຫາກບອກຍາແມ່ວ່າ ຄາປະຊຸມສຳຄັນວ່າກ້ ມັນລ່ະ ແມ່ນເພິ່ນໄປຫາ ໂຕນ້ອຍ ໆຂອງເພິ່ນດອກ.... ຮື ໆ ! ແຕ່ງເພດຈີ້ ໂອ້ຍ ສັມກັບຂ້ອຍປານເກີດມາຄູ່ກັນ ຂ້ອຍໄດ້ຍິນຢູ່ຕວ່າ ວ່າເພິ່ນຊິຍົກຂ້ອຍໃຫ້ນາງມັນເບັ່ນຂອງຂວັນ ເບິ່ງເພິ່ນຄືຕິດນາງມັນແຮງ ຄືວ່າໜັນລ່ະ ເອົາມາປຽບໃສ່ຍາແມ່ເຮົານີ້ ມັນລົດໄກກັນປານຟ້າກັບດິນ"

"ເອົາເຈົ້າໃຫ້ນາງມັນຫວື:? ເບັ່ນໄປບໍ່ໄດ້ດອກ, ແລມໂຣເວີ້ຖຽງຢ່າງເຫລືອເຊື່ອ, ຍາແມ່ແຮງຂຶ້ຖືຂຶ້ຕັ້ງຊິຕາຍ ເພິ່ນຊິຍອມໃຫ້ຍາພໍ່ເອົາຣົດໃໝ່ ໆ ຣາຄາແພງ ໆ ປານນີ້ບໍ່ໃຫ້ຄົນລ້າ ຈ້າງສາແດ່..."

\+ \+ \+

"ເຈົ້າໄປຢູ່ໃສຫລາຍມື້ແລ້ວ ເບັນຊ໌ສບໍ່ອຕ ຂ້ອຍໄດ້ຍິນເພິ່ນໂສກັນວ່າຍາພໍ່ຂາຍເຈົ້າແລ້ວ ເຈົ້າຢູ່ນຳໃຜດຽວນີ້ ?"

ແລມໂຣເວີ້ ມີໂອກາດໄປພົບນ້ອງສາວຮ່ວມນາຍເກົ່າ ໃນແລງນຶ່ງຍ້ອນຍາພໍ່ຂັບນາງໄປນັ້ນເອງ

"ຂາຍ ! ຣິ ຣິ ! ຢາກຫົວຕວ່າ ຊ່າກັນວ່າຍາພໍ່ຂາຍຂ້ອຍຊັ້ນບ່າ ຄືນ໊ ແມ່ນແລ້ວຍາພໍ່ຍ້ຳຍາແມ່ອຸ້ມອາຍຂຶ້ນ ເພິ່ນສລາດຊິຕາຍເຫັນບໍ່ ເພິ່ນເອົາຂ້ອຍໃຫ້ເມັຽນ້ອຍເພິ່ນຍັງວ່າ ຄືຂ້ອຍບອກເຈົ້ານັ້ນແລ້ວ ເພິ່ນຄືຊິຕົວະເມັຽເພິ່ນວ່າຂາຍນ໊ ຈັ່ງບໍ່ມີເຣື່ອງກັນ ນີ້ແປວ່າຍາແມ່ບໍ່ທັນຮູ້ເລີຍແມ່ນບໍ່ ວ່າຍາພໍ່ຮັກນາງນັ້ນແຮງຂນາດໃດ....?"

"ເຈົ້າເຍີ....ສບໍ້ອຕ ! ຢ່າຄຸຍຫລາຍ ນ້ຳໜ້າໄປຢູ່ໃນມືຂອງຍິງທີ່ຊົ່ວຊ້າປານນັ້ນ ກໍຍັງຮ່າວດີໃຈ ມື້ນຶ່ງເທາະເຈົ້າຊິວ່າວໂອ້.... ຍາແມ່ເພິ່ນກໍຢູ່ຂອງເພິ່ນໄປແບບນັ້ນແຫລະ ຂ້ອຍບໍ່ເຫັນເພິ່ນຜິດຖຽງກັນລູກເຕົ້າກໍຈົບດີສູ່ຄົນ ຍ້ອນຍາແມ່ເອົາໃຈໃສ່ລ້ຽງດູເບິ່ງແຍງ ຊາແຕ່ຍາພໍ່ເຈົ້າບໍ່ໄດ້ເຣື່ອງ ໄປແຕ່ວຽກແຕ່ການເໝີດປີ ຄັນວ່າເງິນທອງກໍບໍ່ມີແມ່ນຫາມາໄດ້ດີ ໆ ຄືອັນຍາແມ່ຄ້າຂາຍເອົາ ຂ້ອຍໄດ້ຍິນເຕັມຫູ ເຂົາວ່າຍາພໍ່ເຮົານີ້ ມັກສໍ້ຣາສບັງຫລວງນຳເພິ່ນ ມີຫວັງຊິໄດ້ໄປຊຳເຄີຍຢູ່ ມື້ໃດມື້ນຶ່ງໃດ໋"

× × ×

"ອ້າວ ສບໍ້ອຕ ! ໃສເຈົ້າວ່າຄຽວມີເຈົ້າຂອງເບັ່ນສາວງາມ ຂ້ອຍຄືເຫັນເບັ່ນອ້າຍບ່າວຊ້າທີ່ຂັບເຈົ້າມາ ບໍ່ຮຽນເຈົ້າຂອງອີກແລ້ວຕ໊ ?"

"ບໍ່ດອກ ຍານາງເພິ່ນໄປບາງກອກ ກັບຍາພໍ່ຫັ້ນແລ້ວ ຍິນວ່າໄປຕາກອາກາດພ້ອມກັບຍາພໍ່ໄປປະຊຸມ ຣິ ! ພວກເຈົ້າຢູ່ເຮືອນມັ້ນຄືຊິບໍ່ມີທາງຮູ້ດອກວ່າ ຍາພໍ່ເອົາຜູ້ສາວໄປນຳນ່ະ ອັນນີ້ແມ່ນ ເອີ....ຄັນເວົ້າເພິ່ນກໍວ່າພີ່ນ້ອງ ເພິ່ນນັ້ນລ່ະ ແຕ່ຂ້ອຍຮູ້ວ່າ ອ້າຍອັນນີ້ເປັນແຟນກັບຍານາງເພິ່ນ ຫັນດາກ້ ເມັຽນ້ອຍເຈົ້ານາຍນ່ະຕ້ອງມີຊາຍຊູ້ໜຸ່ມ ໆ ທັງນັ້ນລ່ະ ເຂົາເອີ້ນວ່າແມງດາຈັ້ງໃດລ່ະ.... ຍານາງເອົາເງິນໃຫ້ໃຊ້ຊ້ຳບໍ່ພໍຍັງໄດ້ຂ້ອຍໄວ້ຂັບແອ່ນອີກຕອນຍາພໍ່ບໍ່ຢູ່ນ່ະ"

" !!!! "

× × ×

ເຫດເກີດຂຶ້ນທີ່ທາງຄົບ ຣະຫວ່າງຖນົນຫລວງອັນໃຫຍ່ ແລະທາງແຍກເຂົ້າສິຖານ ຕາມຫລັກແລ້ວຣົດທີ່ມາທາງນ້ອຍກໍຕ້ອງ ຖ້າກ່ອນຈິ່ງຂ້າມ ແຕ່ເບິ່ງຕາມຮູບການທີ່ຣົດທັງສອງຄາກັນຢູ່ ກໍເຫັນໄດ້ວ່າຣົດທີ່ມາຈາກທາງນ້ອຍຜິດ ໑໐໐% ເຕັມ ດ້ອຍມາໄວຈົນລ່ວງມາຕຳເອົາແລນໂຣເວີ້ໃນຖນົນຫລວງ

ເຈົ້າພ້າທີ່ມາຮອດໄວທັນໃຈ ເພາະເປັນໂມງເຂົ້າການໃໝ່ ຝູງຄົນກໍຫຸ້ມເຂົ້າມາຈົນແໜ້ນອັ້ງ

ແລນໂຣເວີ້ຮ້າງໄດ້ແຕ່ຈົ້ມ

"ສບື້ອຕເຈົ້າກໍໂພດ ປານຄົນບໍ່ຮູ້ກັນ ເຖິງຂ້ອຍຊິເຄີຍອິດສາຕາຮ້ອນທີ່ເຈົ້າງາມລົ້ນ ແຕ່ຂ້ອຍກໍບໍ່ຢາກໃຫ້ເຈົ້າມາເສັຽໂສມຍ້ອນອຸປຕິເຫດຕາຍ ໆ ແບບນີ້ ນີ້ລະໂທດທີ່ເຈົ້າໄປໄດ້ໄວລະ ເຈົ້າແລ່ນເຂົ້າມາສອດໃສ່ພັ້ນາຮົກແທ້ ໆ ນ່າ ຊິຢຸດຊິຢັ້ງສາກ່ອນກໍບໍ່"

ສບື້ອຕຄາງໂອຍ ໆ ແສນເຈັບປວດ ໝ້າຕາຂອງນາງເກືອບຈະບໍ່ມີຫຍັງຍັງຄົງຮູບ ຕາແຕກ ຝາປະຕູທາງໝ້າບູບເຂົ້າຫຍ້ ໂຕຄົນຂັບຄາພວງມາລັຍ ຍັງຄວາມລຳບາກໃຫ້ແກ່ເຈົ້າໝ້າທີ່ ທີ່ຈະຈັດການເອົາຮ່າງອັນໄຮ້ວິນຍານນັ້ນອອກ ເສັຽເວລາໄປເບິ່ນຊົ່ວໂມງສອງຊົ່ວໂມງ.

"ແລ້ວແມ່ນໃຜລະນັ້ນສບື້ອຕ ທີ່ຂັບມາຕາຍນ່ະ ? ບໍ່ຊົງຊິແມ່ນເມັຽນ້ອຍຍາພໍ່ເຮົາພີ້ ໝ້າຕາຍັງອ່ອນປານສາວມັກຮຽນທີ່ນັ້ນ ?" ບ້ຳຍເຫລືອງເກົ່າສະແດງຄວາມຫ່ວງໃຍມຸດ.

"ບໍ່ແມ່ນດອກເອີ້ຍ.... ນາງນີ້ນ່ະ ຊູ້ຂອງອ້າຍ.... ອັນຜູ່ເບິ່ນແຟນ ຍານາງ...ນັ້ນແລ້ວ ບາບໄລ່ເວນທັນ ອ້າຍນັ້ນ ເຈົ້າຂອງເພີ່ນບໍ່ຢູ່ເລືອກເອົາຂ້ອຍມາປະໃຫ້ຜູ້ສາວແອບຂັບ ລາວຢຽບບັກໄວ ໆ ທັງທີ່ຍັງບໍ່ຮູ້ກົດຈະຣາຈອນ ບາດນີ້ລະເຣື່ອງລຶກລັບທັງໝົດນັ້ນຊິແຕງ

ອອກມາ.... ເຈົ້າເບິ່ງ ! ຂ້ອຍຢ້ານຮອດຍາແມ່ກະຈິຮູ້ຕອນນີ້ເອງວ່າ ຣົດຄັນນີ້ຍາໝ່ຍັງບໍ່ໄດ້ຂາຍ ອ້າຍໂຊເຟີລາວຮູ້ດີໃດ໋.... ໂອ໊ຍ...! ຂ້ອຍກະເຈັບໝໍ່ຂ້ອຍ.... ມິຫວັງເພິ່ນເລຂ້ອຍຖິ້ມໄວ້ຢູ່ໃດຢູ່ນຶ່ງຕລອດຊາດລ່ະບາດນີ້....ເຈົ້າລ່ະບໍ່ເຈັບໃສຫລາຍນໍ້ເອື້ອຍ"

× × ×

"ອຸບັດຕິເຫດ ທາງສີ່ແຍກສີຖານ ນາງສາວ....... ຜູ່ຂັບເບັນຊ໌ສບ໋ອຕຕາຍຄາທີ່..." ປໂຍກນີ້ອ່ານຊ້ຳແລ້ວຊ້ຳອີກ ຢູ່ຂ່າວປະຈຳວັນ ນີ້ວານນີ້.

24 / VII
ຫ້າມຈຳໜ່າຍ

# ໄໝ້ກ່ອນສຸກ

ໄຟເຮົ່ງຮ້ອນ ໂຮງເຮື່ອແຮງກະດັດ
ຈີ່ປາຍັງທັນສຸກ ລອກລາມລົມໄໝ້
ຄິດັ່ງຕັນຫາກຸ້ມ ກຸມໃຈຮ້ອນເຮົ່ງ
ໃຈຫາກຂຶມເຮົ່ງຮ້ອນ ປຸມປຸ້ງກ່ອນດອງ ແທ້ແລ້ວ

" ປາໄນ "

# ໂລກກົມ

ດອກເກດ

ສຽງສັນຍານ ບອກເວລາດັງກ້ອງຂຶ້ນ ນັກຮຽນຍິງຊາຍໃນເຄື່ອງແບບ ຕ່າງຫັບຫາຍໂຕເຂົ້າຫ້ອງຮຽນໃຜມັນ.... ບຶດນຶ່ງກໍມີຄົນກຸ່ມນຶ່ງຍ່າງເລາະຕາມຣະບຽງຕຶກຮຽນມາ.... ແລ້ວແຍກກັນເຂົ້າຫ້ອງເທື່ອລະຄົນ ຈົນທ້າຍສຸດຍັງແຕ່ຊາຍສອງຄົນ ຍ່າງກົງດິ່ງມາຍັງຫ້ອງອັກສອຣສາດ ປີທີນຶ່ງ

ນັກຮຽນຍິງຊາຍພ່າວລຸກພຶບພັບຂຶ້ນ ຈົນຊາຍນຶ່ງໃນສອງ

ທີ່ເຂົ້າຫ້ອງມາໃໝ່ຍົກມືແລ້ວບອກວ່າ :

"ມັ່ງໄດ້.... ນີ້ ອາຈານພູມີລາດ ປອັດລາດ ປະຈຳຫ້ອງພວກເຈົ້າ"

ເວົ້າສຸດ ເພິ່ນຜູ້ແນະນຳຄົນມາໃໝ່ກໍອອກຫ້ອງໄປ ປະອາຈານໃໝ່ຢືນຢູ່ຕໍ່ໜ້ານັກຮຽນທັງຊາຍຍິງແຕ່ລຳພັງຜູ້ດຽວ...

ທັງຫ້ອງມິດມີ້ ຄືບໍ່ມີຄົນ.... ອາຈານໃໝ່ເບັ່ນຊາຍໜຸ່ມໜ້າຕາຄົມ ເບິ່ນຕາເບິ່ງ... ເຂົາຢູ່ໃນຊຸດສັ້ງເສື້ອສີກາກີ ບໍ່ໃໝ່ແຕ່ກະບໍ່ເກົ່າຈົນເບັ່ນຕາຖືຖືກ

ເຂົາກວາດສາຍຕາໄປທົ່ວຫ້ອງຮຽນຄາວນຶ່ງ ຈຶ່ງຢິບສໍຂາວອອກມາຈາກແອບ

"ຂ້ອຍຊື່ ສົມພອນ" ເຂົາບອກ ແລ້ວກໍຂຽນຊື່ລົງກະດານເບິ່ນໂຕຝຣັ່ງ ແລະໂຕລາວຮຽງກັນ.

ອາຈານສົມພອນ ໄຂກະເປົາໜັງໃສ່ໜັງສືຂອງເພິ່ນ ດຶງເຈັ້ຽຕັບນຶ່ງອອກມາຖືໄວ້ ແລ້ວຍ່າງເລາະໄປນຳແຖວໂຕະນັກຮຽນ ທັງເວົ້າວ່າ.

"ເພື່ອໃຫ້ຮູ້ຈັກກັນດີຂຶ້ນ.... ທຸກຄົນຄວນແນະນຳຕົນເອງໃສ່ບັດນ້ອຍນີ້.... ຊື່ ນາມສະກຸນ ບ່ອນເກີດປີເກີດ.... ປີການຮຽນ

ແຕ່ໂຮງຮຽນປະຖົມມາຈົນຮອດດຽວນີ້ ເຄີຍເຂົ້າຮຽນໂຮງຮຽນໃດມາກ່ອນ.... ຯລຯ ໄດ້ໃບປະກາດຫຍັງແດ່.... ໃຜມີບັນຫາພິເສດທາງຄອບຄົວກໍຕື່ມໃສ່.... ມີຄອບຄົວທີ່ພ້ອມພຽງ ຫລືເບັ່ນກຳພ້າ ຢາກເຮັດອຽກຫາລາຍໄດ້ຊ່ອຍເບັ້ຽລ້ຽງຫລວງ....ຂຽນໃສ່ໄດ້"

ອາຈານໜຸ່ມ ເວົ້າລ່ຽນໄຫລປານຜ່ານການສອນມາຫລາຍປີ ເຂົາຢາຍປື້ມ້ອຍໄປຮອດໂຕະນັກຮຽນຍິງຜູ່ນຶ່ງກໍຢຸດຈິກ ນັກຮຽນຍິງຜູ່ວ່ານັ້ງກົ້ມໜ້າໃສ່ໂຕະ ເບິ່ງມືໂຕເອງຄືວ່າ ເບັ່ນຂອງດີວິເສດ.... ອາຈານສົມພອນຈຶ່ງເຫັນແຕ່ປາຍດັງແຫລມ ແລະປອຍຜົມຍາວປົກຫລັງ ຂອງນາງເທົ່ານັ້ນ !

ແຕ່ ອາຈານໜຸ່ມກໍບອກໂຕເອງວ່າ...ແມ່ນບໍ່ຜິດ... ນັກຮຽນຂອງເຂົາຜູ່ນີ້.... ເຄີຍເຫັນໜ້າມາເທື່ອນຶ່ງແລ້ວ !

"ກ໊ອກ ໆ ໆ..." ສຽງເຄາະພັກຕູຫ້ອງດັງຜ່າຄວາມສງົບໃນຫ້ອງຮຽນອັນ ອາຈານສົມພອນແນມໄປທາງພັກຕູ.... ລອງຕອງປະຈຳສະຖາບັນ ກຳລັງຍົກຈົດໝາຍອຽນອັນໃຫ້ເບິ່ງ.

ຊາຍໜຸ່ມຍ່າງມາເຊັນພັງສື ສົ່ງລອງຕອງແລ້ວ ກໍບອກນັກຮຽນດ້ວຍສຽງກັງວານວ່າ.

"ມີປະຊຸມອາຈານຊົ່ວໂມງນຶ່ງ ! ດັ່ງນັ້ນເພື່ອບໍ່ໃຫ້ເບັ່ນການຖິ້ມເວລາລ້າ ໆ....ອາຈານຈຶ່ງຂໍທົດສອບພື້ນຖານຄວາມຮູ້ ທາງປວັດສາດ

ແລະພູມິສາດຂອງພວກເຈົ້າ ດ້ວຍຄຳຖາມຈັກ ໓-໔ ຂໍ້ ໃຫ້ພວກເຈົ້າ ຕອບໃສ່ເຈັ້ຽໄວ້... ຈິໄດ້ເຫັນໄປກອດເບິ່ງວ່າ ນັກຮຽນທີ່ຈະເປັນນັກ ປວັດສາດ-ພູມິສາດ ມີຮູ້ຫຍັງແດ່ແລ້ວ"

ວ່າແລ້ວເຂົາກໍຈົດຄຳຖາມໃສ່ກະດານຢ່າງບໍ່ເບິ່ງເຈັ້ຽທາງໃດ

ອາຈານສົມພອນອອກຈາກຫ້ອງຮຽນໄປ ພ້ອມກັບຖິ້ມບັນ ຫາໜັກໃຈໄວ້ໃຫ້ນັກຮຽນຄິດເດືອງ.

ມາລັຍສີ ສາວນັກຮຽນ ວັຍສິບແປດ ມາຍມືອອກຈາກກັນ ຍິບບັດນ້ອຍຂຶ້ນມາເບິ່ງທັນທີ ທີ່ອາຈານອອກຈາກຫ້ອງໄປ.

ນາງບັນຈົງຂຽນຈິວະປວັດຫຍໍ້ ຂອງຕົນດ້ວຍຄວາມພຽນ... ເປັນຫຍັງຈິບໍ່ພຽນໃນເມື່ອນາງໄດ້ສະແດງຄວາມໂງ່ອອກໄປແລ້ວ.... ໃຜ ຈິຄິດວ່າໂລກນີ້ຈິແຄບ ຈີກົມ ນົນ ຄືພ່ອຍໝາກກ້ຽງຈັ່ງຊີ....

"ອາຈານສົມພອນຜູ້ຍ່າງອອກຈາກຫ້ອງຮຽນວ່າງນີ້ງນີ້ຫວ໊ະ ຈິເປັນອາຈານປະຈຳຫ້ອງຕລອດປີ.... ຈັ່ງໃດນາງຈິກ້າເງີຍໜ້າຂຶ້ນເບິ່ງ ອາຈານໄດ້.... ເພາະມື້ນັ້ນນາງໄດ້ຖິ້ມແສງຕາຖືຖິກປົນຢຽດຫຍາມ ໄວ້ ໃຫ້ພໍແຮງແລ້ວ...ຈິບໍ່ໃຫ້ດ່າທາງແສງຕາຈັ່ງໃດ໋....ທ່າທາງເຊີ່ ໆ ເຫງິກໆ ຫງາກ ໆ ປະກອບທັງເຄື່ອງນຸ່ງກະເກົ່າຍັງແຕ່ບໍ່ຂາດ ແລະບໍ່ມີຮອຍຕາບ ນັ່ງຈອງໂຕ໊ະ ໂຕ໊ະດຽວທີ່ມີປົນລົມພັດໃນຮ້ານນັ້ນ ຄອບຄອງຜູ້ດຽວ ນັ້ນນະ... ແມ່ນແລ້ວ.... ນີ້ສຳຄັນນັ້ນນັ່ງຂອງນາງ.... ນີ້ທີ່ນາງຍ່າງຮຽງໄປ

ກັບຮອງອະທິບໍດີໜຸ່ມຮູບງາມ ທີ່ມີຊື່ສຽງເປັນຂ່າວໃນວົງສັງຄົມສເມີ ໆ.. ເພື່ອເຂົ້າຫາທ່ານອະທິບໍດີໃຫຍ່ ຂອງສະຖາບັນການສຶກສາບ່ອນນີ້....ນາງ ຈຶ່ງແຕ່ງເພດງາມເປັນພິເສດ ! ກໍຍ້ອນນາງແຕ່ງເພດງາມເປັນພິເສດນີ້ ແລ້ວທີ່ຜູ້ຊາຍທັງຫລາຍຕ້ອງຫລຽວເບິ່ງຢ່າງເພິ່ງພໍໃຈ ແກມຊົມຊື່ນ .... ຕ້ອງແນມຈົນຫລຽວຫລັງພຸ້ນລ່ະ.... ຈັ່ງຊີ້ແລ້ວ ຈິບໍ່ໃຫ້ມາລັຍສີໃຈຮ້າຍ ຈັ່ງໃດ່ ໃນເມື່ອ... ນາງຫລຸດກຽດຢ່າງເຂົ້າຮ້ານເຝີໃນຍາມທ່ຽງ ຫລັງ ຈາກທີ່ເຂົ້າຫາທ່ານອະທິບໍດີມີຫວັງວ່າຈິໄດ້ມານັ່ງຮຽນສຳບາຍ ໆ ໃນອີກ ບໍ່ຮອດອາທິດ ໃນສະຖາບັນທີ່ມີຊື່ສຽງທີ່ວປະເທດແຫ່ງນີ້... ນາງລົມບໍ່ ຂາດປາກກັບຮອງອະທິບໍດີໜຸ່ມຜູ້ພາມາ.... ກ້າວຂາເຂົ້າຮ້ານເຝີ ດ້ວຍທ່າ ທີຂອງນາງພະຍາຜູ້ຈົງກຽດ ແລະຄວາມງາມ ກວາດແສງຕາໄປທຸກໂຕ໊ະ ຄືຊິປະກາດຄວາມຍິ່ງໃຫຍ່ຂອງນາງ....

ອາກາດຮ້ອນເອົາຂອງຍາມທ່ຽງເຮັດໃຫ້ມາລັຍສີ ຍ່າງກົງໄປ ຍັງໂຕ໊ະທີ່ມີໝາກປີ່ນລົມອັນໃຫຍ່ພັດ ຕິດຕາມດ້ວຍຮອງອະທິບໍດີ ຜູ້ແຕ່ງ ກາຍເຕັມຍົດ ບໍ່ດ້ອຍກວ່ານາງ...

ແຕ່ໂຕ໊ະທີ່ມີໝາກປີ່ນລົມໜ່ອຍໃຫຍ່.... ຈຶ່ງເປັນໜ່ອຍດຽວ ໃນຮ້ານນັ້ນ... ມີຊາຍໜຸ່ມໜ້າຂຶມນັ່ງເປັນເຈົ້າ ນຸ່ງເດີ່ອງຕ໊ອກຊ໊ອກຈົ່ງຊີ ຂາດ... ປ່ອຍຜົມຕົກປົກໜ້າຜາກ ຄືຊິບໍ່ເຄີຍຖືກຫວີຈັກເທື່ອ... ທ່າທາງ ເອົາບໍ່ຕື່ນຕົ່ເຫບທີ່ດາທີ່ຍ່າງເຂົ້າມານັ້ນເລີຍ...

ມາລັຍສີ ຈື່ໄດ້ວ່າ ຕົນເອງໄດ້ຍ່າງສຽດໂຕ໊ະນັ້ນໄປ ເກືອບຢາກແຣະໂຕ໊ະທີ່ມີຈອກໂອລ້ຽງຈອກດຽວວາງຢູ່ຫັ້ນ ທັງເວົ້າເປີຍ ໆ ກັບຍາຣອງອະທິບໍດີ ດ້ວຍສຽງຫວານວ່າ:

"ນ້ອງຢາກນັ່ງບ່ອນເຢັ້ນ ໆ ດອກ... ຍາອ້າຍ...ແຕ່...ເອ່... ຄືຊິບໍ່ມີສຸພາບບຸຣຸດບ້ານນອກຜູ້ໃດດອກນໍ້ ຊິຮູ້ຈັກຄວາມປານນັ້ນ !

ນາງຈື່ໄດ້ວ່າ ຊາຍຜູ້ມຸ່ງເຄື່ອງປານກຸລິມັ້ນ ນັ້ງບໍ່ເພັງ.... ປານວ່າບໍ່ໄດ້ຍິນຄວາມເວົ້າປຽບເປີຍຂອງນາງ... ເຂົາຕ້ອງໄດ້ຍິນຄວາມເວົ້າຄວາມລົມຂອງນາງກັບຍາຣອງອະທິບໍດີຄັກ ໆ ເພາະນາງປາກສຽງດັງບໍ່ແມ່ນຂອງຄ່ອຍ ຄອບຄວາມຢາກອວດອ້າງໝູ່ມີຫລາຍກວ່າຢາກເປັ່ນສຸພາບສັດຕຣີ ນາງຫລຸດຄວາມເວົ້າຫລາຍແນວອອກໄປ... ມາລັຍສີ ຫາກໍ່ຄຶດອອກດຽວນີ້ວ່າ... ສົມພອນ... ແມ່ນແລ້ວ... ອາຈານສົມພອນ ຄືຊິລັກຫົວຢູ່ພໍແຮງ !

ສຽງໝູ່ຊັບຊຶ່ມກັນຂົ້ນ ບາງຄົນກໍ່ບອກຄຳຕອບກັນ...ມາລັຍສີ ຈັບຄວາມໄດ້ວ່າ ອາຈານສົມພອນຫາກໍ່ຈົບມາຈາກປະເທດ ການາດາສົດ ໆ ຮ້ອນ ໆ.. ໂທ້ ! ບໍ່ຄວນຊິເຊື່ອເບິ່ງຄົນບໍ່ຮູ້ວ່າ ມາແຕ່ປະເທດນອກ ປະເທດນາ ປານນີ້ເລີຍ... ກັນເອນຂອງມາລັຍສີແທ້ ໆ ທີ່ມາພໍ້ບັນຫາແບບນີ້... ໂລກນໍ້ໂລກ ຊ່າງກົມກ້ຽງເອົາກະດ້...

ຄຶດບໍ່ຕົກວ່າ ຈະທຳຕົນແບບໃດ່ ກັບອາຈານໜຸ່ມປະຈຳ

ຫ້ອງຮຽນ... ມາລັຍສີເລີຍລອງ ໆ ຊິຕອບຄຳຖາມ... ຕາຍຫ່າ ລອງໆ ອ່ານເບິ່ງ... ເຂົ້າໃຈຄຳຖາມຢູ່ ແຕ່ມືດມົວໃນຄຳຕອບຍິ່ງນັກ... ມາລັຍສີຢາກໄຫ້...ຢາກຮ້ອງ ຢາກແລ່ນອອກມາຈາກຫ້ອງ... ຈະຖາມໝູ່ບ້... ມາລັຍສີກໍບໍ່ກ້າ ເພາະນາງມາໃໝ່ບໍ່ລຶ້ງໃຜຈັກດີ ປະກອບກັບນາງໄດ້ວາງທ່າເບັ້ງ ໆ ໃສ່ໝູ່ກ່ອນແລ້ວ ຈະໃຫ້ງ້ຄືນງ່າຍ ໆ ມັນກະເສັຽສັກສີລູກນາຍພັນເອກຄືນາງ...

ອາຈານມາແຕ່ປະເທດ ການາດາ ກະພີບ້າ ຖາມເຣື່ອງປວັດສາດ ກໍຖາມປວັດສາດລາວໃຜຊິໄດ້ຮຽນ ຢູ່ໂຮງຮຽນຈ້າງຝຣັ່ງທີ່ ມາລັຍສີ ຮຽນມາ ເຂົາກໍບໍ່ເຄີຍສອນວ່າ ເຈົ້າອະນຸປິກຄອງວຽງຈັນ ສມັຍ ຄ.ສ. ທີ່ໃດ ພ.ສ. ທີ່ໃດ ຍາມສົງຄາມພຣະອົງຊົງເສັຽເມືອງໃດໃຫ້ໄທແດ່... ສິ່ງເຫລົ່ານີ້ ບໍ່ເຄີຍມີໃຜເວົ້າໃຫ້ມາລັຍສີຟັງຈັກເທື່ອ... ນາງຈະແຕ່ງບົ້ນຂຶ້ນໃໝ່ກໍບໍ່ເປັນ...

ທາງພູມີສາດ ກໍບໍ່ແລ້ວເມືອງລາວ... ພຸ້ນຟາດຖາມວ່າ ເຂດນ້ຳແດນດິນຂອງລາວສມັຍເຈົ້າຟ້າງຸ່ມ, ສມັຍກ່ອນເປັນເມືອງຂຶ້ນຝຣັ່ງ... ໂອ້ຍ ມີແຕ່ແນວປຸກ ໆ ເອົາຊື່ ໆ

ມາລັຍສີ ຈະຄິດອຸກຄິດອັ່ງຢູ່ດົນປານໃດ ນາງກໍບໍ່ຮູ້ ເມື່ອ... ຮູ້ສຶກວ່າ ໂຕເອງຕື່ນສະດຸ້ງສູ່ເທື່ອ ທີ່ມີສຽງບາດຕີນຍ່າງຕາມຣະບຽງມາ ແລະເທື່ອນີ້ກໍເຊັ່ນດຽວກັນ ສຽງບາດຕີນສນ່ໍາສເນີດັງໃກ້ ເຂົ້າມາ ໆ ໆ

ແລ້ວຮ່າງສູງສງ່າຂອງອາຈານສົມພອນ ກໍຜ່ານເຂົ້າຜັກຕູຫ້ອງມາ.

"ແລ້ວໝົດທຸກຄົນແລ້ວເບາະ ?" ເພິ່ນຖາມແລະຍ່າງເລາະຕາມແຖວສອຍໂອກາດ ເກັບເອົາບັດບັນທຶກຊີວະປວັດຫຍໍ້ຈາກນັກຮຽນໄປນຳ...

ເພິ່ນຢຸດຢືນຢູ່ໂຕ໊ະ ມາລັຍລີ ບຶດນຶ່ງ ຢິບເອົາເຈ້ຽນນ້ອຍແລ້ວຍ່າງອ້ອມໄປບ່ອນອື່ນ ທົ່ວຫ້ອງແລ້ວກໍກັບໄປນັ່ງໂຕ໊ະ.

ຍົກບັດແຕ່ລະອັນຂຶ້ນມາອ່ານພິຈາຣະນາ ແລ້ວແນມໄປຍັງນັກຮຽນເທື່ອລະຄົນ ໆ ຈົນຮອດບັດທີ່ຂຽນວ່າ ນາງສາວ ມາລັຍສີ ! ແລະອື່ນ ໆ ອີກຊຶ່ງເຂົາກໍອ່ານເບິ່ງພໍລວກ ໆ ກໍເຂົ້າໃຈທັນທີວ່າ ມາລັຍສີໄດ້ມາເສັງເຂົ້າຮຽນໃນຊັ້ນອັກສອສາຕປີທີ ໑ ແມ່ນເສັງເຂົ້າມາໃນລັກສະນະພິເສດ ! ເບັ່ນຕາຢາກຫົວ... ບໍ່ຄືດວ່າ ແຜ່ນດິນລາວຊິແຄບກົມເອົາກະດ໊... ຄືວ່ານັ້ນແລ້ວ ນະຄອນວຽງຈັນກໍບໍ່ໃຊ່ວ່າ ຊິກວ້າງຊິຂວາງພໍປະມານ... ເຂົາຍັງຈື່ໄດ້ຕິດຫູຕິດຕາ... ສາວງາມທີ່ກ້າວເຂົ້າມາໃນຮ້ານເຝີໃນລັກສນະຂອງນາງງາມຊົງສເນ ແລະ ອາການສະແດງໂຕຂອງນາງແສງຕາທີ່ເບິ່ງຟາດເຂົ້າມາໃນຮ້ານ ປານວ່າ ເພິ່ນບໍ່ເຄີຍຢູ່ດິນລາວ... ເຂົາຍັງຄຶດວ່າ "ຄືຊິຫາກໍມາແຕ່ຕ່າງປະເທດໃໝ່ ໆ... ລົງສັຍຊິມາເບັ່ນນາຍຄຣູຢູ່ນີ້ຄືເຮົາ... ໂທ້ ມາກັບຍາຮອງອະທິບໍດີອົກ... ຍ້ານເພິ່ນເຫັນເຮົາ..ນັ່ງກົ້ມໜ້າໄອ້ດີກວ່າ !!! ຊິໃດໄດ້ສາວງາມຈ້ຳໝາ ທ່ານຮອງອະທິ

ບໍດີຍ່າງສຽດໂຕະເຂົາ... ເຂົາຈຶ່ງທຳທ່າຫັນໜ້າໄປທາງອື່ນອີກ...

ໄດ້ຍິນສຽງເວົ້າສຽດ ໆ ໃສ່ວ່າ ເຂົາບໍ່ເປັນສຸພາບບຸຣຸດ ແຕ່ເຂົາບໍ່ຢາກຫັນໜ້າໄປເບິ່ງ ເລີຍເຮັດເປັນຄົນຫູໜັກ.. ມັ່ງບໍ່ຕຶງ.

ສຽງອອດອ້ອນຕ່າງ ໆ ນາ ໆ ດັງມາເຂົ້າແກ້ວຫູບໍ່ຂາດ... ສົມພອນບໍ່ເຈດຕະນາຈະລັກຟັ່ງຄວາມໃຜ... ແຕ່ນາງມາລັຍສີຊ່າງເປັນຄົນປາກແຮງຫົວດັງ ຜິດກັບລັກສນະ ການນຸ່ງເຄື່ອງ ທ່າທີ ຍ່າງເດີນເຫີນ ປານນາງງາມເທິງເວທີ...

ເວົ້າແຮງ ໆ ກະດີ ສົມຊິເປັນຄຣູບາອາຈານ ! ເຂົາຄຶດເອົາດີໄວ້ໃຫ້ນາງ.... ບາດນີ້ເຂົາຈຶ່ງຮູ້ວ່ານາງພຽງແຕ່ເຮັດເພື່ອສະແດງ ເພື່ອຢາກເປັນຄົນພິເສດ.... ຂໍ້ຄວາມສົນທະນາຂອງເຂົາເຈົ້າທັງສອງຟັ່ງຕອນນັ້ນ ສົມພອນບໍ່ເຂົ້າໃຈຫຍັງເລີຍ...

"ຍາອ້າຍວ່າ ພໍ່ຊິໄດ້ບໍ່ທີ ?

ນາງມາລັຍສີ ເປັນຄົນຊອນລົມຂົ້ນກ່ອນ ຫລັງຈາກທີ່ສັ່ງຂອງມາກິນແລ້ວ.

"ບ່າ ! ມັນຕ້ອງໄດ້ລະຕິ....ອົດສາມາເອງປານນີ້ ບໍ່ໄດ້ກະຊິໄດ້ເຕະກັນແຫລກມຸ່ນແຫລະ !"

"ເອົາຫຍັງເຕະລະຍາອ້າຍ... ເງິນຫລືວ່າຕີນອີຫລີ....ຮິໆໆ"

"ເຕະຫຍັງກະໄດ້ເຕະກັນຫລ່ະ !!

"ຍາອ້າຍຮັບຮອງປານນີ້ ນ້ອງກະເອີ້....ຊ່ວງໃຈ.... ເຣື່ອງຊິຮຽນໄດ້ບໍ່ໄດ້ນັ້ນ ບໍ່ເປັນບັນຫາດອກນໍ້....! ແລະ ຯລຯ....

ບາດນີ້ສົມພອນຈຶ່ງເຂົ້າໃຈ.... ອະນິດຈາ....ນາງພະຍາຜູ້ງົດງາມ...ຕັ້ງທີ່ແທ້ກໍເປັນພຽງສາວນ້ອຍຊຶ່ງອາຍຸຫລາຍ ເພາະແຕ່ງເພດເກີນອາຍຸ....ລູກເຈົ້າຫລານນາຍ ຄົບຄ້າສະມາຄົມກັບໜຸ່ມໂສດ ແລະ ບໍ່ໂສດເພື່ອຜົນປໂຍດສ່ວນໂຕ ເອົາປຽບຜູ້ອື່ນ.... ນາງຍາດແຍ່ງເອົາເບັ້ຽລ້ຽງບ່ອນຢູ່ບ່ອນຮຽນຂອງນັນຮຽນຜູ້ນຶ່ງຊຶ່ງອາດຈະທຸກຍາກກວ່ານາງ ບໍ່ມີໃຜອູ້ມຊູ....ນັບວ່ານາງເປັນຄົນໜ້າດ້ານໜ້າເຫລືອມທີ່ສຸດ...

ສົມພອນຢາກຫົວໃສ່ໜ້ານາງແຮງໆ ຈັກບາດ.... ເຂົາຜູ້ຄຶດວ່າ ຊິໄດ້ຮູ້ຈັກກັບນາງໃນນາມເປັນອາຈານສອນວິທຍາລັຍ ດຽວກັນ... ນາງກາຍມາເປັນນັກຮຽນຍິງພູມບັນຍາອ່ອນ.... ຫາກເຂົາຈະບຳເພັນຕົນເປັນຄຣູທີ່ດີ ຊື່ສັດ ສເມີຕົນ ສເມີປາຍ.... ນາງມາລັຍສິຈະເສັງຂຶ້ນຫ້ອງໄດ້ບໍ່ນໍ້ ທ້າຍປີນີ້ ? ຫລືຈະຫລຸດຟັ່ງອອກໄປເລີຍ ຫລືຈະ....?

ນັ້ນມັນແລ້ວແຕ່ຈິດສຳນຶກ ໃນອາຊີບການເປັນຄຣູຂອງເຂົາຕ່າງຫາກ....■

## *ຜູ່ຊາຍ ຄື ຜູ່ຊາຍ*

ອຸທິມ ບຸນຍະວົງສ໌ ຂຽນຣາຍງານກ່ຽວກັບຄ່າໃຊ້ຈ່າຍສເນີຜູ່ຈັດການ ຫລັງຈາກໄປເຮັດຂ່າວສາຣະຄະດີບຸນຊ່ວງເຮືອຫລວງພຣະບາງ ແລະໃນບັນຊີໃຊ້ຈ່າຍອັນສຸດທ້າຍ ມີຂໍ້ຄວາມສຳຄັນວ່າ "ຄ່າຜູ່ສາວ ໔.໐໐໐ ກີບ"

ຜູ່ຈັດການເລີຍເອີ້ນອຸທິມເຂົ້າໄປແນະນຳ

— ຂ້ອຍບໍ່ວ່າຫຍັງດອກ ທີ່ເຈົ້າຈະຕ້ອງຫາກຳໄຣຊີວິດແດ່ໃນບາງໂອກາດ ແຕ່ການຂຽນຣາຍງານວ່າ "ຄ່າຜູ່ສາວ" ນັ້ນ ມັນກະເຫຍືອງຫູ ເທື່ອໜ້າຄວນຂຽນວ່າແນວອື່ນທີ່ພໍຄິດເດົາເອົາໄດ້ວ່າ ມັນໝາຍເຖິງອັນນັ້ນ"

ຫລັງຈາກໄປເຮັດຂ່າວສາຣະຄະດີບຸນວັດພູຕໍ່ມາ ອຸທິມຈຶ່ງຂຽນຣາຍງານວ່າ "໔.໐໐໐ ກີບ ສຳຫລັບຄ່າເຈຣະຈາສັນຕິພາບ ແລະອີກ ໕.໐໐໐ ກີບ ສຳຫລັບຄ່າສັນຍາສງົບເສິກ"

# ຣາຄາຂອງຄວາມຕາຍ

ແລງ ພູຜາເງິນ

ທ່າທາງທີ່ເຂົາຢືນຢູ່ນັ້ນເປັນຕາອັງພິລຶກ ແຮກເຂົ້າທະຫານໄດ້ຍົດເປັນສິບໂທ ດ້ວຍຄວາມຮູ້ພຽງເສັ້ງແຈກຕຶກ ອາສັຍການລິນເຕັ້ຍ (ເລັ້ຽມີ–ເລັ້ຽຕີນ) ກັບເຈົ້ານາຍຜູ້ໃຫຍ່ ກໍເລີຍໄດ້ເປັນນາຍຮ້ອຍໃນເວລາອັນສັ້ນ ຈົນໂຕເອງດັດແປງກິຣິຍາ ທ່າທາງໃຫ້ສົມກັບຍົດບໍ່ທັນ ຈຶ່ງເບິ່ງເຂີນໆ ບໍ່



*ເຫມາະສົມ ເປັນຜົນໃຫ້ດາວຢູ່ບ່ານັ້ນຫລຸດຄວາມ ໝາຍລົງ*

ເຂົາລະເບີ້ນຜູ່ຈັບເຈ້ຽຈັບສໍ ແລ່ນເຕັ້ນຈັດການເອົາຄົນຂຶ້ນເຮືອບິນ ຊຶ່ງທາງການຈັດມາບໍຣິການຮັບສິ່ງທະຫານແລະລູກເມັຽ ຄົນໂດຍສານຮູ້ຈັກເຂົາໃນນາມ "ທ່ານນາຍຮ້ອຍ"

ເຂົາຢືນຢູ່ຫັ້ນ, ຢູ່ຕີນຂັ້ນໄດຂຶ້ນເຮືອບິນ ເອີ້ນຊື່ຄົນໂດຍສານດ້ວຍສຽງຂຶງຂັງ ຄືຜູ່ມີອຳນາດບາດໃຫຍ່ ສາຍຕາທຸກຄູ່ຈັບຢູ່ທີ່ເຂົາດ້ວຍຄວາມກະວົນກະວາຍ ເພາະຢ້ານຖືກລືມຊື່.

ທອງສີ ຄືຊື່ຜູ່ໂດຍສານຄົນນຶ່ງ ຊຶ່ງລູກສອງຄົນຈ່ອງຊ້າຍຈ່ອງຂວາ ແລະອີກຜູ່ນຶ່ງຍັງອຸ້ມຢູ່ຄາແອວ ນາງເປັນເມັຽທະຫານ ຜົວກຳລັງປະຕິບັດໜ້າທີ່ຢູ່ເມືອງສຸ້ຍ ເຖິງອາທິດນຶ່ງແລ້ວທີ່ນາງມາວົນວຽນເພື່ອຂຶ້ນເຮືອບິນໄປຫາຜົວ ແຕ່ທຸກຄັ້ງມັກຖືກລືມຊື່.

ນາງພາລູກມາແຕ່ເຊົ້າ ເພື່ອຄອຍຂຶ້ນເຮືອບິນ ໄປລົງຊື່ນຳທ່ານນາຍຮ້ອຍ ເພິ່ນຮັບໄວ້ແລ້ວກໍໃຫ້ຄອຍຈັກໜ່ອຍ...

ຖ້າວທຳອິດນາງໄປຄອຍໃຫ້ເພິ່ນເອີ້ນຊື່ ແຕ່ຊື່ຂອງນາງບໍ່ຖືກເອີ້ນ.

ທ່ານນາຍຮ້ອຍວ່າ "ຄົນເຕັມແລ້ວ ຄອຍໄປຖ້ຽວທີສອງຕອນ

ສິບສອງໂມງ"

ແລ້ວນາງກໍພາລູກອົດເຂົ້າອົດນ້ຳ ຄອງຖ້າຢູ່ເດີ່ນບິນນັ້ນ ຕອນສິບສອງໂມງ ມີຣົດໃສ່ເຄື່ອງມາເຕັມ ບິງຄົນນຶ່ງລົງຈາກຣົດ ຍ່າງເຂົ້າໄປຫາທ່ານນາຍຮ້ອຍ ຍິງຄົນນັ້ນເປັນເມັຽນາຍຊັ້ນໃຫຍ່ເຕີບ ອາສັຍອຳນາດຂອງຜົວ ນາງທຳມາຄ້າຂາຍ ໂດຍອາສັຍສົ່ງເຄື່ອງຂອງໄປທາງເຮືອບິນຟຣີ.

ຖ້ຽວທີສອງ ນາງທອງສີບໍ່ໄດ້ໄປອີກ

"ເຈົ້ານາຍສົ່ງເຄື່ອງໄປໃຫ້ທະຫານ ເຮືອບິນໜັກຫລາຍ ຄົນໂດຍສານບໍ່ໃຫ້ເກີນສິບ ຄອງຖ້ຽວໜ້າສາ" ນາຍຮ້ອຍບອກອີກ

ນາງທອງສີເຫັນວ່າ ມີແຕ່ເມັຽເຈົ້າເມັຽນາຍເດີນທາງໄປຖ້ຽວນັ້ນ ກໍເລີຍຈຳໃຈອົດຍ້ອນບໍ່ມີທາງອື່ນໃຫ້ເລືອກ ນອກຈາກຄອງຖ້ຽວໜ້າ.

ແສງແດດຍາມເດືອນຫ້າ ສາດລົງໃສ່ເດີນຊີມັງຂອງສນາມບິນເບີ່ງແຕ່ໄກເປັນແປວຍິບຍັບ ນາງນັ່ງຢູ່ແຄມເດີ່ນກັບລູກ ອາສັຍປີກເຮືອບິນເປັນຮົ່ມກຳບັງແດດ ມືຊ້າຍອຸ້ມລູກນ້ອຍ ທີ່ຫາກໍ່ອອກມາເບິ່ງໂລກໄດ້ຫົກເດືອນ ມືຂວາຈັບວີພັດໄປມາຢູ່ຊ້າໆ ລູກອີກສອງຄົນນັ່ງກິນເຂົ້າຈາກທີ່ຕອງ ຊຶ່ງນາງຊືມາແຕ່ຕລາດຕັ້ງແຕ່ເຊົ້າ ແຕ່ລະຄົນ

ໜ້າຕາມອມແມມ ສົ້ງເສື້ອເກົ່າເປື່ອມສົກປົກແລະຂາດສ້ອຍ ນາງມີເງິນຕິດຕົວຫ້າພັນກີບ ໂດຍຢືມມາຈາກພີ່ນ້ອງເພື່ອໃຊ້ຈ່າຍໃນການເດີນທາງໄປຫາຜົວ ແຕ່ການທີ່ມາຄອຍແລ້ວຄອຍເລົ່າມື້ນັ້ນມື້ນີ້ ນາງໄດ້ໃຊ້ຈ່າຍຄ່າຣົດໄປມາ ແລ້ວຍັງຄ່າອາຫານ ສຳຫລັບຕົວເອງແລະລູກອີກ ນັ້ນຈຶ່ງລົດນ້ຳນອນລົງມາ ເຫລືອສອງພັນກີບ ນາງພະຍາຍາມນັທຍັດທີ່ສຸດແລ້ວ.

ນາງເຄີຍຄິດວ່າ ຈະເອົາແຫວນໄປຂາຍ ເພື່ອໃຫ້ໄດ້ເງິນມາແລ້ວຈະເອົາຈ້າງທ່ານນາຍຮ້ອຍເພື່ອເພິ່ນຈະໄດ້ໃຫ້ໄປໄວໆ ແຕ່ມາຄິດວ່າມັນເປັນສົມບັດອັນສຸດທ້າຍ ແລະເປັນມູນມາຈາກພໍ່ແມ່ ນາງຈຶ່ງບໍ່ກ້າຕັດສິນໃຈ ນາງຍອມທົນທຸກຄອຍຕໍ່ໄປ ໂດຍຫວັງວ່າຄົງໄດ້ໄປໃນອັນໃດອັນນຶ່ງ ຄົນທີ່ຕົກຄ້າງເຊັ່ນນາງກໍມີຢູ່ອີກຫລາຍຄົນ ລ້ວນແຕ່ເມັຽທະຫານຊັ້ນຜູ້ນ້ອຍທີ່ທຸກຈົນ ເຂົາເຈົ້າລົມກັນວ່າ ການທີ່ຈະໃຫ້ໄດ້ໄປໄວທັນໃຈນັ້ນຕ້ອງເອົາເງິນຍັດທ່ານນາຍຮ້ອຍ ແຕ່ເຂົາເຈົ້າບໍ່ມີເງິນໃນກະເປົາຫລາຍ ພໍທີ່ຈະຈ່າຍໄດ້ ດັ່ງນັ້ນຈຶ່ງຕ້ອງຄອງຖ້າຫາແຕ່ບາດໂຊກຢ່າງລົມແລ້ງໆ.

ເປັນທີ່ຮູ້ຈັກກັນດີວ່າ ທ່ານນາຍຮ້ອຍຮັບສິນບົນຈາກຄົນໂດຍສານ ສັງເກດຈາກເພິ່ນເອົ້ານົວທົວມ່ວນ ແລະຕ້ອນຮັບພວກພໍ່ຄ້າແມ່

ຄ້າດ້ວຍອາຣົມດີ ທ່ານນາຍຮ້ອຍມາປະຈຳການຢູ່ບ່ອນນີ້ ບໍ່ເຖິງຫົກ
ເດືອນເພີ່ນກໍມີຣົດຈັກຄັນໃໝ່ຂີ່ເຈີດຊ້າຍເຈີດຂວາ ສູບຢາຣາຄາແພງ
ເຂົ້າຮ້ານອາຫານສັ່ງແບບບ່ອັນ ແລະເມົາເກືອບທຸກແລງ.

ຖ້ຽວທີສາມເຮືອບິນເກີດຕິດຂັດ ຕ້ອງສ້ອມແປງ ການເດີນ
ທາງເລື່ອນໄປມື້ອື່ນ ນາງທອງສີກັບລູກ ຫອບເຄື່ອງຂອງກັບບ້ານດ້ວຍ
ຄວາມຜິດຫວັງອີກເທື່ອນຶ່ງ.

ມື້ຕໍ່ມາ...ນາງເຂົ້າໄປຫາທ່ານນາຍຮ້ອຍ ຂໍຮ້ອງໃຫ້ເຂົາເຫັນ
ໃຈ ເອົາຂຶ້ນເຮືອບິນເບີ້ນກໍຣະນີພິເສດ ນາງຈົກເງິນໃຫ້ຫ້າຮ້ອຍກີບ
ແຕ່ເຂົາປະຕິເສດແລະບອກວ່າຈະພະຍາຍາມຊ່ອຍ.

ແນ່ນອນເງິນຫ້າຮ້ອຍນັ້ນບໍ່ມີຄວາມໝາຍສຳຫລັບເຂົາ

ເວລາແປດໂມງ ນາງກັບລູກຈຶ່ງໄດ້ຂຶ້ນເຮືອບິນເບີ້ນຄົນສຸດ
ທ້າຍ ຮູ້ສຶກດີໃຈຢ່າງລົ້ນເຫລືອທີ່ຈະໄດ້ໄປເຫັນໜ້າຜົວ ຄົນໂດຍສານ
ປະຈຳທີ່ຮຽບຮ້ອຍແລ້ວຍັງຖ້າແຕ່ນັກບິນ ຂນະທີ່ຄອງຖ້າຢູ່ນັ້ນເອງ ຣົດ
ຈິບຄັນນຶ່ງແລ່ນມາຈອດໃກ້ໆເຮືອບິນ ຊາຍສາມຄົນທ່າທາງເບີ້ນເຈົ້າ
ເບີ້ນນາຍລົງຈາກຣົດ ແລ້ວຍ່າງໄປຫາທ່ານນາຍຮ້ອຍ

"ຈັ່ງໃດເອີຍ ພັກພວກ" ທ່ານນາຍຮ້ອຍວ່າ

ມີການລົມກັນຢູ່ດົນເຕີບ ຕໍ່ມາທ່ານນາຍຮ້ອຍຂຶ້ນໄປເທິງເຮືອບິນ ແລ້ວພານາງທອງສີພ້ອມດ້ວຍລູກ ລົງມາກັບຄົນໂດຍສານອາສາມາໜ້ອຍອີກຄົນນຶ່ງ ຊາຍສາມຄົນນັ້ນຂຶ້ນໄປແທນ.

"ເຈົ້າມີລູກຫລາຍຄົນ ຖ້າໄປຖ້ຽວພ້າສາ...ເຈົ້ານາຍເພິ່ນມີອຽກ" ທ່ານນາຍຮ້ອຍອະທິບາຍສັ້ນໆ ພໍມັນດີ

*ມື້ນັ້ນນາງຄອຍຈົນຂ່າຍ ກໍບໍ່ເຫັນເຮືອບິນລຳນັ້ນກັບມາ ຫລືວ່າມັນຈະບໍ່ມີວັນກັບມາໃຫ້ໄດ້ເຫັນອີກເລີຍ.*

ນາງແຄ້ນໃຈຫລາຍ ທີ່ທ່ານນາຍຮ້ອຍເຮັດກັບນາງປານບໍ່ແມ່ນມະນຸດ ແຕ່ແລ້ວຄວາມແຄ້ນກໍລືບຈາງໄປ ເກີດມີຄວາມຕື່ນເຕັ້ນດີໃຈເຂົ້າມາແທນທີ່ຊົ່ວຂນະນຶ່ງ ເມື່ອມີຄົນບອກວ່າ *ເຮືອບິນລຳນັ້ນເກີດອຸບັດເຫດ ຕົກລົງກາງປ່າແລ້ວໄຫມ້ເຫລືອແຕ່ຊາກ* ຄົນໃນເຮືອບິນຕາຍໝົດກ້ຽງ

ນາງຮູ້ສຶກສົງສານຜູ້ເດີນທາງທຸກຄົນ ທີ່ປະສົບເຄາະຮ້າຍ

ແລະນຶກຂອບໃຈທ່ານນາຍຮ້ອຍທີ່ຊ່ອຍເອົານາງ ອອກມາຈາກຄວາມຕາຍພ້ອມດ້ວຍລູກໆ

ຈາກໂສກນາຕກັມດັ່ງນີ້ ທ່ານນາຍຮ້ອຍເປັນບຸກຄົນທີ່ຖືກກ່າວຂວັນ ນິນທາຢ່າງໜາຫູ ແລະຖືກນຳໄປສອບສວນ ເພາະປາກົດຕໍ່ມາວ່າ ຜູ້ທີ່ເສັຽຊີວິດຫລາຍຄົນ ບໍ່ມີຊື່ໃນບັນຊີຜູ້ໂດຍສານ.

ສ່ວນຜູ້ທີ່ມີຊື່ໃນບັນຊີ ລາງຄົນກັບບໍ່ຕາຍ ເພາະບໍ່ໄດ້ເດີນທາງໄປນຳເຮືອບິນຖ້ຽວນັ້ນ ນາງທອງສີພ້ອມດ້ວຍລູກໆ ມີຊື່ໃນຈຳນວນຜູ້ຕາຍດ້ວຍ.

*ນາງຮູ້ແຕ່ມື້ນັ້ນວ່າ ເງິນຫ້າຮ້ອຍກີບນີ້ ຊື້ຄວາມຕາຍບໍ່ໄດ້ເລີຍ.*

24/VII
ຫ້າມຈຳໜ່າຍ

# ໜາວ

ໜາວລົມ ຕຸ້ມຫົ່ມຜ້າ ຜືນໃຫຍ່ເຈົ້າໜາວ
ໜາວໝອກ ໜາວລົມພັດ ຜ່າງໄຟ–ນອນສ້ອມ
ມາມາລ້ອມ ໜາວມິແກ້ເມື່ອຍ
ໜາວໃຈ–ໜາວຄູ່ຊ້ອນ ສແວງຊູ້ຄູ່ນອນ ອຸ່ນເອີຍ

“ ປາໃນ ”

# ຫົວລົມໜາວ

ປາໄບ

*ພໍຄາວແລງຫັ້ນ......*

*ແມ່ນາຍແຫວນ* ຕ່າວມາແຕ່ໄປຂາຍເຄື່ອງໃນວຽງ

ຂ່າວວ່າ ເພິ່ນພອມປຸກຜາມສ້າງຮ້ານບຸນທາດ.

ດີວ່າບຸນທາດປີກາຍກໍ່ຫາແຕ່ແລ້ວອ່າງຫັ້ນມໍ່ງ

ແລ້ວບຸນທາດແລ້ວກໍ່ກ່ຽວເຂົ້າ

ກ່ຽວເຂົ້າແລ້ວເອົາບຸນພະເຫວດ

ຕໍ່ໄປບຸນຫົດນ້ຳ

ບຸນບັ້ງໄຟ

ຝົນບໍ່ມາຟ້າບໍ່ດີ

ດອງຈົນເດືອນເຈັດ ນໍ່ຊິດບັຈັ້ງນໍໄດ້ກ້າ

ຮອດນີ້ເຂົ້ານັນສາ ມາຜູ່ລາງດົນຍັງບໍ່ທັນໄດ້ດໍານໍຕົ້ນກໍມີ

ຕາຍແຕ່ວ່າ ແປດສອງທົນສາມທົນ

– ແປດແລ້ວແປດອີກ ທົ່ງມາແຫ້ງຄ່ອງໆ

ມາໂມນຍັງບໍ່ທັນໄດ້ດໍາຊ້ຳ ກໍພໍດີບຸນທໍ່ເຂົ້ານ້ອຍ

ແລ້ວກໍຮອດບຸນເຂົ້າສາກ

ຫາແຕ່ອອກນັນສາຍັງບໍ່ທັນຮອດສົນ

ຊ້ຳວ່າຫ້າງເອົາບຸນທາດອີກແລ້ວ

ນອນນີ້ເອົາບຸນກະຖິນນອນມ່ອນ

– ມື້ນີ້ງລະເບິ່ງຊິເນວັດທົ່ງ ມື້ນີ້ງລະຟັງເສບວັດດົງ

ແຕ່ກໍບໍ່ມ່ອນດັກທໍ່ກະຖິນປີກາຍ

*ປີກາຍນີ້ມີຕາຍແຕ່ກະຄິນຜູ້ແທນ*

ວ່າແຕ່ໄທບ້ານເຕືອງວ່າຢາກເບິ່ງຢາກພົ້ງຫຍັງ ແມວບໍ່ເຄີຍ

ເຫັນກະໄດ້ເຫັນ ບໍ່ເຄີຍເບິ່ງກະໄດ້ເບິ່ງ

ຍາມໄດ້ແລ້ວດີປີ້ ໃຫ້ວ່າຈ້ອຍອັບ

ຜູ້ໄດ້ກະບໍ່ເຫັນ ບໍ່ໄດ້ກໍບໍ່ເຫັນ

ພໍປານກັນດີເກົ່າ ຕາຍມັນນັ້ນແຫລະ

ບໍ່ມີໃຜດີສົມອວດດອກ

ແພງສູ້ຢ່າໃຫ້ຫົວເພິ່ນໄດ້ຈັກຄົນນັ້ນລະສົມ

× × ×

ບັບແປບນ້ອຍລະວ່າຫ້າງເອົາບຸນທາດອີກແລ້ວ

ສົມພໍວ່າເຂົ້າຍາມແລງ ມັນສິເຢັນໆອາດໃດອາດນຶ່ງ

ດີຊິແມ່ນ *"ຫົວລົມໜາວ"* ພວມມາຮອດ ດີຜູ້ເຖົ້າເພິ່ນວ່ານັ້ນແຫລະ

ກະຂອງແມ່ນ ສົມພໍເພິ່ນຫ້າງເຮັດດອງກັນໄວ້ແລ້ວກໍຫລາຍເຮືອນ ຂອງວ່າຊິເຂົ້າເດືອນສິບສອງອີກບໍ່ຈັກມື້ນີ້ແລ້ວ

ນີ້ກ່ອນໜັ້ນເພິ່ນກໍມາຂໍອີອ່ຳ

ຈໍາວ່າຜູ້ມາຂໍແມ່ນຈຸທະຫານຢູ່ຫລັກຊາວເອັດ ລາງຄົນວ່າເມັຽຢູ່ວຽງເພິ່ນກະມີ

ລາງຄົນວ່າບໍ່ແມ່ນ

ມີບໍ່ມີຕາຍກະຊ່າງ ເພາະແນມວ່າລ້ຽງຮອດກອດຫຸ້ມ

ເທາະແມ່ນວ່າຢ່າປະໃຫ້ເປັນຮ້າງ

ເມັຽຢູ່ວຽງກະເມັຽຢູ່ວຽງແຫລະ

ເມັຽພີ້ ກະເມັຽພີ້ໃຜຊິວ່າມັນຂວາງ

× × ×

ຄິດດູຕົນແຕ່ອ້າຍທິດຕາວນັ້ນແຫລະ

ລົມອີອ່ຳມາຕັ້ງສອງປີ

ລົມພານຕ້ອງຕອງແຕມັນບໍ່ແມ່ນຊິແຫລະ

ແມ່ນວາສນາລາວບໍ່ຮອດອີອ່ຳ ຫລືວ່າວາສນາອີອ່ຳບໍ່ຮອດ
ອ້າຍທິດຕາວກໍບໍ່ຮູ້ ຈັ່ງວ່າບໍ່ໄດ້ກັນ

× × ×

ຜູ້ໄດ້ເຮັດດອງກະເຮັດ ຂ້ອຽເຮັດພໍປານຫົວເສິກເຂົ້າບ້ານ

ບໍ່ທັນເດືອນສິບສອງ ດອງເດືອນຍີ່–ເດືອນສີ່–ເດືອນຫົກ
ດອງເດືອນແປດກໍຍັງໄດ້

ເຮັດໃຈວ່າວເຢັນແດ່ແຫລະຕໍ່ດີ

*"ຄວາມມັກຄວາມຮັກແມ້ງຮ້ອນເຮັ່ງບໍ່ດີດາຍ"*

ອີແມ່ຕູ້ວ່າຄວາມນີ້ເລື້ອຍໆ

ຟາກແຕ່ແມ່ນຄວາມອີແມ່ຕູ້ພຸ້ນແຫລະ

ອີໃດຍືນຟ້າວບໍ່ຟັງຄວາມເຖົ້າບູຮານເພິ່ນສອນສັ່ງ ນີ້ຫວັງຈ້ອງບໍ່ກາງຕວ່າສາວໄທເຮົານ່ະ !!!

ລອງດຽງໆສຶກສານຳອີ່ແມ່ວ່າຊິຈັບເປັດໄປຂາຍ ເອົາເງິນຊື້ຜ້າຕັດເສື້ອນຸ່ງເອົາບຸນຈັກພື້ນ ເພິ່ນກະວ່າແພງໄວ້ຂາຍຊິເຂົ້າສາມກິນ

ປີນີ້ຝົນແຫ່ງບໍ່ຕົກ ເຂົ້າໄຮ່ຕາຍຢືນ

ເຂົ້ານາໂຄກກໍ່ຕາຍໂຄມມານ

"ມຶງຫວັງໄດ້ເຂົ້າຈັກບຸງ...! ຊິກິນກຸ້ມຈັກມື້ ? ຄິດເບິ່ງແດ່ !"

ອີ່ແມ່ວ່າ

ແລ້ວລາວກໍ່ວ່າຕໍ່ອີກຫລາຍຄວາມ ມີແຕ່ຄວາມຊິບໍ່ໄດ້ເສື້ອເອົາບຸນ

ເຫັນທ່າວ່າຊິໄດ້ໃສ່ເສື້ອເກົ່າຜືນນຸ່ງໄປເອົາບຸນທາດປີກາຍ ໄປເອົາບຸນທາດປີນີ້ອີກບໍ່ແພ້ແລ້ວ

× × ×

ເວົ້າພົ້ນທິດຕາວກັບອີ່ອ່ຳ ກໍ່ເລີຍຄິດພໍ້ຄວາມອີ່ອ່ຳມັນເຄີຍລົມຂວັນສູ່ຟັງ

"ທິດດັກແດ້ຕາຍມັນມັ້ນ ກູບໍ່ເອົາດອກ ບ້ານເພິ່ນຊິຫຍັນ !"

ອີ່ອ່ຳວ່າ

ໃຜກໍ່ຍັງບໍ່ເຂົ້າໃຈວ່າອີ່ອ່ຳມັນຢາກວ່າຫຍັງ ໃຫ້ທິດຕາວ

ແຕ່ປ່າງພອມບອດສິກໃໝ່ ເພິ່ນກະຊ່າກັນວ່າຍາປູ່ຈ່ຳທິດຕາວສິກຍ້ອນວ່າລາວເບັ້ນ....ເບັ້ນອັນນ່າ ເບັ້ນມອງ ເຮັດຫຍັງບໍ່ໄດ້ບອດ

ເພິ່ນຄະລຳບໍ່ໃຫ້ບອດ

ຂ້ອຍບໍ່ເຂົ້າໃຈວ່າ ເປັນຫຍັງຜູ້ຊາຍເຮັດບໍ່ໄດ້ເພິ່ນຈັ່ງຄະລຳບໍ່ໃຫ້ບອດ ບອດແລ້ວກໍບໍ່ໄດ້ໄປເຮັດຫຍັງໃຜ.... ເຮັດບໍ່ໄດ້ຕ່ວ່າແຮງດີຜ້າເຫລືອງມັນຈັ່ງບໍ່ຮ້ອນ

ສິກໄດ້ບໍ່ດົນ ທິດຕາວກໍໄປຫລອນກຸມອີພັດ ຄົນວ່າເຮັດບໍ່ໄດ້ເປັນຫຍັງລາວຈັ່ງໄປກຸມເອົາ ອັນນີ້ກະສົງສັຍ

"ເພິ່ນກຸມສະແດງຊາມຕາຍ ເພິ່ນຊັນແລ້ວ...!"

ອີພັດມັນວ່າ ມັນຊ້ຳແຮ່ງແມ່ຮ້າງແຮ່ງເວົ້າໂກກ

ຄວາມຊ້ຳດັບບ້ານ

ທິດຕາວຄືຊິອາຍ ເລີຍເບີດໄປຢູ່ວຽງຕາງໝີທະຫານ ຢູ່ເກືອບປີ

ຕ່າວມາຖຸ້ຮອນນີ້ ມາຂົມລົມອີອ່າ

ຫລຽວເບິ່ງໂສ້ງເບິ່ງຊົ້ງ ກະອ່າວມີອາດຂົມແດ່

ວ່າງກ່ອນເຂົ້າພັນສາ ອີອ່າກະເວົ້ານ້ອຍສູ່ພັ່ງດີເວົ້າມາແລ້ວມັ້ນແຫລະ...!

ຫລືອີອ່າມັນບໍ່ຍອມເອົາທິດຕາວຍ້ອນແນວນີ້

ໂຕເພິ່ນຊ້ຳຈົ່ມວ່າ

"ໂຕມັນທຸກຍາກສູ້ຄ່າດອງເຂົາບໍ່ໄຫວ...!"

ພັດວ່າທິດຕາວກະດາຍ

× × ×

ເອົ້າໜື້ມໄປບຸນທາດ

ກະຍັງຕັດສິນໃຈບໍ່ໄດ້ວ່າ ຊິໄປຂາຍຂອງພາກະຍ່ອງດີຫລືວ່າບໍ່ຂາຍຫົວມັນຊ້າ

ຫລືຊິບໍ່ໄປຮອດບຸນຫົວມັນຊ້າກະຍັງບໍ່ຮູ້

ລົມກະອ່າວໜາວເຂົ້າມາແລ້ວ

ເສື້ອເອົາບຸນກະຍັງບໍ່ມີ

ເສື້ອກັນໜາວຈັກຜືນກະຍັງບໍ່ມີ

ຄັນໄປ ກະແຄນແດ່ແຕ່ຕອນຍ່າງແຫຍັກັນຢູ່ໃນເຂດບຸນ ຢູ່ກຸເນກມັ້ນແຫລະ !

ບາດເດີກຊອກລົດມາ ຄົນອ່າວບາງແດ່

ລົມຊ້າແຮງຄືວ່າໜາວພິລຶກຂຶ້ນ

ປິນີ້ໄປກໍຕ້ອງຍ່າງດົມຝຸ່ນຄືເກົ່າຕາຍມັນມັ້ນແຫລະ

ດອງແລ້ວກະດອງດາຍ ໜາວແລ້ວກະໜາວອິກ

ຫາຜູ້ມາຊອກເງິນຊື້ເສື້ອສູ່ມຸ່ງກະບໍ່ມີ

ອີອ່າມັນຄືຊິທົນໝາວບໍ່ໄຫວ ສົມພໍມັນບໍ່ຫວັງຄອງທິດຕາວຫັ້ນແຫລະ ເບີ້ນເມັຽນ້ອຍເຂົາກະໄດ້ເບີ້ນ

"ດີກວ່າເປັນສາວແກ່ຂ້າງບ້ານໃຫ້ຄົນເອີ້ນ ອີຄາກບານ"

ກະຢາກວ່າຈັ່ງຊີ້ດມັນຫັ້ນແຫລະ

× × ×

ເວົ້າພົ້ມໝາວລົມໄປບຸນທາດປີກາຍນີ້

ແດນແດ່ແຕ່ໄປນຳພວກລົດເຫລືອງ

ຄ່າລົດກະບໍ່ໄດ້ເສັຽ ຄ່າກິນກະບໍ່ອັ້ນ

ຈ້າບໍ່ພໍາໂຊເພີ້ລາວຄືຊິຄິດດູຕົນຊາດ ເຫັນອ່າຍ່າງບ່າໄຫລ່ທົດຕ່ຍໍ່

ລາວເລີຍຖອດເສື້ອກັນໜາວໃຫ້ຫົ່ມ

ຜ່ອງອຸ່ນຄີງ ຜ່ອງອຸ່ນໃຈ ທີ່ມີຜູ່ບ່າວໃຈດີ ຄິດເຫັນໃຈເຮົາເອື້ອເຟື້ອໃຫ້ຫົ່ມເສື້ອ

ແຕ່ວ່າບາດຕອນເພີ່ນເຫັນໃຈເຮົາແລ້ວມັ້ນຕີ້ລະ ມັນແສນເຈັບແສນແຄ້ນ ຮອດບໍ່ມາໃກ້ມາກາຍ

ລອງມາຮັບໄປບຸນທາດອີກເບິ່ງເທາະປີນີ້

ໂຕຊິບໍ່ຍອມລົງລົດ ຊິນັ່ງມັນຢູ່ເທົ່າຜອງແຈ້ງ ໃຫ້ມັນໄດ້ເຫັນ

ໃຈກັນດັກໆເບິ່ງ ມັນຊິແນ່ຮາວໃດຜູ້ຊາຍ!

ສົມນ້ຳໜ້າແຕ່ລົດມັນໄປຂວ້າຢູ່ບ້ານໃຮ່ນັ້ນແຫລະ ຊາດຄົນກິນແລ້ວລືມໜີ້....ສົມນ້ຳໜ້າມັນບໍ່ຮູ້ຈັກຄະລຳ

ຢູ່ໃນລົດໃນລ້ ມັນບໍ່ເລືອກ

ບາດທີອ້າຍທິດຕາວເຮັດຫຍັງບໍ່ໄດ້ ເພີ່ນຍັງຄະລຳບໍ່ໃຫ້ບອດ

× × ×

ເອົ້າມາດີເຢັນເຂົ້າຈ້ອຍໆພ້ອມບາດ

ດີດແລ້ວກະຢາກໃຫ້ຮອດບຸນທາດໄວໆ

ຢາກໃຫ້ພອກລົດເຫລືອງ ເອົາອົດມາຮັບໄປບຸນທາດອີກ

ໄປແລ້ວ ບາດມາ ໂຕຊິນັ່ງໃນຣົດບໍ່ຍອມລົງ

ໃຫ້ມັນໄດ້ເຫັນໃຈກັນລອງເບິ່ງ

*ແຕ່ເສັຽລໍາກະຍັງເສັຽ*

*ລູກໃຜຜົວໃຜ ມັນຊິຂວາງໂລກເບາະ?*

*ວ່າມັນ ຄືອື່ອໍາ ໂລດເປັນຫຍັງ !!!*

■ ■ ■

## ສາວໃສ້ – ສາວໃຊ້

ຍາເອື້ອຍດີໃຈບໍ່ມີບ່ອນໄວ້ ເມື່ອໄດ້ຂອງຕ້ອນຈາກຜົວຊຶ່ງມາແຕ່ໄປປະຊຸມເມືອງນອກ ເລີຍເອີ້ນສາວໃຊ້ພ້າຕາປມາດບໍ່ໄດ້ຂຶ້ນມາຮັບຮູ້ຮອດໃນຫ້ອງນອນສີຟ້າ...

– ນຶ່ງເຫັນບໍ່ແວວ ອ້າຍເພິ່ນຊື້ແຫວນມາຕ້ອນເອື້ອຍອີກວົງນຶ່ງ ເພັດນ້ຳດີແທ້ ໆ ໄດ໊ນຶ່ງໄດ໊ !

– ໂດຍຂະນ້ອຍເຫັນແລ້ວ ເພິ່ນຊື້ມາສອງວົງແນວດຽວກັນ.... ໃຫ້ຂະນ້ອຍເລືອກເອົາວົງນຶ່ງ...

" ? "



# ໑

# ລູກເຂີຍ

ທິງ ອູບມຸງ

"ຄຳສີ" ລູກສາວກວານບ້ານ ໆ ຫ້ວຍສີ ມັບວ່າ ເກີດມາງາມບໍ່ຜິດພໍ່ຜິດແມ່ ນາງກາຍເປັນດອກກຸຫລາບງາມ ທີ່ມີຫນາມທັງແຫລມທັງຄົມ ປະຈຳຫມູ່ບ້ານນ້ອຍ ຈຶ່ງແສງສີສັງຄົມວິທຍາສາດຈາກນະຄອນຫລວງວຽງຈັນຍັງບໍ່ແຜ່ເຂົ້າມາເກົ່າກວນເທື່ອ.

ຄຳສີໃຫຍ່ກ້າພ້າບານອິ້ມມາເປັ່ນສາວ ພອມ ພ້າຮັກພ້າແພງ

ແຕ່ກະຍັງບໍ່ມີແມງຜູ້ໂຕໃດ ກ້າບິນມາເຈີດເຈື້ຍອົນອຽນໃຫ້ເປັນທີ່ສເນຫາແກ່ນາງ ຈະວ່າຄຳສີບໍ່ມີອາສນາຊິໄດ້ກັບບ່າວໄທບ້ານດຽວກັນກະບໍ່ມີໃຜເດົາໄດ້ ເພາະຄຳວ່າອາສນາ ໃຜ ໆ ກໍມັກເອົາຈົມຕິດປາກຕິດສົບ ແຕ່ໃຜ ໆ ກໍກຳພົດຄວາມໝາຍແນ່ນອນບໍ່ໄດ້.

ນອກຈາກເປັນສຸດແພງສຸດທອງ ຂອງພໍ່ແມ່ແລ້ວ ຄຳສີຍັງເປັນທີ່ຮັກ ທີ່ເອັນດູຂອງຄົນເພີດບ້ານອີກ ນາງເປັນແບບຢ່າງອັນດີແກ່ພວກໝຸ່ມພວກນ້ອຍ ມັກເຮັດວຽກຊ່ອຍພໍ່ແມ່ ບໍ່ຕົວະພໍ່ ຕົວະແມ່ ຫລົບຫລີກໄປຫລິ້ນຕາມຄວາມຄະນອງຂອງວັຍ ທີ່ພອນແຕກໝຸ່ມແຕກສາວ.

ແຕ່ມື້ນີ້ຄຳສີຈຳເປັນຕ້ອງກັບຄືນເຮືອນລຸນໝູ່ ຍ້ອນທິດພົດຜູ້ເປັນພໍ່ ແລະ ນາງແກ້ວຜູ້ເປັນແມ່ ໄດ້ເນື່ອຊ່ອຍບຸນກິນດອງລູກຊາຍທິດພັນ ກັບລູກສາວລຸງດຳ ຄຳສີຈຶ່ງໄດ້ເຮັດວຽກຕໍ່ຢູ່ສອນຕີນດົງຈົນເທົ້າແລງຜູ້ດຽວ....

ພໍ່ຕາເວັນກາຍເປັນສີແດງເສົ້າ ໆ ຍ້ອນບັງພູບັງຜາລົງ ຄຳສີກໍຈັດແຈງມັດທໍ່ ເອົາທໍ່ເຂົ້າທໍ່ປາພາຍ ໃສ່ຫລັງຍ່າງອອກຈາກຖຽງນ້ອຍ....

ແລງມື້ນີ້ບໍ່ມີຟ້າ ຝົນລົມພັດເອົາສາເລີຍ ທັງໆທີ່ເປັນຍາມເດືອນແປດເກືອບເພັງ.... ສຽງແມງໄມ້ນົກກາຮ້ອງສັ່ງລາການຈາກໄປ

ຂອງຕາເວັນດັ່ງໄປທົ່ວທິບ.. ແຕ່ຕອນທີ່ຄ່ຳສິຊິມັ້ນຕືມດົງອອກໄປໃສ່ມາ ນາງຄືຜາກົດເຫັນຄົນນອນຢູ່ຕໍ່ໜ້າ.... ທຳອິດນາງກໍ່ຄິດຢ້ານ ຢ້ານແມ່ນຄົນຕາຍກາຍເປັນຜີມາຫລອກຫລອນນາງ.... ແຕ່ຍ້ອນນາງເປັນຄົນເຊື່ອເຫດເຊື່ອຜົນ ນາງເລີຍບັດຄວາມຄິດແບບໂງ່ ໆ ນັ້ນຖິ້ມ ນາງຄິດວ່າຄົນຕາຍແລ້ວ ເຂົາເຈົ້າເອົາໄປເຜົາແລ້ວ ຈົນກະດູກກະເກືອບບໍ່ເຫລືອໃຫ້ເຫັນ ຈັ່ງໃດຊິມາຫລອກມາຫລອນນາງໄດ້...ນາງຍັງເປັນຄົນໝັນໃຈໄດ້ ມີຄວາມຮູ້ສຶກນຶກຄິດຢູ່....ຫລືຖ້ານາງຮູ້ເຣື່ອງຊີວິດຫລາຍກວ່ານັ້ນນາງອາດຊິຄຶດຮອດວ່າ ແມ່ນແຕ່ຊິມາເຂົ້າຜັ້ນ ບອກເບີ ບອກຫວຍຫລືບອກໂຊກລາງ ກະຕ້ອງບໍ່ໄດ້ແນ່ນອນ... ແຕ່ນີ້ ນາງບໍ່ທັນເປັນຄົນຈະເຣີນເທື່ອ ນາງກະເລີຍຄຶດ ໃກ້ ໆ ແຕ່ແບບຂອງນາງ...

ນາງກັ້ນອົກກັ້ນໃຈ ຍ່າງເຂົ້າໄປຫາຮ່າງນັ້ນ... "ໂອະ ! ຍັງທັນໃຈມືນຕາຢູ່ຕ໋ວ່າຫັ້ນ" ນາງຄິດ....ຮ່າງນັ້ນຄົງໄດ້ຍິນສຽງຄົນຍ່າງມາໃກ້ເລີຍພຍາຍາມຫລຽວມາເບິ່ງ.... ເຂົາພະຍາຍາມອ້າປາກຂໍກິນນ້ຳ ແຕ່ສຽງຄ່ອຍຫລາຍ ຈົນຄຳສີຕ້ອງຄູ້ເຂົ່າລົງ ເອົາຫູງ່ຽງລົງຟັ່ງຈຶ່ງເຂົ້າໃຈ....ນາງແລ່ນໄປຕັກເອົານ້ຳຫ້ວຍໃກ້ ໆ ມາໃຫ້ຊາຍຄົນເຈັບກິນ...ພໍໄດ້ນ້ຳເຊັດຫູເຊັດຕາ ເຂົາກະເລີຍມີແຮງ ນາງຄ່ອຍໂຊມເຂົາຍ່າງກັບຄືນໄປຖຽງນ້ອຍຂອງນາງ...

ຫລັງຈາກ ທີ່ນາງແປງບ່ອນ ແປງທີ່ ໃຫ້ເຂົານອນດີແລ້ວ ນາງກະເລີຍບອກວ່າ ນາງຈິຕ້ອງເມືອເມາະຕາເວັນກະຫລຽວບໍ່ເຫັນດິນແລ້ວ....

“ແລ້ວຖຽງນີ້ມີໃຜມາເຊົາທຸກມື້ບໍ່ ?” ຄົນເຈັບໂງຫົວຂຶ້ນຖາມ

“ກະມີແຕ່ພໍ່ກັບແມ່ນັ້ນລະ ເພິ່ນມາເຮັດວຽກຢູ່ນີ້ທຸກມື້” ຄຳສີຕອບຊື່ ໆ

“ແຕ່ຂ້ອຍມີອັນນຶ່ງຈິບອກເຈົ້າ.... ຄືວ່າຂ້ອຍບໍ່ຕ້ອງການໃຫ້ໃຜຮູ້ວ່າ ຂ້ອຍມານອນເຈັບຢູ່ພີ້.... ບໍ່ຕ້ອງຖາມຂ້ອຍ ດອກວ່າຍ້ອນເຫດຜົນຫຍັງ...ບາດຂ້ອຍເຊົາດີແລ້ວ ຂ້ອຍຈິເລົ່າໃຫ້ຟັງດອກ ແຕ່ຕອນນີ້ ເຈົ້າຈະຊ່ອຍເຫລືອຂ້ອຍໄດ້ບໍ່” ສຽງຜູ້ເວົ້າຄ່ອຍລົງ ໆ ຈົນເກືອບຈິບໍ່ໄດ້ຍິນ.

“ຄືຈິບໍ່ເປັນຫຍັງດອກ.... ແຕ່ເຈົ້າເຊົາເວົ້າ ສາກ່ອນ ຈັກໜ້ອຍຈິເມື່ອຍຫລາຍໂພດ.... ມື້ນີ້ພວກຂ້ອຍກະແລ້ວວຽກຢູ່ນາທາງພີ້ແລ້ວ ມື້ອື່ນພໍ່ແມ່ເພິ່ນກະຈິໄປເຮັດນາຟາກດົງເບື້ອງກົງກັນຂ້າມພຸ້ນ.... ແຕ່ຂ້ອຍຈິເອົາຢູກຢາ ເຂົ້ານ້ຳມາໃຫ້ເຈົ້າຕລອດດອກ... ບໍ່ຕ້ອງຫ່ວງແລະຂ້ອຍກະຈິບໍ່ບອກໃຜ ຕາມຄວາມເຈົ້າຂໍຮ້ອງນັ້ນແຫລະ....”

ເມື່ອຄຳສີເວົ້າອອກມາສຸດແລ້ວ ຄົນເຈັບກໍດີໃຈເຫລືອທີ່ຊິພັອນມາໄດ້ ນາງຄືຈະບໍ່ຣະແວງເຣື່ອງໃດໝົດ ນາງມີແຕ່ຢາກຊ່ອຍເຂົາທໍ່ນັ້ນເອງ ແຕ່ເຂົາຄົງເໝີດແຮງຫລາຍ ຈຶ່ງເລີຍມ້ອຍຫລັບໄປ

ຄຳສີກັບເຂົ້າມາຮອດບ້ານກໍຄ່ຳມືດຈືດຕາຄົນເຕີບແລ້ວ ແຕ່ມື້ນີ້ບໍ່ຕ້ອງແຕ່ງແນວກິນ ເພາະໄທບ້ານ ເກືອບທຸກຄົນໄປຊູມກັນຢູ່ເຮືອນດອງເພີດ ນາງພ້າວອາບນ້ຳແຕ່ງໂຕ ໄປຮ່ວມມ່ວນຊື່ນນຳໝູ່ນຳພວກຈົນເດິກຈຶ່ງກັບມານອນ

ຄືນນັ້ນ ເປັນຄືນທຳອິດທີ່ຄຳສີ ນອນບໍ່ຫລັບນັບແຕ່ເປັນສາວຂຶ້ນມາ.... ນາງຍັງຄິດເຫັນຊາຍຄົນເຈັບຄົນນັ້ນໄດ້ຕິດຕາ.... ນາງຫາກໍເກີດມີຄວາມຄິດ ສົງສັຍໃນເຫດການເປັນເທື່ອທຳອິດໃນຊີວິດ....ເປັນຫຍັງຊາຍຄົນນັ້ນຈຶ່ງມາເຈັບປາງຕາຍຢູ່ບ້ານນີ້ ເພາະບ້ານນີ້ບໍ່ຄ່ອຍມີຜູ້ຮ້າຍອ້າຍຂະໂມຍມາປຸ້ນມາຈີ້ຈັກເທື່ອ ເພາະຊາວບ້ານພາກັນຝາກເງິນຝາກທອງຂະເຈົ້າ ໄວ້ໃນຮູບເຂົ້າມ້າຊ້າມປາ ໂຈນຂະໂມຍມາລັກມາປຸ້ນກະຊິໄດ້ກິນໄປເປັນມື້ ແບກເອົາໄຮ່ ເອົານາໄປກະຄົງບໍ່ໄດ້ ....ເງິນບໍ່ເຫັນວ່າຊິຈຳເປັນ ເຊັ່ນມື້ນີ້ເພີ່ນກິນດອງກັນ ກະບໍ່ໃຊ່ວ່າໄດ້ໃຊ້ເງິນພໍກິບ ! ອາຫານການກິນ ກະຜູ້ນັ້ນຜູ້ນີ້ເອົາມາໂຮມກັນແດ່.... ຄ່າ "ຊື້" ຜູ່ສາວກະມາສອງ–ສາມພັນ ເຮັດພິທີຍົກໃຫ້ຄູ່ຜົວເມັຽສ້າງຢູ່ກະທຳກິນ

ສືບສາວຕໍ່ໄປ ແລ້ວຄັນຊິວ່າມີເສິກເສືອຢູ່ແຖບນັ້ນ ກະບໍ່ເຄີຍໄດ້ຍິນຈັກເທື່ອ ເຫດໃດຊາຍຄົນນັ້ນຈຶ່ງມານອນເຈັບຢູ່ຫັ້ນ ?

ຄືນນັ້ນ ຄຳສີນອນປິ້ນຂວ້າມປິ້ນຫງາຍ ມີຄວາມຄຶດປິ້ນໄປວົນມາແຕ່ເຣື່ອງດຽວນັ້ນ ມານ້ອຍຫລັບເອົາຕອນຂ້ອນແຈ້ງຮອດຍາມເຊົ້າ ຄຳສີຕື່ນສວາຍຈົນແມ່ຕ້ອງໄດ້ປຸກ...

"ລູກສາວກູຢູ່ເດີກນີ້ດຽວ ກະລຸກບໍ່ຢາກຂຶ້ນພຸ້ນເນາະ...ຈັ່ງຊັ້ນແຫລະລູກ ຢູ່ເດີກຢູ່ດຶນມັນບໍ່ດີດອກ ສູ້ນອນແຕ່ຫົວຄ່ຳຕື່ນແຕ່ເດິກບໍ່ໄດ້ດອກ ເຖິງຊິອອກເຫື່ອອອກແຮງເພີ້ດນີ້ ກະຍັງຮູ້ສຶກແຂງແຮງຢູ່ ບໍ່ແມ່ນຫວໍ່ະລູກ ? ຕອນນີ້ພໍ່ກັບແມ່ກະຊິອອກໄປນາຟາກດົງ ພຸ້ນແຫລະ....ວຽກນີ້ວານນີ້ແລ້ວເພີ້ດແລ້ວຕວ່າລະ ? ພໍ່ຕີກອງເພນແລ້ວເອົາເຂົ້າໄປສົ່ງແດ່ເນີ້ !"

ພໍ່ກັບແມ່ໄປແລ້ວ ຄຳສີຈຶ່ງສະເດີດຄຶດຮອດຊາຍຄົນເຈັບຂຶ້ນມາ.... ປານນີ້ເຂົາຄົງຈະຫິວເຂົ້າແລ້ວ ບາດແຜເຂົາກະຄືຊິອັກເສບຂຶ້ນອີກ... ນາງເລີຍພ້ຳວລ້າງໜ້າ ລ້າງຕາ ນ້ຽມເຮືອນໃຫ້ສະອາດແລ້ວພ້ຳວຫໍ່ ເອົາເຂົ້າ ປາ ກັບຢູກຢາທີ່ມີໃສ່ຫໍ່ເປີດຍ່າງອອກທາງຖຽງນາທີ່ຜູ້ຊາຍຄົນເຈັບນອນຖ້າ....

ຮອດຖຽງນາ ເຫັນວ່າຄົນເຈັບຍັງບໍ່ທັນຕື່ນ ນາງກະເລີຍປຸກ

ເພາະເຫັນວ່າ ມັນສວາຍພໍແຮງແລ້ວ.... ຮູ້ສຶກວ່າ ຄົນເຈັບສະດຸ້ງຕື່ນພົດແຮງ ເບິ່ງຊົງຄືຈະຕົກໃຈຢ່າງໃດຢ່າງນຶ່ງນີ້ແຫລະ ແຕ່ພໍເຫັນວ່າແມ່ນສາວຄຳສີຜູ້ໃຈດີ ຊ່ອຍເຫລືອເຂົາມື້ວານນີ້ ກໍເລີຍຍິ້ມອອກ...

ອາການຄົນເຈັບບໍ່ມີຫຍັງຮ້າຍແຮງ ເຂົາພຽງແຕ່ຈັບໄຂ້ເລັກນ້ອຍເພາະເພີດແຮງ ແລ້ວກໍມີຮອຍລູກປືນດາດຢູ່ກົກຂາ ຊຶ່ງຄຳສີກໍບັງຄັບໃຫ້ເຂົານອນຢູ່ ບໍ່ໃຫ້ລຸກໄປໃສຍ້ານມັນເປັນຫຍັງຮ້າຍແຮງຂຶ້ນ

ຈົນດຽວນີ້ ຄຳສີຈຶ່ງສັງເກດເຫັນວ່າ ຄົນເຈັບຢູ່ໃນອັຍປະມານ ໔໐ ປາຍ ແຕ່ບໍ່ເກີນສາມສິບແນ່ນອນ.... ຍາມເຂົາຍິ້ມ ແຮ່ງຄືເປັນເດັກນ້ອຍລົງຫລາຍ ແຕ່ສາຍຕາເຂົາຊ້ຳຄົມກ້າ ບອກແວວວ່າ ທັນໂລກທັນຄົນມາພໍແຮງແລ້ວ....

"ຂ້ອຍຂໍອະນຸຍາດຮ້ອງໂຕເອງວ່າ ອ້າຍ ໄດ້ບໍ.... ເພາະຂ້ອຍເບິ່ງຊົງແລ້ວຄືຊິບໍ່ກາຍຊາວ ປີແມ່ນບໍ່ເຈົ້າມ່ະ.... ເຈົ້າຢາກຮູ້ບໍ່ວ່າ ອ້າຍເປັນໃຜ ມາຈາກໃສເປັນຫຍັງ ມາເຈັບຢູ່ພີ້ ?"

"ກະຢາກຮູ້ຢູ່... ແຕ່ຄັນເຈົ້າບໍ່ຢາກບອກ ກະບໍ່ເປັນຫຍັງດອກ.... ຂ້ອຍຍິນດີຊ່ອຍທຸກຄົນສເມີ"

"ບໍ່! ບໍ່ດອກ.... ອ້າຍບໍ່ມີຫຍັງປິດບັງເຈົ້າດອກ.... ແຕ່ຄຶດວ່າບອກໄປແລ້ວກະຄືຊິບໍ່ມີຫຍັງດີຂຶ້ນ ເພາະອ້າຍກັບເຈົ້າຄືວ່າ ບໍ່ເຄີຍມີຫຍັງກ່ຽວກັນມາກ່ອນເລີຍ.... ເຈົ້າຮ້ອງອ້າຍວ່າ ສັກ ກະໄດ້ ຊື່ສັ້ນໆ

ແບບຄົນລາວເຮົາແທ້ ໆ.... ໜ້າທີ່ການງານກະເປັນຊາຍພະເນຈອນຈັ່ງໃດລະ !"

"ແລ້ວເຈົ້າບໍ່ມີບ່ອນນອນ ບ່ອນຢູ່ອາສັຍເປັນຫລັກເປັນແຫລ່ງດີ ໆ ຫວ່າຊັ້ນ ?"

"ເຫັນບໍ່ລະ.... ບອກວ່າບໍ່ຢາກຮູ້ຈັກຫຍັງ....ບອກບໍ່ທັນສຸດຖາມຂຶ້ນແລ້ວເດ.... ບໍ່ ອ້າຍບໍ່ມີບ່ອນຢູ່ເປັນບ່ອນເປັນທີ່ດອກ ບ່ອນໃດພໍນອນໄດ້ກໍສຸບຫົວ ມັນເຂົ້າໄປໂລດ.... ເອີ້ ຕ່າຍ !... ແຖວນີ້ແມ່ນຊື່ບ້ານຫຍັງເກາະ ອ້າຍໂລດຫລົງຫລັບຫູຫລັບຕາຍ່າງມາຕຳ ເອົາຊື່ ໆ ບໍ່ໃຊ່ຮູ້ຫຍັງໃດ່ໜີ້"

"ແມ່ນໃຜກະບໍ່ຮູ້ແຫລະພາຮ້ອງວ່າບ້ານທ້ວຍສີ ແຕ່ກີ່ະພົມມີບໍ່ເງິນ ບໍ່ຄ່ອຍຢູ່ໜີ້ຕິເບາະ !"

"ໂອະ ! ເອົ້າຫລົ້ມກະເປັນເນາະເຈົ້າ.... ເອີ້ເຈົ້າໄດ້ບອກໃຫ້ໃຜຮູ້ບໍ່ລະ ວ່າອ້າຍມານອນເຈັບຢູ່ໜີ້?"

"ເຈົ້າບໍ່ຢາກໃຫ້ຂ້ອຍບອກໃຜຫວ໊ະຊັ້ນ ?"

"ຫື.... ກະບໍ່ວ່າດອກ...." ແຕ່ໜ້າຕາເຂົາບໍ່ບອກວ່າ "ກະບໍ່ວ່າດອກ" ເລີຍ ເຂົາຈຶ່ງເບິ່ງໜ້ານາງຈົນນາງຮູ້ສຶກຍ່ານ ໆ

"ແຕ່ອ້າຍຄິດວ່າ ມັນຍັງບໍ່ທັນຮອດເວລາເທື່ອ.... ອ້າຍຫາກຊິເລົ່າໃຫ້ນ້ອງພັ່ງເພີດດອກ ຫາກຮອດເວລາ ແຕ່ຕອນນີ້ອ້າຍບໍ່ທັນ

ພ້ອມເທື່ອ...."

"ເອີ.... ຂ້ອຍຂໍໂທດຫລາຍ ໆ ເດີ້ທີ່ເຮັດໃຫ້ເຈົ້າບໍ່ດີໃຈ ອີ່ຫລີ ແລ້ວຂ້ອຍບໍ່ທັນໄດ້ບອກໃຜເທື່ອດອກ ເພາະຄິດເຫັນຄວາມເຈົ້າສັ່ງ.... ເຈົ້າພ້ອມຍາມໃດຈັ່ງຄ່ອຍບອກຂ້ອຍກະໄດ້... ແຕ່ດຽວນີ້ຂ້ອຍຕ້ອງເມືອສົ່ງເຂົ້າເພີ່ນກ່ອນເດີ.... ເອີ້ ມີຫຍັງອີກບໍ່ທີ່ເຈົ້າຕ້ອງການນອກຈາກອາຫານການກິນແລ້ວ ?"

"ບໍ່.... ບໍ່ເອົາຫຍັງອີກດອກ.... ຂອບໃຈຫລາຍ ໆ ເນີ້ !"

ແລງນັ້ນຄໍາສີເກືອບເຜືອອອກປາກ ບອກພໍ່ແມ່ຕັ້ງຫລາຍເທື່ອ.... ແຕ່ເມື່ອຄິດເຫັນໜ້າຕາທ່າທາງຂອງ "ອ້າຍສັກ" ແລ້ວ ນາງເລີຍຄິດສີຍ້ານ ໆ ຂຶ້ນມາຈຶ່ງບໍ່ບອກ....

ຄໍາສີອອກໄປຢາມສັກທຸກ ໆ ເຊົ້າ ບັ້ງລົມກັນຈົນສວາຍແລ້ວຈຶ່ງພີໄປເຮັດວຽກທາງອື່ນ.... ຄໍາສີລຶ້ງນິສັຍໃຈຄໍຂອງສັກດີ ຈົນກ້າເວົ້າຢອກລໍ້ຕ່າງ ໆ ນາ ໆ.... ນາງຮູ້ວ່າ ສັກເປັນຄົນມັກມ່ວນ ເວົ້າຕລົກກະເກັ່ງ ຊ້ຳຍັງມີຄວາມຮູ້ "ສູງ" ອີກ ເພາະເຂົາເວົ້າມາຫລາຍ ໆ ແນວທີ່ຄໍາສີ "ບໍ່ຮູ້" ນໍາ.... ເຊັ່ນເຂົາເລົ່າວ່າ ຊີວິດເຂົາສ່ວນຫລາຍວົນວຽນແຕ່ຢູ່ນໍາ "ບາຣ໌"

ສັກອະທິບາຍວ່າ "ບາຣ໌" ແມ່ນບ່ອນທີ່ເຈົ້ານາຍຜູ້ໃຫຍ່ເພີ້ນ

ໄປພັກຜ່ອນຍາມກາງຄ່ຳກາງຄືນ ເພາະກາງເວັນເພິ່ນເຮັດວຽກ "ເພີດ ຊີ້" ແລ້ວສມອງເຄັ່ງຕຶງຫລາຍ....ໄປກິນເຫລົ້າກິນຢາ ເຕັ້ນລຳອອກ ແຮງກາຍໄປ.... ອັນນີ້ເຮັດໃຫ້ຄຳສີຄິດວ່າ ສັກເປັນ "ເຈົ້ານາຍຜູ້ໃຫຍ່" ໄປ ເພາະເຂົາບອກນາງເອງວ່າ ເຂົາໄປບາຣ໌ເລື້ອຍ ໆ....

ເຂົາຍັງບອກອີກວ່າ ເຂົາມີວຽກ "ພິເສດ" ຊຶ່ງເຈົ້ານາຍ "ພິເສດ" ໃຊ້ໃຫ້ເຂົາເຮັດເປັນ "ພິເສດ".... ຄຳສີຄິດຢາກຮູ້ວ່າວຽກ "ພິເສດ" ນັ້ນແມ່ນວຽກຫຍັງ ນາງເລີຍຖາມ....ແຕ່ສັກອຶກ ໆ ອັກ ໆ ບໍ່ຢາກບອກ ນາງເລີຍເຊົາລ່ຳໄລ....

ຜົນສຸດທ້າຍ ສັກບອກວ່າ ເຂົາເປັນຄົນຄຸ້ມກັນການແລກປ່ຽນ ຊື້ຂາຍ "ຢາຝິ່ນ" ຄືຊື້ຈາກພວກຢູ່ເທິງພູ ແລ້ວຂົນໄປໃຫ້ພວກເຈົ້າ ນາຍຕ່າງຊາດທາງໃນເມືອງ ແລ້ວເຂົາເອງກະໄດ້ຮັບຣາງວັນ ງາມຈາກ "ເຈົ້ານາຍ".

ຄຳສີຮູ້ຢູ່ວ່າ ຄົນຕ່າງຊາດນັ້ນ ແມ່ນຫຍັງແລ້ວນາງກະຮູ້ອີກ ວ່າມັນມີຫລາຍຊາດຢູ່ໃນເມືອງລາວເຮົາ ນາງຈຶ່ງຢາກຮູ້ວ່າ ມັນແມ່ນຊາດ ໃດແທ້ ທີ່ມັນເຮັດແນວອັບປີຈັ່ງຊັ້ນ ແຕ່ນາງເກງໃຈສັກ ນາງເລີຍ ຖາມແຕ່ວ່າ ຊາດໃດຊື່ ໆ

"ອ້າຍຮ້ອງຕ່າງຊາດ ອ້າຍໝາຍຄວາມວ່າມີຫລາຍຊາດອີຫລີ ລາງເທື່ອກະຄົນລາວເຮົານີ້ແຫລະ ແຕ່ມັນຊື່ວຈົນບໍ່ສົມວ່າ ຊິຮ້ອງໃຫ້

ເບັ້ນຄົນລາວ ອ້າຍ ເລີຍໂຮມຮ້ອງເບັ້ນ "ຕ່າງຊາດ"

"ແລ້ວໂຕເຈົ້າເອງ ເບັ້ນ "ຕ່າງຊາດ" ນຳເຂົາບໍ່ຊັ້ນ ?"

"ອ້າຍຄິດວ່າບໍ່.... ເພາະຄົນອ້າຍບໍ່ເຮັດ ມັນກະໄປຈ້າງຄົນອື່ນເຮັດຢູ່ດີ ໆ ແພງສູ້ອ້າຍເຮັດເອົາເງິນດີກວ່າ .... ທີ່ຈິງອ້າຍກະບໍ່ຢາກເຮັດດອກ ມັນສ່ຽງຜິດພາດເລັກນ້ອຍ ກະມີຫວັງໄດ້ໄປຫລິ້ນນຳຈ່າຍົມພໍບານໂລດ....

"ແລ້ວເຈົ້າກະຍັງສ່ຽງເຮັດຢູ່ເພາະ ! ຈັກເທື່ອແລ້ວລ່ະທີ່ອ້າຍສ່ຽງ...."

"ເຣື່ອງມັນຍາວ ຄຳສີ... ບໍ່ແມ່ນວ່າເຈົ້າຊິໄດ້ເລື່ອນຊັ້ນຂຶ້ນມາເບັ້ນຫົວໜ້າຄຸມໄດ້ງ່າຍ ໆ... ເຈົ້າຕ້ອງສ້າງບາຣະມີ ຄວາມສາມາດບໍ່ແມ່ນໜ້ອຍ.... ອ້າຍ ສະແດງຫລ່ຽມມັກເລງໃຫ້ຄົນຮູ້ຈັກຄົນຍ້ານ ຕັ້ງປີສອງປີ ຈັ່ງມີຄົນມາຕິດຕໍ່ໃຫ້ໄປເຮັດວຽກ ປານນັ້ນ ກະຍັງໄດ້ເບັ້ນແຕ່ລູກນ້ອງເຂົາຊື່ ໆ ເພາະວຽກນີ້ມັນສຳຄັນເອົາການຢູ່ຄືກັນດີຖ້າພາດເທື່ອນຶ່ງກະເສັຽໄປຫລາຍໆ ລ້ານ....ຄືເທື່ອນີ້ ມູນຄ່າມັນຕອກເຂົ້າໄປຊາວກວ່າລ້ານ ໂຮມເທິງຂອງກະເບັ້ນສີ່ສິບ.... ພວກຕຳຣວດຄືຊິໄດ້ກາຄຳຊອບກັນເບັ້ນແຖວ ໆ....

"ແລ້ວເຈົ້າຄິດຈັ່ງໃດລ່ະ ກັບການຜິດພາດຂອງເຈົ້າເທື່ອນີ້ ?"

"ອ້າຍເສັຽໃຈຫລາຍທີ່ສຸດ ເພາະອ້າຍຄິດວ່າ ຊິເຮັດເປັນເທື່ອສຸດທ້າຍ ແລ້ວຊິເອົາເງິນໄປຕັ້ງເນື້ອຕັ້ງໂຕ ເຮັດແນວມັນຍັງຍິ່ງກວ່ານີ້ແດ່ຈັກໜ້ອຍ........ ຄັນເຈົ້າຮູ້ວ່າ ອ້າຍເປັນແນວນີ້ແລ້ວ ເຈົ້າຊິໄປບອກຕຳຣວດມາຈັບອ້າຍບໍ່ລະພີ້ ?"

"ບໍ່ດອກ ເພາະຂ້ອຍມີໜ້າທີ່ຊ່ອຍຄົນເຈັບ ເຖິງຄົນເຈັບຊິເປັນຄົນຊົ່ວຄົນດີ ເປັນເສດຖີຫລືຂໍທານ ຂ້ອຍກະໄດ້ແຕ່ຊ່ອຍ ຂ້ອຍບໍ່ມັກການທຳລາຍ..."

"ເຈົ້າເວົ້າແບບນີ້ ມັນວ່າເຈົ້າມີຫົວໃຈທີ່ປະເສີດທີ່ສຸດ ແຕ່ເຈົ້າບໍ່ເຂົ້າໃຈໂລກມະນຸດດີແທ້....ອ້າຍ ຢາກເວົ້າວ່າ ເຈົ້າເວົ້າຈັ່ງໃດກະໄດ້ເມື່ອເຈົ້າຍັງມີທາງອື່ນຢູ່ ແຕ່ຖ້າເຈົ້າຖືກບັງຄັບໃຫ້ສູ້ເພື່ອຊີວິດຂອງເຈົ້າເອງ ຫລືແມ່ນແຕ່ເຮັດເພື່ອໃຫ້ສົມກັບຄວາມຢາກຂອງເຈົ້າທ່ນັ້ນ ມະນຸດກະຊິເຮັດທຸກສິ່ງທຸກຢ່າງ ເຖິງຊິຊົ່ວຊ້າປານໃດກໍຕາມພຽງເພື່ອໃຫ້ສຳເຣັດຕາມຄວາມປະສົງ !"

"ເຣື່ອງນັ້ນຂ້ອຍກະຊິບໍ່ເຂົ້າໃຈຢູ່.... ແຕ່ຂ້ອຍກະຍັງຄິດຢູ່ວ່າມະນຸດເຮົາມີຫລາຍ ໆ ທາງດີ ທີ່ຊິໃຊ້ໄດ້ຢູ່ຕ໋ວ່າ !"

"ແຕ່ຢ່າລືມວ່າ ໃຜ ໆ ກະມັກທາງງ່າຍ ແລະສ່ວນຫລາຍ ທາງງ່າຍກະມັກເປັນທາງສັ້ນທາງຊົ່ວ ແຕ່ອ້າຍເອງກະເປັນມະນຸດທີ່ແທ້ຈິງ

ເປັນມະນຸດທີ່ມີກິເລດຕັນຫາເຕັມໂຕ ຂ້ອຍຈຶ່ງບໍ່ມີຄວາມຢາກທັງຫລາຍ"

"ແລ້ວບາດນີ້ເຈົ້າຊິເຮັດຈັ່ງໃດຕໍ່ໄປ....ຂ້ອຍຄິດວ່າ ເຈົ້າຄືຊິທົນຢູ່ແບບນີ້ຕລອດໄປບໍ່ໄດ້ດອກຕີ?'

"ເຈົ້າກະຄືເປັນສາວຊາວບ້ານນອກທັມດາ ຂໍໂທດ ເອີ້ ຖ້າເຈົ້າບໍ່ມັກ ຫລືວ່າ...."

"ບໍ່....ບໍ່ ຂ້ອຍບໍ່ຖືດອກເພາະມັນເປັນຄວາມຈິງ...."

"ແຕ່ອ້າຍຮູ້ສຶກວ່າ ຄວາມເວົ້າຄວາມຈາເຈົ້າ ຄົນເດັ່ນດີຜິດຊາວບ້ານອື່ນ ໆ.... ຖ້າບໍ່ເປັນຄວາມລັບ ເຈົ້າພໍຊິບອກອ້າຍໄດ້ບໍ່ວ່າເຈົ້າໄດ້ຮັບການສຶກສາພິເສດມາຈາກໃສ?"

"ກະບໍ່ໄດ້ຮຽນພິເສດມາແຕ່ໃສດອກ.... ພໍ່ເພິ່ນບໍ່ໄດ້ເປັນຄົນບ້ານນີ້ໂດຍກຳເນີດ ເພິ່ນຍ້າຍມາແຕ່ໃນເມືອງ ເພິ່ນມີປຶ້ມອ່ານຕ່າງ ໆຕິດມານຳຫລາຍແລະເພິ່ນມັກແນະນຳໃຫ້ຂ້ອຍອ່ານເລື້ອຍ ຈົນຂ້ອຍຕິດອ່ານພັງສືທຸກແນວ"

"ອ້າພໍມັນແຫລະ.... ເວົ້າເທື່ອໃດອ້າຍຈົນຊິດາ ຕອບບໍ່ອອກເອົາຊື່ ໆ.... ເຣື່ອງວິຖີຊີວິດອ້າຍ ອ້າຍຄິດວ່າ ອ້າຍຊິຂີດເປັນຄອງໃຫຍ່ເອົາເອງ ບໍ່ໃຫ້ພໍຣະພົມທາງໃດມາແຕ້ມໃຫ້ດອກ ແຕ່ຈັ່ງໃດກະໃຫ້ຂາ

ເຊົາດີກ່ອນ ຄ່ອຍຊິບອກເຈົ້າໄດ້...."

ອັນເວລາຜ່ານໄປ ມັບໂຣມເຂົ້າກັນມັນກະຈົນກາຍເດືອນ.... ຄໍາສິກາຍເປັນຄົນອື່ນ ມັກນັ່ງຄຶດຄົນດຽວມິດໆຈົນພໍ່ແມ່ສົງສັຍ ແຕ່ ເພິ່ນພາກັນຄຶດວ່າ ຄໍາສິເປັນສາວກາຍເຕັມຄົງພໍແຮງແລ້ວ ມັນຄືຊິຢາກ ເປັນຜູ້ໃຫຍ່ນໍາໝູ່ ມັນຄືຊິຫັດເປັນຜູ້ໃຫຍ່ຕິເບາະ...

ອັນທິດນັ້ນ ທິດໝິດບອກກັບລູກສາວວ່າ ເຂົາກັບແມ່ອີ່ນ້ອຍຊິ ເຂົ້າໄປຢາມພີ່ນ້ອງທາງໃນເມືອງຈັກອາທິດສອງອາທິດກ່ອນ.... ແຕ່ເອົາ ຄໍາສິໄປນໍາບໍ່ໄດ້....

ສິບມື້ຜ່ານໄປ ທິດໝິດກັບເມັຽກັບມາບ້ານທ້ອຍ.... ແຕ່ແທນ ທີ່ຊິໄດ້ເຫັນໜ້າລູກສາວຄົນຈົບຄົນດີ ກັບເຫັນຈົນໝາຍນ້ອຍສີຂາວສອດ ຢູ່ຫົວບ່ອນນອນ.

ທິດໝິດກັ້ນນ້ຳຕາ ອ່ານຈົດໝາຍລູກສາວ ສູ່ເມັຽຟັ່ງ

× × ×

ເຖິງພໍ່ແມ່ທີ່ເຄົາຣົບສູງສຸດ

ພໍ່ກັບແມ່ຄົງເສັຽໃຈທີ່ມີລູກຄົນດຽວ ກະເປັນຄົນດີໃຫ້ພໍ່ແມ່ບໍ່ ໄດ້... ຂໍໃຫ້ພໍ່ແມ່ຄຶດວ່າ ບໍ່ມີຄໍາສິຢູ່ໃນໂລກນີ້ແລ້ວ.... ລູກຮູ້ຢູ່ວ່າລູກກໍາ ລັງເຮັດຊົ່ວ ແຕ່ລູກຫາກຍິນດີເຮັດ.... ລູກເຕັມໃຈເຮັດຄວາມຊົ່ວ! ພໍ່

ແມ່ຈິເຊື່ອບໍ່ເຊື່ອກະແລ້ວກັນ ແຕ່ລູກມັກກັບອ້າຍສັກແລະລູກໄດ້ເສັຽໂຕໃຫ້ລາວຕັ້ງແຕ່ທິດແລ້ວ ລູກຈຶ່ງຈຳເປັນຕ້ອງໜີໄປກັບລາວ... ພໍ່ແມ່ບໍ່ຕ້ອງຈຳເປັນຮູ້ດົນ ຈົ່ວ ໆ ຄືອ້າຍສັກດອກ ໃຫ້ຄຳສີດົນຈົ່ວຮູ້ລາວດົນດຽວກະພໍແລ້ວ...

ລາກ່ອນ ບໍ່ຕາຍຄົງໄດ້ມາໄຫວ້ພໍ່ແມ່

ຈາກລູກດົນຈົ່ວ ຄຳສີ.

× × ×

ເມັຽທິດພິດໄຫ້ຈົນນ້ຳຕາບໍ່ມີຈິອອກ ສ່ວນໂຕທິດພິດເອງບໍ່ເຫັນນ້ຳຕາພໍຢົດ.... ສຽງທິດພິດກັດແຂ້ວຈົນແຂ້ວຈິຫັກ... ລາວສືບຖາມຊາວບ້ານວ່າ ຄຳສີມັນໜີໄປໃສ ໃຜ ໆ ກໍເບິ່ງໜ້າລາວເປັນຕາສົງສັຍ

"ອ້າວ ! ກະດຽວວ່າເຈົ້າສົ່ງທ້າວອົນມົນມາ ຮັບອີຄຳສີມັນໄປຫລິ້ນໃນເມືອງນຳເຈົ້າ ພຸ້ນຕວ່າເບາະ ຫລືວ່າສອນທາງກັນ ?"

ໂອ....! ຄຳສີ.... ມຶງກະຍັງຮູ້ຈັກເອົາໜ້າພໍ່ໄວ້ຢູ່ເນາະ...ບໍ່ເສັຽທີພໍ່ໄດ້ສອນໃຫ້.... ແຕ່ພໍ່ກະຍັງຢາກຮູ້ຢູ່ວ່າ ລູກເຂີຍພໍ່ໜ້າຕາມັນຄືໝາບໍ່ ?

× × ×

ຄຳສີຫນີມາຢູ່ເມືອງ "ວຽງຈັນ" ນຳຜົວໄດ້ປະມານສີ່ຫ້າ

ເດືອນກະຈຶ່ງຮູ້ວ່າ ສັກ ເປັນຄົນແນວໃດມາກ່ອນ... ເຂົາມີສັຕຣູຮອບທິດ ແຕ່ກະມີມິດຮອບເມືອງດີກັນ ທັງໝູ່ກິນແລະໝູ່ຕາຍ....

ທັງສອງເຊົ່າຫ້ອງນ້ອຍຢູ່ແຈນຶ່ງ ຂອງວຽງຈັນ ສັກບໍ່ໃຫ້ດຳສີອອກເຮືອນເລີຍ ໂດຍເຂົາອ້າງວ່າ ບໍ່ຢາກໃຫ້ຄົນເຫັນ ເຂົາຢາກໃຫ້ໃຜ ໆ ຄຶດວ່າ ເຂົາຕາຍໄປແລ້ວ ວ່າງຍິງຕໍ່ສູ້ກັບເຈົ້າພ້າທີ່ຕຳຣວດເທື່ອນັ້ນ....ເພາະມີຫລາຍສົບທີ່ຖືກຣະເບີດມືຈົນພ້າຕາມຸ່ນ ຈື່ບໍ່ໄດ້ ສ່ວນໂຕເຂົາເອງອອກໄປຫາເງິນຍາມມືດຄ່ຳ ເພາະຖ້າຊິນອນຢູ່ລ້າຫ້ອງມັນກໍຄົງຊິຮ້ອງ ຄ່າເຊົ່າເຮືອນມັນກະຊິຖາມຫາ... ທັງສອງກະຮັກກັນດີຕລອດມາບໍ່ເຄີຍມີ ເຣື່ອງຜິດຖຽງກັນຈັກໜ້ອຍເລີຍ ແຕ່ເຣື່ອງການເງິນນັ້ນຝືດເປັນທັມມະດາ ເພາະມະນຸດຖືກສ້າງມາໃຫ້ນອນຍາມມືດຄ່ຳ ແລະ ອອກແຮງຍາມມີແສງຕາເວັນ ແຕ່ຍ້ອນຄວາມຈຳເປັນສັກຈຶ່ງຕ້ອງຝືນທັມມະຊາດ....ໃຜໆກໍຄົງຊິຄຶດວ່າ ທຸກສິ່ງທຸກຢ່າງໃນໂລກປ່ຽນແປງໄດ້ສເມີ ແລະກະຕ້ອງປ່ຽນສເມີໄປ "ນອກຈາກຄວາມປ່ຽນແປງທໍ່ນັ້ນທີ່ປ່ຽນແປງບໍ່ໄດ້" ແຕ່ບໍ່ເປັນຈັ່ງຊຸນ ຊີວິດຂອງສັກບໍ່ຍາວພໍທີ່ຊິປ່ຽນເຂົ້າໄປໃນວິຖີຊີວິດໃໝ່ ໄດ້.... ຮ່າງກາຍເຂົາກະເລີຍອ່ອນແອ.... ເມື່ອຮ່າງກາຍບໍ່ແຂງແຮງ ການງານກະລົດນ້ອຍຖອຍລົງ ນັ້ນໝາຍເຖິງເງິນເຂົ້າກໍຫລຸດລົງ... ປີນຶ່ງຜ່ານມາ ດຳສີ ໄດ້ລູກເປັນຜູ້ຊາຍ ການເສຖ

ກໍດອງຄອບຄົວແຮ່ງ ຕົກລົງໄປອີກ ຈົນສັກທົນຕໍ່ໄປບໍ່ໄດ້....

ຫລັງຈາກທີ່ ຄຳສີແຂງແຮງດີແລ້ວ... ສັກພາເມັຽໄປຢາມ "ເຈົ້ານາຍເກົ່າ" ຊຶ່ງປາກົດວ່າເປັນເຈັກຕຸ້ຍ ລົງພຸງ ໜ້າຕາບອກວ່າເປັນຄົນມັກມ່ວນ.... ຫລັງຈາກກິນນ້ຳຊາກັນຕາມທັມນຽມແລ້ວ ຄຳສີບໍ່ຮູ້ສຶກໂຕອີກເລີຍ.... ຕື່ນຂຶ້ນມາອີກຕອນນຶ່ງ ກະເຫັນໂຕເອງ ນອນຄຽງຂ້າງຢູ່ກັບເຈົ້ານາຍຜົວ ບໍ່ຕ້ອງໃຫ້ໃຜບອກ ຄຳສີກະຮູ້ວ່າ ແມ່ນຫຍັງເປັນຫຍັງ ນາງເສັຽໃຈຈົນຊິເປັນບ້າ ແຕ່ຍ້ອນລູກ ນາງຈຶ່ງບໍ່ໄດ້ເຮັດຫຍັງຮ້າຍແຮງລົງໄປ ເທື່ອນັ້ນໄດ້ເງິນມາຫລາຍສິບພັນ ແຕ່ລູກນ້ອຍມີໃຫ້ລ້ຽງ ເງິນຈຳນວນນ້ອຍນັ້ນຈຶ່ງໝົດໄປ.... ສັກ ກະຍັງເປັນຄົນຮັກເມັຽຕາມເດີຍ ເຂົາບໍ່ເຄີຍເວົ້າຮອດເຫດການອັນຊົ່ວຊ້າ ທີ່ເຂົາຈຳເປັນຕ້ອງເຮັດມັນລົງໄປ ເຂົາຕ້ອງເຮັດເພື່ອຫາເງິນມາລ້ຽງຊີວິດຂອງທຸກຄົນ....ເຂົາຂາຍເມັຽໂຕເອງ !

ເມື່ອເງິນໝົດ ເຫດການທຳນອງເກົ່າກໍ່ເກີດຂຶ້ນອີກ.... ມັນເກີດຂຶ້ນເລື້ອຍ ໆ ຈົນຄຳສີອົດບໍ່ໄຫ້ວ.... ນາງຫອບລູກກັບເມືອບ້ານເກີດເມືອງນອນຂອງນາງ.... ເຖິງນາງຊິຖືກດ່າຮ້າຍຈາກພໍ່ແມ່ປານໃດກໍຕາມ ນາງກະຊິຂໍຢ່າງດຽວຄື ໃຫ້ລູກມີຊີວິດຢູ່ໄກຈາກສິ່ງແວດລ້ອມທີ່ເປັນຢູ່ດຽວນີ້ !

ສັກກັບມາເຮືອນເດິກດືນນັ້ນ ຈຶ່ງບໍ່ພົບໜ້າເມັຽຮັກເມັຽແຄ້ນ ເຂົາບໍ່ປາກພໍຄວາມ ແຕ່ເຂົາກະໄດ້ວາງແຜນຈັ່ງໃດຈັ່ງນຶ່ງຂຶ້ນໄວ້ໃນໃຈ....

ທິດນຶ່ງຫລັງຈາກ ຄຳສີ ກັບເມືອບ້ານຫ້ວຍສີ ເຮືອນທິດໝິດ ກໍໄດ້ຕ້ອນຮັບຊາຍໜຸ່ມຄົນນຶ່ງ ເຂົາແນະນຳໂຕເອງວ່າ ເຂົາຊື່ສັກ ເປັນຜົວຂອງຄຳສີ ເຂົາມານຳຫາເມັຽ ເພື່ອຊິຕັ້ງຕົ້ນຊີວິດໃໝ່ ຊີວິດແບບນອກເມືອງ ດີຊີດີສຳຫລັບເຂົາທັງສອງ.

ທິດໝິດ ແນມເບິ່ງໜ້າສັກ ຄືກັບຄົນຈິດໃຈບໍ່ຢູ່ກັບເນື້ອກັບໂຕ... ນ້ຳຕາລົ່ນເຕັມເບົ້າ ແລ້ວຄາງອອກມາວ່າ:

"ໂອ່ ! ນີ້ເບາະລູກເຂີຍກູ....ມຶງມາຊ້ຳເຕີມໄປຈັກໜ້ອຍບັກສັກ ອີຄຳສີມັນທົນໂຮກເໜົ່າເໝັນຈາກໃນເມືອງບໍ່ໄຫວ.... ກູເລີຍໄດ້ຝັ່ງມັນມື້ວານນີ້ເອງ...ພຸ້ນ.... ສົບມັນກູຝັ່ງໄວ້ຖຽງນາຕີນດົງ ບ່ອນມັນພໍ້ມຶງເທື່ອທຳອິດພຸ້ນ..."

ສັກອາງທໍ່ເດື່ອງ ແລ່ນແຕ່ບ້ານຮອດຕີນດົງ ເຂົາເຂົ້າໄປນອນກິ້ງເກືອກໄຫ້ ເທິງຫລຸມຜີຕາຍ...

× × × ×

ທິດໝິດ ເງີຍໜ້າຂຶ້ນ ເບິ່ງຈ່າສານ ນ້ຳຕາລາວໄຫລບໍ່ຂາດສາຍ....

"ຂະນ້ອຍຍິງມັນຕອນນັ້ນຫັ້ນແຫລະ.... ຂະນ້ອຍຍອມຮັບຜິດທຸກຢ່າງ ແຕ່ຂະນ້ອຍສວ່າງໃຈທີ່ໄດ້ຂ້າລູກເຂີຍຂະນ້ອຍຜູ້ນີ້ ດ້ວຍມືຂະນ້ອຍເອງ...."

ເຣື່ອງຂອງທິດໝິດສຸດລົງ ຜູ່ມາພໍ້າງການຕັດສິນພາກັນກົ້ມໜ້າລົງບອກຄວາມສລົດໃຈກັນຖ້ວນໜ້າ ລາງຄົນຮອດນ້ຳຕາໄຫລນຳລາວກໍມີ.... ຫລາຍ ໆ ຄົນພາກັນເອົາໃຈຊ່ອຍ ຢາກໃຫ້ລາວໄດ້ຮັບໃຊ້ໂທດພ້ອຍລົງ.... ສຽງຈ່າສານປະກາດກ້ອງຂຶ້ນະ

"ກ່ອນທີ່ທ້າວສັກ ຈະໄດ້ໄປບ້ານຫ້ວຍສີ ແລະຖືກຂ້າຕາຍຕາມທີ່ເລົ່າມານັ້ນ ທ້າວສັກໄດ້ຮິບໂຮມພັກພວກເຂົ້າປົ້ນຮ້ານຄຳຫລາຍບ່ອນ ແລະ ເຈົ້າພ້າທີ່ຕ່ຳຮອດກຳລັງຕິດຕາມນຳຈັບໂຕກັນຢູ່ຢ່າງກອດຂັນ....ແລະເຈົ້າພ້າທີ່ເຊື່ອວ່າ ທ້າວສັກ ຈິເປັນກຸນແຈໄປຫາຜູ່ຮ່ວມປົ້ນຄົນອື່ນ ໆ ໂຮມທັງພໍ່ຄ້າຝິ່ນໃຫຍ່ ໆໃນເມືອງລາວນຳອີກ... ທ້າວສັກກະເປັນຄົນຊົ່ວ ເປັນຜູ່ຮ້າຍຂ້າຄົນມາພໍ່ແຮງແລ້ວ... ສານຈຶ່ງຂໍຫລຸດໂທດໃຫ້ທິດໝິດ ຮັບໃຊ້ພໍ້ກັນໃນເຮືອນຈຳ ແຕ່ສິບປີກະພໍ....ຈຳເລີຍຊິມີຄຳອຸທອນບໍ່ ?"

ທິດພິດ ເງີຍໜ້າຂຶ້ນເບິ່ງຈ່າສານ ແບບຄົນຕັດສິນໃຈເດັດຂາດແລ້ວ ລາວວ່າ:

"ບໍ່ຂະນ້ອຍ.... ຂະນ້ອຍຂໍພຽງວ່າ ໃຫ້ເຣື່ອງທີ່ຂະນ້ອຍເລົ່າມາເທິງໜຶດນີ້ ຖືກເຜີຍແຜ່ໃຫ້ຜູ້ອື່ນ ໆ ໄດ້ຮູ້ໄດ້ອ່ານນໍາຂະນ້ອຍກໍພໍໃຈ"

■ ■ ■

## ຫອມ

ຫອມກິ່ນ ດວງດອກໄມ້ ຫອມລ່ອງລົມພັດ
ຫອມກິ່ນ ຄຸນຄວາມດີ ກຽດຕິຄຸນຄົນຍ້ອງ
ຫອມຍິ່ງ ມາລາເຣື້ອງ ຫອນລົມລືເລີດ
ຫອມບໍ່ ເປີດບໍ່ສ້ຽງ ເລີງເລື້ອຍຕລອດການ ແທ້ແລ້ວ

"ປາໄນ"

# ຣົດເມລ໌ ບໍ່ປະຈຳທາງ

ດອກເກດ

ຕັ້ງແຕ່ຣົດເມລ໌ປະຈຳທາງເຊົາແລ່ນປະຈຳຕາມຊື່ມັນມານີ້ ຄື ເຮັດໃຫ້ຫລາຍຜູ່ຫລາຍຄົນ ຊຶ່ງອາສັຍຂື້ນ ໆ ລົງ ໆ ໄປອຽກໄປການ ທຽວເປັ້ນປະຈຳຫັ້ນອຸກມົກອຸກໃຈບໍ່ໜ້ອຍ ຜູ່ຊິນອນຄິດ ນັ່ງຄິດ ຢືນຄິດ ວ່າຊິເດີນທາງວິທີໃດ ຣາຄາຄ່າເດີນໃນທ້ອງຖນົນເມືອງວຽງຈັນອັນກວ້າງຂວາງເຮົານີ້ ຊິບໍ່ກາຍເງິນເດືອນ....!

ຄິດໆໄປແລ້ວກະເບັ່ນຕາຢາກຫົວ.

ຊິບໍ່ໃຫ້ຢາກຫົວຈັ່ງໃດ໋...? ລົດເມລ໌ສາຍດຽວທີ່ມີຢູ່ໃນນະຄອນຫລວງຂອງເຮົາຍຸບໄຕສູນຫາຍໄປປານມ້າກ້ອນເປື່ອຍ ຈົນຜູ່ຂ້າແລະໝູ່ຄູ່ທີ່ເຄີຍຂຶ້ນ ໆ ລົງ ໆ ຢູ່ສູ່ມື້ຕົກໃຈອາບ ຄືອະວັຍວະສ່ວນໃດສ່ວນນຶ່ງໃນຮ່າງກາຍຫລຸດຂາດໄປ.

ຄຶດຊອກໄປຊອກມາຈຶ່ງຮູ້ວ່າໂຕເອງຕົກໃຈຍ້ອນຫຍັງ ໃບໜ້າຂາວນວນກ່ຳກ້ຽງຂອງຜູ່ສາວຂາຍປີ້ ໃນຣົດນັ້ນກະເປັນສ່ວນນຶ່ງລ່ະ ຕົວະໂຕເອງບໍ່ໄດ້ວ່າບໍ່ເສັຽດາຍ ກະຂອງວ່າຜູ່ຂ້າກະຍັງນຸ່ມໂສດ ເຖິງບໍ່ສົດ ກະຍັງມີສິດ ເຕັມໂຕ ທີ່ຈະເບິ່ງໃຜມັກໃຜໄດ້ເຕັມອັຕຣາອິຫລີ ບໍ່ຜິດສິລທັມແນວໃດ໋ຈັກຢ່າງ.

ຂໍ້ນີ້ກໍ່ຍັງບໍ່ເປັນຂໍ້ສຳຄັນເທົ່າທີ່ວ່າ ຜູ່ຂ້າບໍ່ສາມາດຈ່າຍຄ່າຣົດໂດຍສານແຕ່ວັດໃຕຮອດຈີນາຍໄມ້ໄດ້ດູ່ມື້ໆ ອັນນີ້ໃຜກະຄືຊິເປັນຄືຜູ່ຂ້າຢູ່ດອກ ຄັນເພີ່ມເປັນຂ້າຣາຊການກິນເງິນເດືອນຈາກຣາສດອນລາວ ບໍ່ແມ່ນກິນເງິນເດືອນຣາສດອນອະເມຣິກັນ..!

ຜູ່ຂ້າອຸກນົກອຸກໃຈ ປຶກສາຫາລືກັບໝູ່ວ່າຊິເຮັດແນວໃດ໋ດີເພື່ອແກ້ໄຂບັນຫາໆນີ້.

ພັກພວກທັງຫລາຍເຫັນດີວ່າທຸກຄົນຄວນຊ່ອຍກັນ.... ຊ່ອຍແບບງ່າຍໆ ຄືຄົນທີ່ໄປເຮັດນັນທັ້ນລະ ຄືຊ່ອຍກັນທ້ອນເງິນແບບສາຍ

ຟ້າແລບເວົ້າງ່າຍໆສຳເນາະ ເຂົ້າຫວຍກັນຫັ້ນມາເງິນເດືອນສິບຫ້າພັນກີບຂອງຜູ້ຂ້າ ຈິເຂົ້າຫວຍເດືອນລ່ະສິບພັນກະຄືຈິຕ້ອງອົດເຂົ້າເຊົ້າເຂົ້າແລງອົດຕລຸຍຣາຕຣີທີ່ແສນສເນຫາຫັ້ນເບິ່ນແນ່ແທ້....ຜູ້ຂ້າຈະຍອມອົດທຸກອັນທຸກແນວ ເພື່ອໃຫ້ໄດ້ມາເຊິ່ງເງິນກ້ອນໃຫຍ່ກ້ອນນຶ່ງພໍຈິແລກກັບຣົດຈັກນ້ອຍໆຄັນນຶ່ງຊຶ່ງໝູ່ສນິດຮູ້ຈັກທຸກສຸກຂອງຜູ້ຂ້າມາຊຶ່ມບອກຢ່າງຫວັງດີວ່າ.

"ເຣື່ອງຣາຄາຫັ້ນຢ່າປາກໂປ້ງເບິ່ນອັນຂາດ" ຊຶ່ງຜູ້ຂ້າກະບໍ່ປາກໄປໃສ ...!

ອົດຢູ່ອົດກິນເບິ່ນເວລາຮອດສາມເດືອນ ກໍ່ຈຶ່ງແມ່ນຜຽນຜູ້ຂ້າເອົາຫວຍ....ມັນເບິ່ນເງິນຮອດເຈັດສິບພັນກີບ ຫົວໃຈທີ່ແຫ້ງແຮ່ວຂອງຜູ້ຂ້າຜາກົດວ່າໄດ້ພອງຂຶ້ນຄັບໂຄງກະດູກພຸ້ນລະ.

ຕົກແລງມາສະຫາຍຜູ້ຕິດຕໍ່ຫາຣົດມາຂາຍໃຫ້ ກໍມາຕາມນັດໝາຍ ພໍພາຜູ້ຂ້າຊ້ອນກັ້ນຣົດພໍດຶ່ງລົງມາທາງໃຕ້ກາຍທ່າເດື່ອລົງໄປອີກ ຜູ້ຂ້າຈົ່ມຄ່ອຍໆວ່າ.

"ຮ້ານຂາຍຣົດອີ່ຫຍັງມາຄືວ່າຢູ່ເລິກຢູ່ແລບແທ້"

"ຂອງດີຣາຄາຖືກມັນກະຕ້ອງຫາຍາກແດ່ເອີ້ຍ.... ໄອ້ໃຈກັນເທາະນ່າ"

ພໍສະຫາຍວ່າແບບນີ້ ຜູ້ຂ້າເລີຍມິດ ຈັກຮອດໃສບ້ານຫຍັງຜູ້ຂ້າ

ບໍ່ຮູ້ເອົາຊື່ ໆ ບັກໝໍ່ສ່ຽວພາແວ່ເຂົ້າພູ່ບ້ານນ້ອຍ ໆ ບ້ານນຶ່ງ ມີຕົ້ນໄມ້ໃຫຍ່ຂຶ້ນສູງບົດບັງຫລັງຄາເຮືອນແຕ່ລະຫລັງໄວ້ດີຈັ່ງເຈຕນາຂອງໄທບ້ານທີ່ຈະຢູ່ໃນຄວາມມືດຄຶ້ມຂອງເງົາໄມ້ໃນຣັຕຕິກາລ

ແວ່ເຂົ້າໄປເຮືອນໃຫຍ່ສູງປຸກແບບລາວຫລັງນຶ່ງ ສຽງໝາເຫົ່າດັງສນັ່ນຂຶ້ນ ໝໍ່ສ່ຽວຟ້າວສັ່ງອາຈາເບັ່ນສັນຍານອອກໄປວ່າ

"ລຸງ ລຸງ ຂ້ອຍພາເພິ່ນມາແລ້ວເນີ....! ສຽງຄົນເທິງເຮືອນໄລ່ໝາແລ້ວເງົາຂອງຊາຍຜູ້ນຶ່ງ ກໍຜ່ານຂັ້ນໃດລົງມາ.

ຜູ້ຂ້າບໍ່ເຫັນຊາຍຜູ້ນັ້ນຄັກ ແຕ່ຮ່າງກາຍສູງໃຫຍ່ ຈົ່ງມີເຮືອນີແຮງຂອງເຂົາກໍເຮັດໃຫ້ຜູ້ຂ້າສະອອນປັ່ນຍ້ານໃນໃຈ.

ເຂົາພາຜູ້ຂ້າແລະສະຫາຍ ລອດກ້ອງຕະລ່າງເຂົ້າໄປໂດຍມີໂຄມໄຟສາຍນ້ອຍສ່ອງນຳທາງ

ຫ້ອງນ້ຽມເດືອງນ້ອຍໆຫ້ອງນຶ່ງຢູ່ແຈສຸດກ້ອງລ່າງເຮືອນ ເຈົ້າເຮືອນໄຂປະຕູອອກຊ້າໆເພາະມີສາຍໂສ້ເສັ້ນໃຫຍ່ກັບລູກກະແຈຫ້ອຍຂວາງຢູ່.

ອັນຍາມກົດນັ້ນໃດ໋ ເລືອກເບິ່ງ !

ສຽງຫ້າວແຕ່ບໍ່ສະທົກສະທ້ານຂອງເຈົ້າເຮືອນດັງຂຶ້ນ ເຮັດໃຫ້ຜູ້ຂ້າໄດ້ສະຕິ ແມ່ນລ່ະ ຜູ້ຂ້າເຊີເງິະງະໄປພ້ອຍນຶ່ງ ບໍ່ຄິດວ່າຈິມາພໍ້ຣົດຈັກກອງອະຍະເຊືອງຊອນຢູ່ບ່ອນຈັ່ງຊີ່....

ຄິດບໍ່ພໍ້ວ່າຂະເຈົ້າເຮັດແນວໃດ.

ຜູ້ຂ້າທຳທ່າເລືອກຫັ້ນເລືອກພີ້ໝໍດີ ແຕ່ທີ່ແທ້ແລ້ວແມ່ນຫາຄັນຖຶກກວ່າໝູ່ໃຫ້ໝໍດີກັບເງິນທີ່ນອນຢູ່ໃນຖົງ

ເມື່ອຂີ່ຣົດອອກມາຈາກເຮືອນຫລັງນັ້ນ ຜູ້ຂ້າຈົ່ມກັບໝໍສະຫາຍທີ່ໝາໄປວ່າ

"ຂ້າເຈົ້າເຮັດແບບນີ້ຜິດກົດໝາຍໃດ໋ ນໍ້ ບໍ່ເສັຽໝາສີແລ້ວຍັງຂາຍແບບລັບໆລໍ່ໆອີກ ກັນໃຈບໍ່ດີເລີຍ....ແລ້ວເຮື່ອງໜັງສ້ຽມໜັງສືອີກ....! !

"ບໍ໋ ບໍ່ເປັ່ນຫຍັງດອກເຂົາຊື້ກັນເຕັມທຶດໆ....ເຮື່ອງໜັງສືບໍ່ມີບັນຫາ ໂຕກະເປັ່ນທະຫານເຕັມໂຕ ນຸ່ງເຄື່ອງແບບເຂົ້າໄປເບັ່ງໄສ່ມັນໂລດ ສ່ຳພອກກອດທາງ ຫັ້ນ!

ຄວາມເວົ້າຂອງສະຫາຍຄືມີເຫດມີຜົນດີ ຜູ້ຂ້າກໍເລີຍຊ່ວງໃຈ ແລ້ວກະເປັ່ນຄືຄວາມໝໍ່ສ່ຽວວ່າອີ່ຫລີ.... ຣົດຈັກກາຍເປັ່ນຂອງມີປໂຍດແກ່ຜູ້ຂ້າຢ່າງລົ້ນເຫລືອ ໄປຫັ້ນມາພີ້ສະດວກຂຶ້ນກວ່າຣົດເມລ໌ຊ້ຳອີກ....ຂາດແຕ່ສຽງຮ້ອງໃສໆຂອງສາວໃນຣົດ ແລະ ເມື່ອຍາມຝົນຕົກກໍອ່າວຂັດສົນແດ່ ບໍ່ທີ່ນັ່ງໃນຣົດເມລ໌ ຊິ່ງບາງເທື່ອ ບໍ່ມີຄົນຫລາຍຍັງພໍໄດ້ເຮັດຕາສົ້ມຕາຫວານເວົ້າຫລິ້ນເວົ້າຫົວນຳພວກຜູ້ສາວນ້ອຍ ຊິ່ງລາງຄົນກະໃຈດີ ຍິ້ມຮັບພວກເຮົາ ລາງຄົນກະພ້າບູດໜ້າໃດ່ ເຮັດໃຫ້ພວກ

ເຮົາໄດ້ໂຮກັນຍ້ອນ....ເອົາໄປເອົາມາກໍແປວ່າຍັງເສັຽດາຍຣົດເມລ໌ປະຈໍາທາງຢູ່ນັ້ນເອງ

ຜູ່ຂ້າລອດໄປລອດມາບໍ່ຖືກຕໍາຣວດຈັບຫົວ ຫລາຍເທື່ອຍ້ອນເຄື່ອງແບບອັນສງ່າງາມທີ່ສຸບໃສ່ຢູ່ ມັນຊ່າງເປັນວິທີການວິເສດແທ້ໆ ສໍາລັບພວກທີ່ສອຍໂອກາດ ສໍາລັບຜູ່ຂ້າແລ້ວຜູ່ຂ້າເຫັນວ່າຜູ່ຂ້າມີສິດທາງການດວນອະນຸຍາດພິເສດໃນເມື່ອຜູ່ຂ້າ ກິນເງິນເດືອນຂອງຣັຖເປັນຄົນຂອງຊາດ ຂີ່ຣົດຫຽວໄປຫຽວມາກໍເພື່ອຜົນປໂຍດຂອງປະເທດຊາດບ້ານເມືອງ ບໍ່ແມ່ນຂີ່ໄປຫາຫລິ້ນດື້ເຢັຍຣະບຽບກົດໝາຍ ຄືພວກວັຍນຸ່ມ ບໍ່ມີວຽກທັງຫລາຍ.

ກະຄືຮູ້ນັ້ນແລ້ວ ການເງິນຜູ່ຂ້າຂັດສົນມາດົນ ອົດໄປຫັ້ນມານີ້ ຈົນລືມຫລັງ....ດັ່ງນັ້ນເມື່ອແລ້ວຫວຍ ຜູ່ຂ້າຈຶ່ງພໍເງີຍໜ້າອ້າປາກໄດ້ນໍາໝູ່ ພໍມີເງິນໃນຖົງຈັກໜ່ອຍມີພາທະນະເປັນໃຈ.... ຜູ່ຂ້າດີໃຈທີ່ມີບຸນວາສນາໄດ້ເກີດມາເປັນທະຫານ ຄິດຢູ່ວ່າ ບໍ່ມີກະຍ່າຫົວມັນເທາະນ້າໜ້າຣົດເມລ໌ຫັ້ນ....

ແລະແລ້ວໃນຄືນທີ່ຮ້ອນເອົ້າທີ່ສຸດໃນຍາມຝົນ (ທີ່ຜູ່ຂ້າເຫັນວ່າ)ນີ້ ຜູ່ຂ້າກໍຈຶ່ງເກີດຄວາມຢາກອັນນຶ່ງຂຶ້ນມາຈັບຄວາມຄິດໃນຍາມຣາຕຣີທີ່ລົມພັດຄ່ອຍໆ ໃນສະຖານທີ່ເປັນຕາອອນຊອນ ມີດວງເດືອນໃຫ້ແສງສວ່າງພໍມົວໆ.... ຜູ່ຂ້າຖອດຄາບອອກຈາກທະຫານຊັ້ນນ້ອຍມາ

ເປັນພຸ່ມນ້ອຍໃນເສື້ອລາຍສີສົດ ແລະສົ້ງແພງາມ ລວດລາຍຢາກຄືແພ ສົ້ງນຸ່ງນອນພຸ້ນລ໋ະ

ເຣື່ອງມັນກະມີຢູ່ວ່າ ອັນສາວນາງທີ່ຜູ້ຂ້າຈິໄປຢ້ຽມຢາມນີ້ ເຄີຍເວົ້າດາດຫູສມັກພັກພວກມາແລ້ວວ່າ ບໍ່ມີໃຈພິສວາດຊາຍຊາດທະຫານລ້າໆບໍ່ມີດາວຕິດບ່າ ນີ້ເລີຍ....ຜູ້ຂ້າຈັ່ງວ່າ ຈໍາໃຈລອກຄາບມາເປັນພຸ່ມຂີ້ໂກະຕາມສມັຍນິຍົມ ແລ້ວກໍ່ຄວ້າຣົດ ບິນເຈີດ ເລາະກິນອາກາດເອົາກໍາລັງໃຈແຖວໆນອກເມືອງ ຈົນພໍພຽງແລ້ວຈຶ່ງວົກເຂົ້າໃນເມືອງ ຫວັງວ່າຈິໄປໂຊວ໌ທ່າພຣະເອກແຖວຟ້າໂຮງພາພຍົນ ໃຫ້ສາວນ້ອຍສາວໃຫຍ່ທັງຫລາຍແນມນໍາ ແລ້ວຈຶ່ງຈະໄປຫາສາວນາງ

ແຕ່ໂຊກບໍ່ດີເລີຍ ມາຮອດແຖວສີ່ຖານນີ້ ກໍ່ພາກົດວ່າພວກອັນຍາພວມເປົ່າໝາກຫວີດ ປີດໆ ຢຸດຍອດຍານທຸກຊນິດຢູ່

ຜູ້ຂ້າເກືອບພາລົດເຊຕົກຮ່ອງ ແລ້ວແຕ່ຍັງບໍ່ລືມວ່າໂຕເອງເປັນຊາຍຊາດນັກຮົບ ຈຶ່ງຂີ່ຣົດເຂົ້າມາຈອດຕໍ່ໜ້າອັນຍາຢ່າງສງ່າຜ່າເຜີຍແລະສງົບສງຽມໃນໂຕພ້ອມ....!

ຊີ້ແລ້ວພວກອັນຍາ ຈິໃຫ້ຜູ້ຂ້າເອົາໜັງສ້ຽມໜັງສືມາແຕ່ໃສ ຖ້າອັນຍາວ່າຜູ້ຂ້າຜິດ ຜູ້ຂ້າວ່າຜູ້ຂາຍຣົດແລະໝໍສ່ຽວຜູ້ຂ້າ ມີສ່ວນຜິດຫລາຍກວ່າ....ເທົ່າທີ່ຜູ້ຂ້າເຮັດຜິດແມ່ນແຕ່ຝັນຈາກຣົດເມລ໌ບໍ່ແລ່ນປະຈໍາທາງຄືແຕ່ເກົ່າມາຫລັງນັ້ນແລ້ວ! ■ ■ ■

# *ສາວໃສ້ – ສາວໃຊ້*

ເໝື່ອຍໃຈນຳການຈ້າງສາວຄົນໃຊ້ໄທອິສານ ທີ່ມາຢູ່ນຳບໍ່ດົນກໍຫວຸດຫວິດໄດ້ຄ້າໝົ້ກັນ ຍາເອື້ອຍດາຣາກໍເລີຍຊອກຫາເອົາເດັກນ້ອຍຜູ້ສາວບ້ານນອກເມືອງເຮົາມາໄດ້ຜູ້ນຶ່ງ ຫວັງວ່າພໍຈະໄດ້ຊ່ອຍຕີນຊ່ອຍມື...

ແລ້ວ ໆ ກໍເລີຍບອກຈັ້ງສັ້ງສອນ ໃຫ້ສາວນ້ອຍນອກເມືອງຮູ້ຈັກຣະບຽບກົດເກນຊີວິດຄອບຄົວຂອງຄົນລາວທີ່ເຄີຍຜ່ານເມືອງນອກ

– ນີ້ນ່ະບຸນມາ ! ນ້ອງສອງຄົນໃຫຍ່ຕ້ອງໄປໂຮງຮຽນໃຫ້ທັນແປດໂມງທຸກມື້ເນີ້ ! ເອື້ອຍ–ອ້າຍກໍໄປການພ້ອມມັ້ນແລະຕ້ອງຂຶ້ນເຂົ້າເຊົ້າກ່ອນລົງເຮືອນທຸກມື້ !

– ໂດຍຂະນ້ອຍ ພວກຍາເອື້ອຍຫາສູ່ກັນກິນກ່ອນໂລດ ! ຂະນ້ອຍຕື່ນຍາມໃດແລ້ວ ຊິຫາກິນເອງດອກ !



# ທິດຕາສູ້ຕາຍ

ປາໄບ

■ ■ ຊ່າກັນທັ້ງບ້ານວ່າທິດຕາໄປຈອບລັກຄວາຍກ້ອງລ່າງເຮືອນນາຍບ້ານ

ທາງທິດຕາກະວ່າບ່ໄດ້ຄິດໄປລັກລອບຂອງໃຜ

ແຕ່ນາຍບ້ານວ່າເຫັນຄັກເຫັນແນ່  ທິດຕາແທ້ແຫລະແລ່ນໄປໂຍ້ງ ໆ ເພິ່ນໄດ້ຍິນສຽງຄົນພິລິດໄມ້ຢູ່ກ້ອງລ່າງ  ສົງສັຍ  ຈອບມາເບິ່ງ.

ບິບໂຄມມາບໃສ່

ກະໂຕເທີທິດຕາແທ້ແທລະແລ່ນຫລິດແລດອອກໄປທາງສອນ ກ້ອຍຫົວເຮືອນ ເສື່ອກະແມ່ນເສື່ອລາຍຕາກະໂລ້ພື້ນເພີ່ມມັກເຮັ່ງມັ້ນ ແທລະ ໃຜຊິຈື່ບໍ່ໄດ້

ສຽງໝາເຫົ່າໂຄບ ໆ ຫລັງຈາກຄົນແລ່ນລັດອອກຈາກສອນ ກ້ອຍທາງຫົວເຮືອນຜ່າບ້ານໄປຄືນນັ້ນ

ມັນເປັ່ນຍາມຂ້ອນແຈ້ງແລ້ວ ແຕ່ວ່າ ກໍຍັງມີແສງເດືອນ ແຈ້ງເຕີບເນື່ອງຈາກແມ່ນຍາມເດືອນແຮມ

ຕູ້ສາຍລົງມາຢ່ຽວ ກໍວ່າແມ່ນທິດຕາລັກ ໆ

ເຖົ້າວ່າໄດ້ຍິນສຽງນາຍບ້ານຮ້ອງຂຶ້ນວ່າ

"ຄົນ ! ຄົນ ! ຄົນ ມາຈອບລັກຄວາຍ"

ແລ້ວກໍໄດ້ຍິນສຽງຄົນແລ່ນມາຜູ້ດຽວ ມີສຽງໝາເຫົ່າມານຳ ຫລັງແຊວຊະ

ໝາຜູ່ເຈົ້າຂອງ ກໍປານຊິກັດຊິກິນ

"ແລ້ວສຽງໝາກໍເຫົ່າເບັ່ນຝອດໄປທາງເຮືອນບັກຕາບໍ່ຜິດ" ຕູ້ສາຍວ່າ

ແລ້ວທິດຕາວ່າທິດຕາບໍ່ໄດ້ໄປຈອບລັກຄວາຍ

ເຈົ້າຄວາມ ຂ້ອຍຄວາມ ຄວາມກໍເລີຍດັງໄປຄັບບ້ານ

ຄືວ່າຫັ້ນແຫລະ....ສຽງຄົນມັນດັງກວ່າສຽງພ້ຳ

ຄິດເບິ່ງແຕ່ວ່າ ເຈົ້າບ້ານຜ່ານເມືອງຜູ້ໃດດີຜູ້ໃດຊົ່ວພວກຜູ້ແທນເພິ່ນກໍຍັງເອົາໄປໂຈມຕີຢູ່ສະພາແດ່ນອກສະພາແດ່

ດັງໄດ້ຍິນຄັບທີບພ້ອນນີ້

ແລ້ວຜູ້ແທນຜູ້ໃດຢາກໄດ້ຕັ້ງອີລັດທະມົນຕີ ກໍຍັງໄດ້ຍິນຊ່າດັງມາຮອດບ້ານເຮົາ

ຊາຫຍັງເຮື່ອງທິດຕາຊິບໍ່ດັງ

× × ×

ທິດຕາຄຸມຄຽດເຮັ່ງ ທີ່ຖືກຕູ່ວ່າໄປຈອບລັກຄວາຍ

ຄັນຊິເວົ້າຄວາມກັນລີ ຜູ່ຕູ່ຊ້ຳແມ່ນນາຍບ້ານ

ຄັນຊິອົດໃຈໄວ້ບໍ່ປາກ ບໍ່ຕອບ ໃຫ້ຄວາມມັນແລ້ວໄປເລີຍໄທບ້ານກໍຊ້ຳນິນທາຊ່າລືໄປທາງບໍ່ດີ ວ່າທິດຕາເບັ່ນຫົວກະໂມຍ ໃຫ້ວ່າທັງເຈັບທັງເໝັນເອົາໂລດ

ຈົນບັ້ນຍາເວົ້າຄັກ ໆ ທິດຕາກໍເລີຍຄິດພໍ້ຜູກອງຄຳຜູ

ນາຍບ້ານກໍເກງໃຈ (ອຳນາດ) ເພິ່ນຢູ່ແດ່ ຄືຊິພັ້ງສຽງເພິ່ນຢູ່—ດອກ

ຈັ່ງໃດ ກໍຂໍໃຫ້ເຈົ້າຕູ່ເຈົ້າລືກັນແດ່ເທາະ

ເວົ້າບ່ອນຫລ້ອນໂລດລະວ່າ ທິດຕາອາຍຜູ້ສາວຮ່ອມບ້ານ

ຕໍ່ບໍ່ຕາມເລີຍຈິຫາເມັຽບໍ່ໄດ້ ຍ້ອນຄວາມຈໍາຄວາມລືອັນນີ້

× × ×

ເມື່ອຮູ້ຄວາມປະສົງຂອງທິດຕາ ຜູ້ກອງຄໍາຜູກໍເລີຍເອີ້ນເຂົ້າໄປໃນຫ້ອງ ຈໍາໃຫ້ເວົ້າຄວາມແທ້ສູ່ພັ້ງ ເບິ່ງວ່າຈິພໍມີທາງຊ່ອຍເຫລືອໄດ້ຈັ່ງໃດ່ ຈິພໍມີທາງໄປຈາຣະຈາກັບນາຍບ້ານຈັ່ງໃດ....

– ໂຍ໊ວ ! ໝົດບ້ານໂລດພາກັນຕູ່ວ່າຂນ້ອຍໄປຈອບລັກຄວາຍ" ທິດຕາເລົ່າສຽງບໍ່ໃຈດີປານໃດ "ແທ້ແລ້ວບໍ່ແມ່ນຂນ້ອຍໄປຈອບລັກຄວາຍເພິ່ນ ເຣື່ອງບໍ່ແມ່ນຂຶນມາຕູ່ມາຈໍາໃຫ້ຈີ່ເນົ່າແນວນີ້ ບອກແທ້ ໆ ໂລດວ່າຂນ້ອຍຂໍສູ້ຕາຍ ໄປຮອດສານໃດກະໄປ ສູ້ກັນໂລດຂອງບໍ່ມີຫາເວົ້າແນວບໍ່ມີຫາວ່າໃຜບໍ່ຮູ້ ລະຄິດວ່າຂນ້ອຍເປັນຜູ້ຮ້າຍຊາຍໂຈນໄປແທ້ກໍ ! ເກີດມາຍັງບໍ່ເຄີຍວ່າຈິຫາກິນທາງລັກ ມາຕູ່ກັນແຂ້ແຫລັດອຍລອຍແນວນີ້ ສູ້ກັນຮອດໃສກະສູ້ ນາຍບ້ານບໍ່ນາຍເປັນກະລອງເບິ່ງເທາະ ຜູ້ກອງວ່າບໍ່ຂນ້ອຍ ?"

– ວ່າຈັ່ງໃດຂ້ອຍກະຍັງບໍ່ຮູ້ລາຍລະອຽດເທື່ອ ເຈົ້າກະເວົ້າໃຫ້ຂ້ອຍພັ້ງໝົດເລີຍແມ້ ! ເພິ່ນຕູ່ວ່າໄປຈອບລັກຄວາຍແມ່ນບໍ່ ? ແລ້ວ

ໄດ້ໄປແທ້ເບາະ ! ໄປເຮັດຫຍັງ ! ກະບອກສູ່ພົ່ງກ່ອນຊັ້ນຕອ່າ !" ຜູ່ກອງດຶງເຂົ້າເຣື່ອງ

— ກະໄດ້ໄປແທ້ຂນ້ອຍ ! ແຕ່ອ່າບ່ໄດ້ໄປຈອບລັກຄວາຍ ຄິເພິ່ນອ່າ ຈັ່ງອ່າຂນ້ອຍບໍ່ພໍໃຈອັນເພິ່ນຕູ່ນີ້ແຫລະ ! ຂອງຕູ່ບໍ່ແມ່ນ !" ທິດຕາຍັງຄຸມຄຽດຄວາມຕູ່ບໍ່ແລ້ວ "ນາຍບ້ານເພິ່ນອ່າເພິ່ນໄດ້ຍິນສຽງ ເລີຍລົງມາເບິ່ງອ່າເຫັນຂນ້ອຍ ພອນພົ້ນອອກມາແຕ່ກ້ອງລ່າງກະເລີຍ ຫາອ່າ ໄປລັກຄວາຍ !

— ແລ້ວແມ່ນເຈົ້າໄປເຮັດຫຍັງຢູ່ກ້ອງລ່າງເພິ່ນຫັ້ນລະ ຈົນ ຂ້ອນແຈ້ງ !

— ຂະນ້ອຍ..ກະ..ກະໄປນີວຽກຂອງຂະນ້ອຍຊັ້ນແຫລ້ວ !" ທິດຕາຜູ່ຖືກຕູ່ອະທິບາຍບໍ່ລຽນ "ຂະນ້ອຍໄປຊອກຫາເກີບ...ເກີບປາອີຣີ ຂນ້ອຍຖອດປະໄອ້ຫັ້ນກ່ອນຂຶ້ນໄປ....ອັນນ່າ ຂນ້ອຍກັບລົງມາ ຊອກ ຫາໃສ່ບໍ່ເຫັນ ຍ້ານອ່າໝາມັນຄາບໄປຊັ້ນດອກຂນ້ອຍ !

— ແລ້ວເຈົ້າໄປເຮັດຫຍັງຈັ່ງໄດ້ໄປຖອດເກີບໄອ້ຫັ້ນ ?

— ກະໄປເທິງເຮືອນຫັ້ນແລ້ວ ! ກະຈັ່ງແມ່ນສ້ ກິສ້ ກິນໍ ທ່ານຜູ່ກອງກະດິ !

— ອ້າວ ບໍ່ສ້ເບິ່ງຄັກໆຂ້ອຍຊິຮູ້ແນວຊ່ອຍເຈົ້າໄດ້ເບາະ?

— ແລ້ວນີ້ຜູ່ກອງຄິດອ່າຊິຊ່ອຍຂະນ້ອຍໄດ້ບໍ່ ? ຂະນ້ອຍ

ສັ່ງມາເສັຽໃຈຫລາຍແທ້ ! ເທິງເຈັບເທິງອາຍເກີດມາບໍ່ເຄີຍຕື່ອງຊິເສັຽ ໃຫ້ຄົນຕູ່ຫລົ້ນທາງບໍ່ເດັ້ນຈັກເທື່ອ !

— ກະສຸດແລ້ວແຕ່ວ່າເຈົ້າມີເຫດຜົນມາອ້າງວ່າຈັ່ງໃດ ຊິວ່າໄປຊອກຫາເກີບເບັ່ນອັນວ່າພັ່ງບໍ່ເຂັ້ນດອກ ບໍ່ສົມເຫດສົມຜົນເລີຍ !! ເວົ້າແທ້ ໆ ແລ້ວແມ່ນເຈົ້າໄປຫຍັງເກາະເຮືອນມັ້ນເດິກປານນັ້ນແລ້ວ ?

ທິດຕານິດບໍ່ມີສຽງເວົ້າເທິງເຕີບ ສີໜ້າບອກວ່າອົມອາຍໃຈບໍ່ນ້ອຍ ອາດຈະໜອມຊອກຫາຂໍ້ແກ້ຫລືຄໍາອະທິບາຍ ຊີ້ແຈງໃຫ້ແຈ່ມແຈ້ງກະບໍ່ຮູ້

— ກະໄປຕາມເຣື່ອງຂອງຜູ່ຊາຍຊັ້ນແລ້ວຂະນ້ອຍ !

— ໄປຈັ່ງໃດໄປຕາມເຣື່ອງຂອງຜູ່ຊາຍ ?

— ອັນ....ຂະນ້ອຍກະບໍ່ຊ່າງເວົ້າ ຄືວ່າ....ອັນນ່າ....

— ຄັນມັນຍາກຫລາຍ ບໍ່ຕ້ອງເວົ້າກະໄດ້ ແຕ່ວ່າຂ້ອຍຂໍບອກເຈົ້າວ່າ ຄັນບໍ່ເວົ້າ ຂ້ອຍກະຊ່ອຍຫຍັງເຈົ້າບໍ່ໄດ້ ຄືກັນ !!” ຜູ່ກອງຜູ່ຂູ່ໜັກຈົນທິດຕາໜ້າມ້ານລົງ

ເສັຽໜ້າກໍເສັຽທີ່ບ້ານເມືອງເພິ່ນຕູ່ວ່າໄປຈອບລັກ

ຈິງແທ້ແລ້ວທິດຕາບໍ່ຫວັງໄປລັກຂອງໃຜ

ແຕ່ເຫດຜົນທີ່ເຂົ້າໄປກ້ອງລ່າງເຮືອນນາຍບ້ານ ຈົນມີຜູ່ເຫັນຈົນຄົນໄດ້ຊ່າລືຍ້ອນນີ້ ກໍຍາກທີ່ຈະເວົ້ານ້ອຍສູ່ໃຜຟັ່ງໄດ້ ມັນເບັ່ນເຣື່ອງ

ທີ່ທິດຕາ ປາກບໍ່ອອກ....

ໃຈນຶ່ງຢາກອຳໄວ້ເປັນຄວາມລັບ

ຄັນອຳໄວ້ຫລື ກໍຊ້ຳບໍ່ມີທາງແກ້ຄວາມຕູ່ທີ່ວ່າ "ໄປກ້ອງລ່າງນາຍບ້ານຂ້ອນແຈ້ງຄືນນັ້ນຄັນບໍ່ໄປຈອບລັກແມ່ນທິດຕາໄປຫຍັງ ?"

ໝົດບ້ານບໍ່ມີໃຜຮູ້ ວ່າທິດຕາໄປຫຍັງ ໄດ້ແຕ່ສົງສັຍຕາມທີ່ຊ່າລືກັນ

ນອກຈາກຕົວຂອງທິດຕາເອງກັບໃຜອີກຜູ້ນຶ່ງທີ່ມັນທີ່ຮູ້....

ແລະອີກຜູ້ນຶ່ງທີ່ຮູ້ນັ້ນກໍຍິ່ງປາກບໍ່ອອກບອກບໍ່ໄດ້ ໜັກໄປກວ່າທິດຕາເອງອີກຫລາຍຕໍ່

ທິດຕາຄິດວົນໄປວຽນມາ....

ຄິດຫາວ່າຈະອະທິບາຍ ສູ່ຜູ້ກອງພັ່ງວ່າແນວໃດດີ ເຣື່ອງຂາຍໝ້າ ມັນຈຶ່ງຈະບໍ່ຂາຍໝ້າ ແລ້ວທິດຕາກໍສະດຸ້ງຍຸບຫລັງຈາກ ນັ່ງຊຶງຢູ່ເທິງເຕີບ ເມື່ອຜູ້ກອງຖາມຈາດສຽງດັງ ໆ ວ່າ

– ບອກບໍ່ໄດ້ແມ່ນບໍ່ວ່າໄປເຮັດຫຍັງ ຈັ່ງໄດ້ໄປຖອດເກີບປະໄວ້ກ້ອງລ່າງເຮືອນນາຍບ້ານຫັ້ນ ?

– ໂດຍ ! ໂດຍ ຂະນ້ອຍບອກໄດ້ຢູ່ ແຕ່ວ່າບອກແລ້ວມັນຊິດີບໍ່ລະ ?

– ບອກມາກ່ອນແລ້ວ ຈັ່ງຊິຮູ້ວ່າດີບໍ່ດີ !

– ຄືວ່າອັນນ່າ... ຂະ.... ຂະ.... ຂະນ້ອຍ ປິ່ນບ່ອງຍັ້ງຮຽນຂົນ

ຫລອນຜູ້ສາວ ຊັ້ນດອກຂະນ້ອຍ !

ຜູ່ກອງຜູ້ຫົວເອິກນຶ່ງ ແລ້ວກໍເຮັດໜ້າຂຶມສຽງຊູ່ຕໍ່ໄປ

– ສາວໃດ ມີໃຜເປັນພິຍານ !

– ກະສາວອັນນ່າ.... ສາວລູກສາວນາຍບ້ານຫັ້ນແລ້ວ

ຂະນ້ອຍ...ໃຫ້ລາວເອງເປັນພິຍານໃຫ້ກະຊິໄດ້ຢູ່ຕິບໍ່....

– ໄດ້ແລ້ວຊັ້ນນ່ະ !" ຜູ່ກອງຍຸ້ມຍ່າງມີຄວາມໝາຍ

"ບາດແລ້ວຂ້ອຍຊິເມືອເວົ້າສູ່ນາຍບ້ານເຈົ້າພັ້ງ ຊິບອກເພິ່ນໃຫ້ດອກວ່າ

ເຈົ້າບໍ່ໄດ້ໄປຈອບລັກຄວາຍ ແຕ່ເຈົ້າໄປ...

– ໂອ່ຍ ! ເວົ້າແນວນັ້ນບໍ່ໄດ້ດອກຂະນ້ອຍ.... ກະຕາຍ

ຂະນ້ອຍຫັ້ນແຫລະ !" ທິດຕາຄັດຄ້ານໂດຍບໍ່ປ່ອຍໃຫ້ຜູ່ກອງເວົ້າສຸດ-

ຄວາມ

– ຕາຍເປັນຕາຍໂລດເປັນຫຍັງ ? ໃສຄືບອກວ່າຂໍສູ້ຕາຍ

ຮອດສາມໃດກະຮອດ !"

ທິດຕາໜ້າມ້ານລົງຈົນບໍ່ມີເລືອດ

– ຂະນ້ອຍວ່າສູ້ເຣືອງບໍ່ໄດ້ໄປຈອບລັກຄວາຍຕ່າງຫາກ"

— ແຕ່ວ່າເຈົ້າໄປຈອບຫລອນລູກສາວເຂົາ" ຜູ່ກອງຊີ້ໜ້າວ່າ  ພາໃຫ້ທິດຕາບໍ່ແນ່ໃຈວ່າເພິ່ນຊິຈ່ອຍຫລືເພິ່ນສໍ້ເອົາຄວາມກນແທ້ "ເຂົາຕູ່ເຣື່ອງບໍ່ແມ່ນເຈົ້າຄຽດ  ບາດເຣື່ອງມັນມິມັນແມ່ນຊ້າບໍ່ຢາກເວົ້າ ເຈົ້າຢາກເອົາຈັ່ງໃດກນແທ້ເກາະທິດຕາ ?

ທິດໃຫຍ່ເຈົ້າຂອງເສື້ອລາຍຜູ່ຖືກຕູ່ຫາ  ຄິດຫາຄວາມແກ້ບໍ່ມີ ປາກບໍ່ອອກບອກບໍ່ໄດ້ມັນມີແຕ່ມືດອື້ຕື້ປານແບັ້ນອັດປາກ....

× × ×

ແລ້ວທິດຕາກໍໄດ້ຜູ່ກອງຜູ  ເບັ້ນຫົວໜ້າພາສູ້ ກູ້ຊື່ສຽງ ໃຫ້ຄົນເຊົາຕູ່ເຊົາຊ່າວ່າຄິດລັກຄວາຍ....ສູ້ດ້ວຍວິທີແກ້ຂ່າວກ່າວຫາ  ຈົນໃນທີ່ສຸດນາຍບ້ານກໍຄຸບແລະຢູ່ເຂັນເອົາທິດຕາເຮັດລູກເຂີຍເມື່ອຮູ້ຄັກແນ່ວ່າທິດຕາບໍຣິສຸດແທ້  ໃນເຣື່ອງທີ່ຖືກຕູ່ວ່າຈອບລັກຄວາຍ  ແຕ່ລູກສາວຂອງນາຍບ້ານນັ້ນບໍ່ບໍຣິສຸດ  ເນື່ອງຈາກລັກຖອດກອນບ່ອງຢ້ຽມ ໃຫ້ທິດຕາຂຶ້ນໄປຫລອນແຕ່ຄືນນັ້ນ.... ■ ■ ■

# ສາມເຣືອນ

■ ບູຮານ ສອນໃຫ້ຮູ້ ຄຸນຄ່າເຣືອນສາມ
ຮຽນຈັກ ຈາສາມເຣືອນ ສູ່ຟັງຈິງແຈ້ງ
ສາມເຣືອນ ດີຫລາຍດ້ານ ຫລາຍການເປັນປໂຍດ
ແນມທີ່ (ຣິບປຸກ) ແປງແຕ່ງສ້າງ ເຣືອນໄດ້ຄົບສາມ

■ ເຣືອນນຶ່ງ ຕົນຢູ່ຍັ້ງ ພ້ອມພ່າພົງສາ
ເຣືອນນຶ່ງ ໃຫ້ເຊົ່າເອົາດັອລລາຣ໌ ແມ່ແອຖນອມໄວ້
ເຣືອນນຶ່ງ ປຸກຢູ່ໄກເຣືອນເຕົ້າ ເມັຽຫລວງບໍ່ຮູ້ທີ່
ໄວ້ເຊື່ອງ ເມັຽແມ່ນ້ອຍ ຍາມມີພັກການ

" *ປາໄມ* "

# ເຣືອນເຈົ້າສີຟ້າຈາງ ໆ

ແລງ ພູຜາເງິນ.

ຄົນແຖວນີ້ມັກສົ່ງສຽງດັງສເມີ ບາງຄົນສົ່ງສຽງຮ້ອງໃສ່ກັນຄົນລະຟາກທາງ ແລະຖືເປັນເຣື່ອງທັມມະດາ ບາງຄົນຮ້ອງມາແຕ່ເທິງເຮືອນບອກໃຫ້ຄົນແກ່ນ້ຳ ເອົານ້ຳມາສົ່ງ ເດັກນ້ອຍຍິ່ງເກ່ງ ພາກັນຫລິ້ນຢາງບ້ວງແລ້ວກໍຖົກຖຽງກັນດັງແຊວ ໆ ເປັນທີ່ລຳຄານຫູ ຄົນຂາຍເຂົ້າໜົມແຕ່ງໂຕແປກ ໆ ກໍຮ້ອງສຽງລັ່ນບ້ານ ປະກາດຂາຍເຂົ້າໜົມວ່າຫອມ ໆ ຫວານ ໆ ນອກນັ້ນກໍເປັນສຽງຣົດຈັກດັງສນັ່ນຢູ່ເລື້ອຍ ໆ

ຜ່ອງກາຍໄປກາຍມາ ບໍ່ເຫິງບໍ່ດົນກໍ່ມີຣົດໃຫຍ່ຜ່ານໄປມາເທື່ອນຶ່ງ.

ພວກເຮົາມາຢູ່ຄຸ້ມນີ້ໃໝ່ ໆ ຍັງບໍ່ເຖິງສອງອາທິດດີ ເປັນຄຸ້ມທີ່ໄກຈາກຖນົນສຳຄັນ ແຕ່ກໍ່ມີຄົນຢູ່ໜາແໜ້ນ ສ່ວນຫລາຍເປັນຄົນທັມມະດາສາມັນ, ເຮືອນແຖວນີ້ສ່ວນມາກເປັນເຮືອນໄມ້ ຫລາຍ ໆ ຫລັງປຸກເປັນຫ້ອງແຖວ ສ່ວນເຮືອນຂອງຄົນມີຖານະດີຈຶ່ງປຸກເປັນ ອິນ-ລາມັນມີຢູ່ເປັນຫ່າງ ໆ.

ພວກເຮົາເຊົ່າເຮືອນໄມ້ສອງຊັ້ນສີ່ຟ້າຈາງ ໆ ໜ້າບ້ານເປັນເດີ່ນນ້ອຍໆ ມີຕົ້ນຕາຂົບສອງຕົ້ນໃຕ້ຕົ້ນຕາຂົບຕົ້ນນຶ່ງມີແປ້ນມ້າ ສຳຫລັບນັ່ງຫລິ້ນ ເຮືອນພວກເຮົາຢູ່ໂດດດ່ຽວຈັກໜ່ອຍເມື່ອທຽບໃສ່ຫລັງອື່ນໆ ຊຶ່ງຢູ່ຖັດໄປທາງເບື້ອງໃຕ້ແລະເບື້ອງເໜືອ ເຮືອນເຫລົ່ານັ້ນປຸກໃກ້ ໆ ກັນ ແລະທີ່ເປັນຫ້ອງແຖວກໍ່ຕິດ ໆ ກັນໄປຕາມແຄມຖນົນ.

ພວກເຮົາຍັງບໍ່ສນິດສນົມກັບຜູ້ໃດດີ ຈະຄຸ້ນ ໆ ກັນແດ່ກໍ່ມີເຈົ້າຂອງຮ້ານຊັກຣີດຊຶ່ງຢູ່ຟາກຖນົນ ເຈົ້າຂອງຮ້ານເຝີຊຶ່ງຢູ່ປາກທາງແຍກໃກ້ ໆ ແລະເຈົ້າຂອງຮ້ານຂາຍເຄື່ອງຍ່ອຍທີ່ຢູ່ຖັດໄປ ຄອບຄົວເຮົາມີເຈັດຄົນນຳກັນ ຖືກຍ້າຍມາຈາກໄຊຍະບູຣີ ຍາພໍ່ເປັນຂ້າຣາຊການສັງກັດກົມສ່ວຍສາອາກອນ.

ຂ້ອຍນັ່ງຢູ່ແປ້ນມ້າໃຕ້ຕົ້ນຕາຂົບ ຫລຽວເບິ່ງຄົນກາຍໄປມາທາງໃຈກໍ່ຄຶດຮອດໄຊຍະບູຣີທີ່ໄດ້ພັດພາກຈາກມາ ຄຶດຮອດເອື້ອຍແພນ

ຈຶ່ງບໍ່ໄດ້ມານໍາໝູ່ ທັງນີ້ເພາະເອື້ອຍແພມແຕ່ງດອງເປັນເຮືອນ ເປັນຊານໄປແລ້ວເມື່ອເຈັດແປດເດືອນກ່ອນ ຄິດຮອດເຮືອນເກົ່າທີ່ເຄີຍຢູ່ອາສັຍຕັ້ງຫລາຍພ່ຳຫລາຍປີຈົນເຕີບໃຫຍ່ເປັນສາວ ຄິດຮອດໝູ່ເພື່ອນທີ່ເຄີຍຫລິ້ນເຄີຍກິນນໍາກັນມາເປັນເວລາດົນ ໆ.

ເອື້ອຍແພມຫລືລໍາແພມ ເປັນລູກກົກ ຕໍ່ມາກໍແມ່ນເອື້ອຍລໍາພອນແລ້ວກໍຂ້ອຍ ຫລືລໍາພິນ ຕໍ່ໄປເປັນນ້ອງຊາຍສາມຄົນ ຂ້ອຍກັບເອື້ອຍພອນເປັນສາວພ້ອມກັນ ເອື້ອຍພອນອາຍຸ ໑໙ ປີ ລື່ນຂ້ອຍນຶ່ງປີ ແຕ່ຕົນຕົວໃຫຍ່ທໍ່ ໆ ກັນ ບາງຄັ້ງຂ້ອຍຮ້ອງແຕ່ພອນ ພອນ ເພາະຮ້ອງເອື້ອຍພອນມັນສິເຂີນ ໆ ອາດໃດອາດນຶ່ງ.

ຊີວິດໃໝ່ໃນເຮືອນເຊົ່າຫລັງນີ້ມີເຣື່ອງແປກ ໆ ພໍມາຢູ່ໄດ້ສາມວັນ ມີຊາຍສອງຄົນຂີ່ຣົດຈັກກາຍໜ້າບ້ານໄປ ແລ້ວກໍກວັກມືໃສ່ຂ້ອຍວັບ ໆ ເໝືອນວ່າລຶ້ງກັນ ທັງທີ່ຂ້ອຍບໍ່ເຄີຍເຫັນໜ້າບຸກຄົນທັງສອງເລີຍ.

"ຜູ່ບ່າວວຽງຈັນນີ້ ສລອກກອກອີ່ຫລີ" ຂ້ອຍຈົ່ມໃນໃຈ

ອີກສອງມື້ຕໍ່ມາ ກໍມີຊາຍຄົນນຶ່ງເຂົ້າມາໃນບ້ານ ແລ້ວຖາມຫາຄົນຊື່ "ຕິວ" ວ່າເປັນຍິງສາວ.

"ບໍ່ຮູ້ ຂ້ອຍມາຢູ່ໃໝ່" ຂ້ອຍບອກ.

“ຂໍເຂົ້າໄປໃນເຮືອນແດ່ ຊິເບິ່ງຜູ່ສາວ” ເຂົາວ່າ

“ເຈົ້າຊິເບິ່ງໃຜ ? ບໍ່ມີຜູ່ສາວດອກ ຄົນຢູ່ແຕ່ເກົ່າເຂົາຍ້າຍໜີໄປໝົດແລ້ວ” ຂ້ອຍເວົ້າສຽງຊຸ່ມ ໆ.

ເຂົາເກີ່ດແນມເຂົ້າໄປໃນເຮືອນ ເຮັດທ່າທາງເຂີນ ໆ ອາດໃດອາດນຶ່ງ ແລ້ວກໍ່ອອກໄປໂດຍບໍ່ເວົ້າຫຍັງ.

“ຄົນເມືອງໃຫຍ່ນີ້ຊອດລອດຂນາດເນາະ !” ຂ້ອຍຄິດ ພໍດີເອື້ອຍພອນຍ່າງອອກມາແຕ່ໃນເຮືອນ ໝໍ່ນັ້ນຫລຽວຫລັງມາເຫັນເລີຍຕິຄ້ອໃສ່.

“ແມ່ນໃຜຫັ້ນພິມ !” ເອື້ອຍພອນຖາມ.

“ຈັກເດ້ ມາຖາມຫາຄົນຊື່ ຕິວ ວ່າຊັ້ນ ລ້ອງລ່ອງຊິເຂົ້າໄປຮອດໃນເຮືອນ”

“ໜ້າບໍ່ອາຍເນາະ ມາຍິກຄ້ອໃສ່ປານລິງ” ເອື້ອຍພອນວ່າ.

“ຍອມ ຜູ່ຊາຍເມືອງອັນນີ້” ຂ້ອຍເວົ້າທັງແກວ່ງຫົວ.

ອັນນຶ່ງ ເປັນເວລາຄ້າຍແລງ ຂ້ອຍນັ່ງຢູ່ແປ້ນມ້າໜ້າບ້ານເບິ່ງການເຄື່ອນໄຫວເທິງທ້ອງຖນົນ ທຸກ ໆ ຄົນທີ່ຜ່ານໄປມາເປັນຄົນແປກໜ້າສຳຫລັບຂ້ອຍ ບໍ່ຄືຢູ່ໄຊຍະບູຣີ ຊຶ່ງເກືອບທຸກ ໆ ຄົນຮູ້ຈັກກັນ ຜູ່ຊາຍບໍ່ວ່າແກ່ຫລືໜຸ່ມ ເມື່ອຜ່ານມາເຖິງບ້ານຂ້ອຍແລ້ວ ຈະພາ

ກັນຫລຽວເບິ່ງຂ້ອຍຢ່າງຕັ້ງອົກຕັ້ງໃຈ ຫລາຍ ໆ ຄົນຂີ່ຣົດຜ່ານໄປໄກ ສົມຄວນແລ້ວກໍຍັງຫລຽວມາເບິ່ງອີກ ຈົນລາງເທື່ອຣົດເກືອບຕົກຮ່ອງ ບາງຄັ້ງຂ້ອຍກໍນຶກພູມໃຈທີ່ມີຄົນໃຫ້ຄວາມສົນໃຈເປັນພິເສດ ຄົນເຫລົ່ານັ້ນອາດຈະຊື່ນໃຈທີ່ໄດ້ເຫັນໃບໜ້າອັນຂາວນວນປະດັບດ້ວຍຄິ້ວກົ່ງ ຂົນຕາງອນ ຜົມດຳຍາວແລະເຫັນຕົນຕົວອັນສູງຂາວ ແລະໄດ້ສ່ວນສັດຂອງຂ້ອຍ.

ຄົນທີ່ກາຍໄປມາມີທ່າທາງແປກ ໆ ລາງຄົນໜ້າຕາບົ່ງບອກຄວາມມີປົ້ນຫາໜັກໃຈ ເຂົາອາດຈະມີພາຣະລ້ຽງດູຄອບຄົວ ຊຶ່ງຣາຍໄດ້ບໍ່ກຸ້ມກັບຣາຍຈ່າຍ ລາງຄົນສົດຊື່ນ ເຂົາຄົງພົບກັບຄວາມສົມຫວັງບາງສິ່ງບາງຢ່າງ ລາງຄົນເປັນຕາຊັງ ທ່າທາງກະລ້ອກກະແລັກສ່ວນມາກເປັນພວກຈິໂກະ ຂ້ອຍຊັງພວກນີ້ຫລາຍທີ່ສຸດ ແລະ ປົນໜ້າພິທຸກຄັ້ງທີ່ເຂົາຜ່ານໄປ ຂ້ອຍຊັງຜົມຍາວ ຊັງສົ້ງຂາບານ ຊັງສາຍແອວໃຫຍ່ ຊັງຄວາມເປັນຈິໂກະຂອງເຂົາທີ່ເຫັນຜູ້ສາວແລ້ວມັກສະແດງທ່າທາງບໍ່ສຸພາບໃສ່ ເຊັ່ນກວັກມືວັບ ໆ ຍິ້ມຫລິ່ເອັນໃສ່ທັງທີ່ບໍ່ຮູ້ຈັກກັນ ເມື່ອຢູ່ໄຊຍະບູຣີ ຂ້ອຍໄດ້ຍິນໄດ້ຟັງສເມີເຖິງພຶດຕິການອັນໂຫດຫ້ຽມຂອງພວກນີ້ ເຊັ່ນຍົກພວກຕີກັນ ເອົາຜູ້ຍິງໄປຂົ່ມຂືນຊຸມິດສິບຕໍ່ນຶ່ງ ຂີ່ຣົດຈັກໄປເປັນໝູ່ຫ້າໝູ່ສິບ ສົ່ງສຽງອຶກທຶກນັ່ນນອງ ພາກັນເຂົ້າບາກິນ

ເຫລົ້າ ສູບຊາ ແລະທຳສາຣະພັດຢ່າງຊຶ່ງລ້ວນແຕ່ເບິ່ນອະບາຍມຸກ.

ຂ້ອຍນັ່ງຢູ່ໜ້າບ້ານດົນສົມຄວນ ໃນທີ່ສຸດກໍມີຣົດໂຟກແລ່ນມາຈອດໜ້າບ້ານ ຜູ່ຊາຍວັຍກາງຄົນບ່ອນດໍອອກມາແລ້ວກໍຮ້ອງໃສ່ວ່າ

"ສະບາຍດີນ້ອງສາວ ເຈົ້າຊູແທ້ເອີຍ ມື້ແລງຊິມາຫາເດີ້".

"ຮື້ຍ ຍ ຍ !" ຂ້ອຍເບະສົບແລ້ວປິ່ນໜ້າໜີທັງຈົ້ມມຸບ ໆ ວ່າ ອີ່ຕາຜີບ້ານີ້ເຖົ້າໃກ້ຊິຕາຍແລ້ວ ຍັງມາລອດລາຍໃສ່ຜູ່ແສ້ຜູ່ສາວຢູ່ເຫັນຂ້ອຍເບະສົບໃສ່ ເພິ່ນເລີຍພ້ຳວແລ່ນຣົດໜີໄປ ຍາແມ່ຄົງເຫັນເຫດການຈຶ່ງຮ້ອງຖາມມາແຕ່ໃນເຮືອນ,

"ມີເຣື່ອງຫຍັງພິນ ?"

"ອີ່ຕາທ່ານັ້ນນະ ຢຸດຣົດແລ້ວຖາມສະບາຍດີ ແລະວ່າຊິມາຫລິ້ນນຳວ່າຊັ້ນ ດີບ້ານີ້ລະບໍ່ເຄີຍເຫັນໜ້າຈັກເທື່ອ"

"ຢ່າໄປນັ່ງຢູ່ຫັ້ນເທາະລູກ ເຂົ້າມາໃນເຮືອນພີ້" ຍາແມ່ວ່າ.

ຄ່ຳວັນນັ້ນ ເອື້ອຍພອນພາຂ້ອຍໄປອ່ານຂໍ້ຄວາມຊຶ່ງຂຽນໄວ້ຢູ່ຕາມຝາຫ້ອງນ້ຳຮຽນເຄື່ອງຊົມລຸ່ມ ລາວບອກວ່າຫາກໍເຫັນວ່າງຕອນບ່າຍຂນະທີ່ໄປຊອກຫາເອົາໄຖ່ເປົ່າມາໃສ່ຖ່ານດັງໄຟ ຂ້ອຍພົບຂໍ້ຄວາມທີ່ຂຽນໃສ່ເຈັ້ຽຊຶ່ງຕິດຢູ່ຝາດ້ານເພືອ ເບິ່ນເຈັ້ຽຮູບນິຕຍະສານຊຶ່ງຖືກຈີກອອກເຫລືອໄວ້ທີ່ສອງຜ່ານີ້ ຂໍ້ຄວາມວ່າດັ່ງນີ້ "ອ້າຍຮັກຕືອສຸດຫົວໃຈ

ອະດີດທີ່ມີມົນທິນ ມີຮອຍດ່າງ ຂອງຕົວ ບໍ່ໄດ້ເປັນອຸປສັກທີ່ອ້າຍ ຈະຮັກນ້ອງເລີຍ"

ຂໍ້ຄວາມຖັດລົງມາຂຽນວ່າ "ຢຸດຮ້ອງໄຫ້ເທາະໃຈ ເສັຽນ້ຳຕາໃຫ້ຊາຍຊົ່ວ ໆ ຄົນນັ້ນເຮັດຫຍັງ ?"

ຕໍ່າລົງມາອີກຂຽນວ່າ "ຕົວຂໍລາໄປກ່ອນ ຊີວິດນີ້ອາພັບອັບໂຊກຈຶ່ງຕ້ອງພະເນຈອນໄປເລື້ອຍ ໆ ລາກ່ອນອ້າຍສຸກ ລືມນ້ອງໄດ້ແຫລະດີ"

ຖ້າເຈັ້ຽບໍ່ຖືກຈີກອອກໄປ ຄົງມີຂໍ້ຄວາມໃຫ້ອ່ານຫລາຍກວ່ານີ້ ເຖິງປານນັ້ນ ຂ້ອຍກັບເອື້ອຍພອນກໍຕ້ອງຄິດພັກ ຈາກຂໍ້ຄວາມເຫລົ່ານີ້ ພວກເຮົານຶກເຫັນເປັນນິຍາຍຊີວິດເຣື່ອງນຶ່ງ ຊຶ່ງຕົວນາງເອກໄດ້ແກ່ຄົນຊີ່ຕົວ ແລະຕົວພຣະເອກກໍຄືຊາຍໜຸ່ມທີ່ມາຖາມຫາຕົວນັ້ນ.

ຄືນນັ້ນ ຂ້ອຍກັບເອື້ອຍພອນ ພາກັນນອນງຽບແຕ່ຍັງບໍ່ຫລັບ ດາວນຶ່ງເອື້ອຍພອນກໍເວົ້າຂຶ້ນທ່າມກາງຄວາມມືດ.

"ພື້ນ.... ມື້ນີ້ຕານຶ່ງຂີ່ຣົດຈີບມາຈອດໜ້າບ້ານ ແລ້ວວ່າຈັ່ງຊີ້ແຫລະ ນ້ອງສາວຜູ້ງາມແທ້ ນີ້ແລງຊິມາຫາເດີ້ ຢ່າໄປມີແຟນກ່ອນໃດລະ ຄິດມາແລ້ວຢາກຮົ້ວຢາກຫົວ ເວົ້າປານວ່າຮູ້ຈັກກັນ"

ຂ້ອຍຢາກເວົ້າຫຍັງອອກມາ ແຕ່ອົດຫົວບໍ່ໄດ້ຈຶ່ງຊັດອອກມາແອັກໆ

"ບາດຂ້ອຍຊ້ຳແມ່ນຣົດໄຟກ ເວົ້າວ່າຊິມາຫາຄືກັນນີ້ລະ"

ຂ້ອຍບອກເອື້ອຍພອນ.

"ແທ້ອະ ?" ເອື້ອຍພອນຖາມສີຕື່ນ ໆ

"ແທ້ລະຕີ ຂ້ອຍເບະສົບໃສ່ ເບິ່ງເພິ່ນເປີດອາຫລາດ ຍາ ແມ່ກໍຍັງເຫັນນຳ"

ແລ້ວສອງນ້ອງເອື້ອຍເຮົາກໍພາກັນຫົວ.

ຂ້ອຍຄິດວ່າ ອັນຄົນເມືອງໃຫຍ່ນີ້ ບໍ່ວ່າໜຸ່ມຫລືແກ່ ບໍ່ມີຄຸນສົມບັດຜູ້ດີກັນເລີຍ ເບິ່ງຂີ່ຣົດທຳທ່າທາງເປັນເຈົ້ານາຍໃຫຍ່ ບາດເຫັນຜູ້ສາວແລ້ວຢຸດຣົດຮ້ອງໃສ່ທັງທີ່ບໍ່ຮູ້ຈັກກັນ ທຳອິດຂ້ອຍຄິດວ່າເປັນແຕ່ພວກຈິໂກະ ຄົນເມືອງໃຫຍ່ນີ້ບໍ່ມີວັທນະທັມເລີຍ ຢູ່ຕາມບ້ານນອກເຂົາບໍ່ກະທຳດັ່ງນີ້ ຖ້າບໍ່ຮູ້ຈັກກັນ.

ນັ້ນເປັນເຣື່ອງແປກ ໆ ທີ່ພວກເຮົາພົບຢູ່ບ້ານເຈົ້າຫລັງນີ້ນັບແຕ່ນັ້ນມາ ຂ້ອຍກັບເອື້ອຍພອນກໍມີເຣື່ອງເວົ້າຢອກກັນ ຂ້ອຍເວົ້າໃຫ້ເອື້ອຍພອນວ່າ "ແຟນອີ່ຕາຣົດຈີບ" ແລະເອື້ອຍພອນເວົ້າໃຫ້ຂ້ອຍວ່າ "ແຟນອີ່ຕາຣົດໂຟກ"

ເວລາໃດມີຣົດໂຟກຜ່ານບ້ານ ເອື້ອຍພອນບອກໃຫ້ຂ້ອຍຫລຽວເບິ່ງສເມີ ແລະເມື່ອມີຣົດຈີບບໍ່ວ່າຄັນໃດຜ່ານມາ ຂ້ອຍກໍຮ້ອງບອກເອື້ອຍພອນເບິ່ງໂລດ.

"ເດັກນ້ອຍນີ້ມັນເອົາເຣື່ອງຫຍັງກັນຫິ ?" ຍາແມ່ວ່າ ພວກເຮົາໄດ້ແຕ່ມິດ ໆ ໄວ້.

ມາເຖິງວັນທີ່ ໑໓ ກັນຍາ ຂ້ອຍກັບເອື້ອຍພອນນັ່ງລົມກັນຢູ່ຫ້ອງນອນ ເບິ່ງເວລາ ໙ ໂມງກາງຄືນແລ້ວ ປະຕູໜ້າບ້ານຖືກອັດຮຽບຮ້ອຍ ຄາວນັ້ນມີສຽງຣົດແລ່ນມາຈອດໜ້າບ້ານ ເອື້ອຍພອນພ້າວມອດໄຟໃນຫ້ອງ ແລ້ວພວກເຮົາກໍພາກັນສ່ອງເບິ່ງຕາມຂ່ອງຍ້ຽມ ທີ່ອັດແງັບແງໄວ້ ເຫັນຊາຍຜູ້ນຶ່ງລົງຈາກຣົດຈຶ່ງ ຫລຽວມາເບິ່ງເຮືອນເຮົາຍ່າງໄປຍ່າງມາ ເມື່ອເຫັນປະຕູໜ້າບ້ານອັດຢູ່ ຊາຍຄົນນັ້ນກໍກັບຂຶ້ນຣົດແລ້ວຂັບໄປຈອດຢູ່ໜ້າຮ້ານເຝີປາກທາງແຍກ ມີຄົນລົງຈາກຣົດເຂົ້າໄປໃນຮ້ານເຝີ ບໍ່ດົນກໍກັບຂຶ້ນຣົດຂັບແລ່ນຕໍ່ໄປ.

"ຣົດຄັນນີ້ແຫລະພິມທີ່ວ່າເຄີຍມາຈອດໜ້າບ້ານເຮົາ ແລ້ວມີຄົນຮ້ອງໃສ່ເອື້ອຍ ບໍ່ຮູ້ວ່າແມ່ນໃຜ ຄົນແກ່ອາຍຸປະມານ ໔໐ ປີປາຍແລ້ວ" ເອື້ອຍພອນວ່າ

"ເພື່ອໃຫ້ເຊົາສົງສັຍ ເຮົາໄປຖາມນາງມ່ອຍຮ້ານເຝີລອງເບິ່ງເທາະ" ຂ້ອຍຊວນ

"ໄປກໍໄປຕີ້" ເອື້ອຍພອນຕອບຕົກລົງ.

ແລ້ວສອງເອື້ອຍນ້ອງເຮົາກໍພາກັນໄປຍັງຮ້ານເຝີ ເພື່ອສອບ

ຖາມເອົາຄວາມກະຈ່າງແຈ້ງ ເຮົາມາຢູ່ເຮືອນຫລັງນີ້ສິບກວ່າປີແລ້ວ ປາກົດວ່າມີແຕ່ເຣື່ອງແປກ ໆ ເປັນທີ່ສົງສັຍຢູ່ບໍ່ເລີກບໍ່ແລ້ວ ຂ້ອຍເຄີຍຖາມໝູ່ຜູ້ຊາຍທີ່ເປັນຄົນຈາກໄຊຍະບູຣີ ແລະມາຮຽນຢູ່ວຽງຈັນວ່າ ບ່າກ້ອຍຫລີໂມນຕາມຫລີດົງບ່າລານ ຊຶ່ງໝັງລືມວ່າ ມີໂສເພນີຫລາຍ ໆ ນັ້ນຢູ່ທາງໃດ ກໍໄດ້ຮັບຄຳອະທິບາຍເປັນທີ່ອຸ່ນໃຈວ່າ ທີ່ເຮົາຢູ່ນີ້ຍັງໄກຫລາຍໂຍດ.

ພວກເຮົາເຂົ້າໄປຢືນໃກ້ ໆ ນາງມ່ອຍແລ້ວຖາມຄ່ອຍ ໆ

"ອີ່ຕານັ້ນອົ໊ະ ເລົາເປັນພາສີມີເງິນລ້າຍຫລາຍ ເລົາເຫັນຜູ້ສາວງາມ ໆ ເລີຍມາຫາ" ນາງມ່ອຍວ່າ

"ມາຫາຈັ່ງໃດ ບໍ່ຮູ້ຈັກກັນ" ເອື້ອຍພອນບອກ

"ຄືຈັ່ງຊີ້ ເຮືອນພວກເຈົ້າຢູ່ ດຽວນີ້ນະແຕ່ກ່ອນມີຜູ້ສາວ... ກະຜູ້ສາວອັນນັ້ນແຫລະ ເວົ້າຄັກ ໆ ສາເປັນເຮືອນຜູ້ສາວຫາກິນທາງລັບ ອີ່ຕາພາສີເລົາເຄີຍມາເລື້ອຍ ໆ ຂ້ອຍບອກເລົາວ່າ ດຽວນີ້ມີຄົນມາຢູ່ໃໝ່ ເປັນຄົນດີ ຜູ້ສາວຫາກິນຍ້າຍໄປຢູ່ບ່ອນໃໝ່ໝົດແລ້ວ"

"ຕ້າຍ ຕາຍ ! ແຕ່ກ່ອນເປັນເຮືອນແມ່ຈ້າງຊູ້ມອະ" ຂ້ອຍອົດຕື່ນເຕັ້ນບໍ່ໄດ້.

"ແມ່ນລະ ເບັ້ນບ່ອນລັບ ໆ ມີຜູ້ຍິງເຈັດແປດຄົນ ຍ້າຍພີ່ ເມື່ອສາມເດືອນມາແລ້ວ" ນາງມ່ອຍໄຂຄວາມຕໍ່.

ຂ້ອຍກັບເອື້ອຍພອນກັບມາບ້ານ ລົມກັນມາເຖິງເຣື່ອງ ແປກ ໆ ຊຶ່ງເກີດຂຶ້ນນັບແຕ່ເຮົາມາພັກຢູ່ເຮືອນຫລັງນີ້ ແລ້ວກໍພາກັນ ຫົວແອັກ ໆ ເຣື່ອງຜູ້ຍິງຊິຕົວເບັ້ນອັນວ່າແຈ່ມແຈ້ງ ນາງຄິໂສເພນີຊຶ່ງ ອາດຈະຖືກຫລອກລວງມາ ຫລືສມັກໃຈມາຢູ່ທີ່ນີ້ເພື່ອພົ້ຄວາມຊອກຊ້ຳ ອັນເນື່ອງມາຈາກຄວາມຣັກເບັ້ນພິດ, ສອງຄົນເຮົາໂສກັນວ່າ ຈະຊອນ ຍາພໍ່ຍາແມ່ຍ້າຍພີ່ຈາກເຮືອນຫລັງນີ້ໃຫ້ໄດ້ ຍ່າງຊ້າບໍ່ໃຫ້ກາຍສົມເດືອນ ນີ້ ຂືນຢູ່ຕໍ່ໄປຈະຕ້ອງມີຄົນມາຖົມເງິນເປະໃສ່ຕໍ່ໜ້າ ແລ້ວດຶງແຂນເຂົ້າ ຫ້ອງຄັກ ໆ.

■ ■ ■

## *ກິບຈົ່ມ*

ຂ້ອຍແຮ່ງທຸກ ເພີ່ມແຮ່ງຊ້ຳ ຍຸບຍອບຣາຄາ
ເຫລືອຄ່າ ເຫລືອສັກສີ ຍ່ອມເຍົາເອົາຮ້າຍ
“*ດັອລຯ*”ນຶ່ງ ເຄີຍທຽມດ້ວຍ ສາມສິບປາຍເງິນກິບ
ຕົກມາເປັ່ນ ແປດຮ້ອຍ ປາຍໄດ້ນຶ່ງ “*ດັອລ*”....

ຕົວຂ້ອຍລີບ ກິບມ້ອຍ ຈ້ອຍຈົ່ມງົມທຸກ
ມາຍຂ້ອຍ ຊົມຊາວລາວ ກໍທຸກລົງບໍ່ລືມຂ້ອຍ
ຂົມຂວາຍດັ້ນ ຂໍເງິນຊາດອື່ນ
ມາຊ່ອຍຄ້ຳ ຊາມຂ້ອຍງອກເງີຍ ແດ່ທ້ອນ

“ *ປາໄມ* ”

# ສຳນຶກຂອງຈິໂກະ

ແລງ ພູຜາເງິນ

*ແລງມື້ນີ້ ອ້າຍແລະເອື້ອຍໄປກິນເຂົ້ານອກ ພໍຣົດພົ້ນປະຕູບ້ານ ແຜນການຂອງຂ້ອຍກໍເຣີ່ມເປັນຮູບໃນສມອງ.*

ເວົ້າກໍເວົ້າເທາະ ຂໍເງິນນ່າເອື້ອຍໃນ້ນີ້ຍາກພິລຶກ....! ໃຫ້ກໍບໍ່ເກີນສອງຮ້ອຍຈັກເທື່ອ ດັນຂໍນຳອ້າຍ ເພີ່ນຊ້າວ່າໃຫ້ໄປຂໍນຳເອື້ອຍ ຂ້ອຍເອງບໍ່ຢາກຜິດຫວັງ ໃນເມື່ອກະວ່າຈິບໍ່ໄດ້ແລ້ວຂ້ອຍກໍບໍ່ຂໍເລີຍ

ລັກເອົາດີກວ່າ.

*ຂ້ອຍຮູ້ວ່າ ເພິ່ນມັກເອົາລູກກຸນແຈ* ເຊື່ອງໄວ້ *ພາຍໃນບ້ານສເມີ ບໍ່ບ່ອນໃດກໍ່*ບ່ອນນຶ່ງ.

ມື້ນຶ່ງ ເອື້ອຍກັບອ້າຍບໍ່ຢູ່ບ້ານ ຂ້ອຍກໍ່ໄປຫົວຂັ້ນໄດແລ້ວຣື້ຜ້າເຊັດຕີນອອກ.

ມັນຊ່າງບໍ່ຜິດຕາມຄວາມຄາດໝາຍເລີຍ ລູກກຸນແຈວາງຢູ່ອ່ອງລ່ອງ.

ຫວານລະ! ຂ້ອຍໃຊ້ລູກກຸນແຈໄຂປະຕູ ແລ້ວຢ່ອງເຂົ້າໄປໃນ ຂ້ອຍພົບວ່າມີເງິນຢູ່ຫົວບ່ອນນອນປະມານ ຫົກພັນກີບ ແຕ່ຂ້ອຍເຮັດພໍເບົາໆ ຄືເອົາແຕ່ຫ້າຮ້ອຍກີບ ແຖມຕື່ມເຊົ້າມາຍັງເຮັດໜ້າຊື່ໆໄປຂໍນຳອ້າຍອີກສອງຮ້ອຍ ຕົກລົງຂ້ອຍມີເງິນເຈັດຮ້ອຍກີບ.

ພໍຮອດບ່າຍມາ ເພິ່ນຄົ້ນພົບວ່າເງິນຂາດໄປຫ້າຮ້ອຍ.

"ສົງໃສບັກຈິໂກະແລ້ວ" ເອື້ອຍໃພ້ວ່າ ຈິໂກະ ເພິ່ນໝາຍເຖິງຂ້ອຍ.

*"ມັນບໍ່ມີຈິລັກ ມື້ເຊົ້າຍັງມາຂໍນຳຂ້ອຍສອງຮ້ອຍ" ອ້າຍວ່າ ຂ້ອຍຍິ້ມຢູ່ໃນໃຈ.*

ມື້ນີ້ ຂ້ອຍຈິລັກເອົາຈັກພັນນຶ່ງ ພໍທ່ຽວໃຫ້ສນຸກ ບ່ອນເພິ່ນເຊື່ອງລູກກຸກແຈ ຂ້ອຍຄິດຄະເນໄວ້ໝົດແລ້ວ.

ຂ້ອຍກໍ່ໄປຣີ້ຜ້າເຊັດຕີນທີ່ຂັ້ນໄດ ບໍ່ພົບ ຄົ້ນເບິ່ງກ້ອງຜ້າເຊັດຕີນເຮືອນຄົວ ບໍ່ພໍ້ ໄຂເບິ່ງແບບເຂົ້າທຸກແອບ ບໍ່ເຫັນ

ໃນໝໍ້ໜຶ້ງເຂົ້າ – ສູນ

ໃນປິ່ນໂຕ – ສູນອີກ

ຄົ້ນໃນໝໍ້ທຸກໜ່ວຍ ໃນແອ່ງເຂົ້າໝ່າ ໃນທໍ່ເກືອ ຕາມແຈຝາທັງສີ່ດ້ານ ໃນລີ້ນຊັກ ແຕ່ກໍ່ບໍ່ເຫັນຈັກບ່ອນເລີຍ.

ຂ້ອຍຮູ້ວ່າແຜນການກຳລັງຊິລົ້ມແຫລວ... ຂ້ອຍລົງໄປເດີ່ນບ້ານ ຄົ້ນນຳກອງດິນຊາຍເບິ່ງຕາມງ່າດອກກຸຫລາບທີ່ສອນໜ້າບ້ານ ງົມໃນອ່າງນ້ຳລ້າງຕີນ ແຕ່ກໍ່ປານວ່າງົມເຂັມໃນທະເລ

ຂ້ອຍກັບໄປເຮືອນຄົວອີກ ຄິດວ່າຈະເບິ່ງບ່ອນສຸດທ້າຍຄືຖົງຕອງກາເຟ ຂ້ອຍຄຳເບິ່ງຮູ້ສຶກແຂງໆ ແລະສີພັກໆ ຂ້ອຍຄິດວ່າຈັ່ງໃດກະຢູ່ນີ້ແທ້ໆ ຂ້ອຍເອົາມືຈົກລົງໄປ ບາ! ເຫລັກໄຂປ່ອງນ້ຳມັນ...!

ເວລາຜ່ານໄປ....

ໃນທີ່ສຸດ ຣົດຂອງອ້າຍເອື້ອຍກໍ່ແລ່ນເຂົ້າມາເດີ່ນບ້ານ ຂ້ອຍມິດຢູ່ ບໍ່ປາກບໍ່ຕີງ ຟັງສຽງເພີ່ນອັດປະຕູຣົດດັງກຶບກັບ ແລ້ວທັງສອງກໍ່ຂຶ້ນຂັ້ນໄດມາ.

"ຕ້າຍ! ລືມໃສ່ກຸນແຈ ລູກມັນຄາຢູ່ຮູນີ້" ເອື້ອຍໃພ້ເວົ້າສຽງຕື່ນໆ

"ຣີ້!...ບໍ່ແມ່ນເຄື່ອງເສັຽພົດແລ້ວວະ?" ອ້າຍວ່າ.

ທັງສອງເຂົ້າໄປໃນເຮືອນ ໄດ້ຍິນສຽງບາດຕີນເບິ່ນສັບສົນ

ດັງຈະຫາເບິ່ງວ່າ ມີເຄື່ອງອັນໃດເສັຽ.

"ໄດແດ່...ເງິນຍັງຄົບ ບໍ່ເສັຽຈັກກີບ" ເອື້ອຍໃພ້ວ່າ

"ບັກຈິໂກະ ມັນກະດີເດັ້ນ ຄິດວ່າມັນຊິລັກ" ອ້າຍສັຣເສີນ.

ຂ້ອຍຍິ້ມຢູ່ໃນໃຈ ແລະນຶກດ່າຕົວເອງທີ່ບໍ່ເບິ່ງປະຕູສາກ່ອນ ວ່າມັນອັດໃສ່ກຸນແຈຫລືບໍ່ ກ່ອນທີ່ຈະລົງມືໄປຊອກຄົ້ນຕາມທີ່ຕ່າງໆ.

ຂ້ອຍນັ່ງຄິດ ນັ່ງຟັງ ແລະຮິ່ນຕອງຄຳເວົ້າຂອງອ້າຍແລະເອື້ອຍໃພ້ ທີ່ລົມກັນວ່າ "ບັກລືມນີ້ມັນຄິດຂຶ້ນຫລາຍດຽວນີ້ ຄ່ຳມາກໍຢູ່ບ້ານຢູ່ເຮືອນ ດົນໆຈຶ່ງໄປທ່ຽວເທື່ອນຶ່ງ ຜົມກໍຕັດສັ້ນ ເວົ້າຈາໄດ້ຖ້ອຍໄດ້ຄວາມ ເງິນປະໄວ້ຕາມໃນເຮືອນກໍບໍ່ເສັຽຄືແຕ່ກ່ອນ ມັນໃຫຍ່ແລ້ວກໍຄືຊິປ່ຽນນິສັຍເປັນຄົນຮູ້ຜູ້ດີຕໍ່ໄປ ມື້ເຊົ້ານີ້ເຫັນມັນລ້າງຣົດໂດຍບໍ່ຕ້ອງບອກ ຕັ້ງແຕ່ເຊົ້າກໍບ່ອຣະບັດເດີນບ້ານ ດັ່ງນັ້ນມັນດີຈັ່ງຊີ້ຕໍ່ໄປກໍໄດແດ່ບໍ່ມີຫຍັງໜັກໃຈອີກຕໍ່ໄປ ເຮົາກໍຈະໄວ້ໃຈມັນ ໃຫ້ມັນເຝົ້າດູແລບ້ານໃນເວລາບໍ່ຢູ່ ໃຫ້ແລ່ນວຽກຊ່ອຍບາງສິ່ງບາງຢ່າງ ປີນີ້ໃຫ້ມັນເສັງເຂົ້າວິທຍາລັຍພ້ອມໆອີກເທື່ອນຶ່ງ ຖ້າເສັງບໍ່ໄດ້ກໍຈະຫາເງິນຫາຄ່າສົ່ງໃຫ້ມັນໄປຮຽນຊ່າງວິທຍຸຢູ່ບາງກອກ ດີກວ່າຈະເຕະຝຸ່ນລ້າໆ ເພື່ອຈະໄດ້ມີອາຊີບລ້ຽງຕົນລ້ຽງຕົວຕໍ່ໄປ"

*ຂ້ອຍນັ່ງມິດ ບໍ່ປາກບໍ່ຕີງ ແລະຄິດວ່າຈະເປັນຄົນດີຕາມທີ່ອ້າຍເອື້ອຍເຂົ້າໃຈ.* ■

# ລ.ດ.ລ.ວ.

ແລງ ພູຜາເງິບ

*ຂ້ອຍເຊື່ອເຫລືອເກີນວ່າ ໃນໂລກອັນກວ້າງໃຫຍ່ໄພສານນີ້ ບໍ່ມີຊີວິດໃດຕ້ອງລົ້ມລຸກຕິລັງກາເດັ່ງເຊັ່ນພວກຂ້ອຍ* ຂ້ອຍຄິດເຫັນງົວຄວາຍທີ່ຖືກຕ້ອນເຂົ້າໂຮງຂ້າສັດຖືກນຳໄປຂ້າຢ່າງໂຫດຮ້າຍທາລຸນກໍຈິງຢູ່ ແຕ່ເມື່ອລົ້ມແລ້ວບໍ່ມີລຸກຂຶ້ນມາເພື່ອຈະຖືກທຳໃຫ້ລົ້ມລົງໄປອີກ ສ່ວນຂ້ອຍນັ້ນ ລົ້ມແລ້ວກໍລຸກ ລຸກແລ້ວກໍລົ້ມ ມີແຕ່ລົ້ມກັບລົ້ມ.

ໂອ້....ອະນິດຈາເອີຍ

ຂ້ອຍຄົງມີບາບພາມາແຕ່ຊາດກ່ອນ ຊາດນີ້ຈຶ່ງຕ້ອງມາໃຊ້ກັມໃຊ້ເວນຢ່າງບໍ່ມີອັນສຸດສ້ຽງ ຂ້ອຍທຳເວນໄວ້ກັບໃຜນໍ ຈຶ່ງຕ້ອງມາໃຊ້ກັມອັນຊ້ຳຊາກ ໜ້າເບື່ອໜ່າຍ ແສນລຳຄານເຊັ່ນໃນຂນະນີ້?

ຂ້ອຍຄຶດຢາກຕາຍຄືກັນ ຄຶດຢາກໜີຊີວິດອັນໃຣ້ຄວາມໝາຍ ຊີວິດອັນໂຊເຊແລະຂາດຄວາມສງົບ ຂ້ອຍເຄີຍປ້ອຍແລ້ວກໍປ້ອຍຜູ້ທີ່ມາທຳໃຫ້ຂ້ອຍຕ້ອງລົ້ມແລ່ງແງ່ງຢ່າງໄຣ້ຄວາມປານີ ແຕ່ແຮ່ງປ້ອຍເທົ່າໃດເຂົາແຮ່ງໄດ້ໃຈ ທຶກເທິມພັກອື້ນ ແລ້ວກໍໂຍນພາກອຸ້ມລຸ້ມນັ້ນມາໃສ່ຂ້ອຍ ບໍ່ມີຍຸດບໍ່ມີເຊົາ ໂອ້! ກັມອິຫຍັງເດ,

ປ້ອຍແລ້ວກໍປ້ອຍ ແຊ່ງແລ້ວກໍແຊ່ງ ແຕ່ກໍບໍ່ມີຜົນຢ່າງໃດເລີຍ ຊ້ຳບໍ່ໜຳເຂົາຍັງພາກັນດີອົກດີໃຈ ຫົວແອະຫົວແອ່ນ ເຫັນເປັນຂອງສນຸກໄປ ຂ້ອຍຄຶດວ່າ ຂືນມາຈົ່ມມາວ່າຢູ່ເຊັ່ນນີ້ ຂ້ອຍຄົງເປັນໂຣກເສັ້ນປະສາດຕາຍແນ່ໆ ຄວາມຈິງຂ້ອຍກໍຢາກຕາຍຢູ່ດອກ ແຕ່ມັນກໍບໍ່ຕາຍຈັກເທື່ອ ມີແຕ່ທໍຣະມານຢູ່ທຸກມື້ທຸກເວັນ.

ໃນທີ່ສຸດ ຂ້ອຍກໍຄິດຕົກ ເຊົາປ້ອຍເຊົາດ່າ ທຳຕົວໃຫ້ສງົບເພື່ອສູ້ໜ້າກັບການລົ້ມແລ່ງແງ່ງຕໍ່ໄປ ເພື່ອໃຊ້ກັມໃຊ້ເວນໃຫ້ໝົດໄປກັມທີ່ຂ້ອຍສ້າງມາແຕ່ປາງກ່ອນ.

ຂ້ອຍຄຶດຢູ່ບໍ່ເລີກບໍ່ແລ້ວວ່າ ເຫດໃດຄົນພວກນີ້ຈຶ່ງພາກັນຊັງພວກຂ້ອຍພີລຶກພີລ້ຳແທ້ ຜູ້ໃດກໍພ້າຕາຈົບງາມ ສົມເປັນຄົນຮູ້ຜູ້ດີເງິນກໍຫລາຍທຸກຄົນ ແລ້ວເຮັດຈັ່ງໃດວ່າເອົາເງິນໄປຊື້ໝາກອຸ້ມລຸ້ມນັ້ນພ່ອຍທໍ່ໝາກພ້າວຫ້າວນີ້ແຫລະ ມາໂຍນໃສ່ຫົວພວກຂ້ອຍ ພວກຂ້ອຍຕ່າງກໍລົ້ມກຸ່ມໆແຕກຊະແຕກຊາຍ ແລະໄປນອນແລ່ງແງ່ງຢ່າງບໍ່ມີຜູ້ຂ້ອງກັນຊ່ວຍເຫລືອຢ່າງໃດ ໃນທີ່ສຸດ ກໍຖືກເອົາລາກຄຳມາຢືນຮຽງກັນເພື່ອທີ່ຈະຖືກເຮັດໃຫ້ລົ້ມຕໍ່ໄປ.

ຂ້ອຍຄຶດວ່າ ຈະເປັນການດີທີ່ສຸດ ຖ້າຄົນພວກນີ້ເອົາເງິນໄປຊື້ຂອງຂວັນໃຫ້ເດັກນ້ອຍກຳພ້າ ຫລືຊື້ສິ່ງຂອງຈຳເປັນໃຫ້ຊາວອົພຍົບຜູ້ທຸກຍາກເຂັນໃຈຊຶ່ງມີເປັນຈຳນວນແສນໆຄົນ ແລະກຳລັງຄອຍເມດຕາຈິດຈາກຜູ້ມີຢູ່ມີກິນທຸກຄົນ ຫລືເອົາເງິນໄປຊື້ຂອງຂວັນໃຫ້ແກ່ທະຫານເຈັບປ່ວຍທີ່ນອນຮັກສາຕົວຢູ່ຕາມໂຮງພຍາບານຕ່າງໆ ຫລືບໍຣິຈາກເປັນບຸນແກ່ນັກຮຽນທີ່ຍາກຈົນຊຶ່ງຕ້ອງການປັດຈັຍຫລາຍຢ່າງ ເຊັ່ນອຸປກອນການຮ່ຳຮຽນ ສົ້ງເສື້ອ ແລະຄ່າອາຫານເປັນຕົ້ນ.

ຂ້ອຍຈື່ໄດ້ວ່າ ເທື່ອນຶ່ງມີຜູ້ສາວງ້ານງາມແລ່ນແລະກິ້ງໝາກອຸ້ມລຸ້ມນັ້ນມາໃສ່ພວກຂ້ອຍ ຫລາຍເທື່ອຕໍ່ຫລາຍທີ ເພິ່ນກໍເລີຍພະລາດລົ້ມ ສົ້ນຮີມາຢູ່ບັກແອວພີ້ລະ ເຫັນຂາຂາວອາດຫລາດ ຂ້ອຍອົດຫົວ

ບໍ່ໄດ້ຈຶ່ງຊັດອອກມາແອັກ ໆ ຈົນທ້ອງຂົດທ້ອງແຂງ ແຕ່ນັ້ນມາ ເພິ່ນກໍເລີຍຫັນມານຸ່ງສົ້ງຂາຊ້າງ ພວກທີ່ນຸ່ງສິ້ນທັງຫລາຍຫັນມານຸ່ງສົ້ງກັນເກືອບໝົດທຸກຄົນ  ຈົນຂ້ອຍຫລົງຄຶດວ່າເປັນແກວເບິ່ນເຈັກເບິ່ນໄທຊັ້ນດອກ ທີ່ແທ້ລາວເຮົາດີໆນີ້ເອງ.

ພວກຂ້ອຍໂຮມກັນເປັນຈຸ ຈຸລະສິບ  ທ້ອນຮຽງກັນບັ້ນເລີຍທຸກມື້ທຸກວັນ ພວກຂ້ອຍມີໜ້າທີ່ ລ.ຕ.ລ.ວ. ບໍ່ແມ່ນ*ລືມຕລອດວັນດອກ* ຫາກແຕ່ *ລົ້ມຕລອດວັນ*.

ຂ້ອຍເປັນຜູ່ມັກຈົ່ມຫລາຍກວ່າໝູ່  ທັງຈົ່ມທັງວ່າຈົນໝູ່ຢາກໄລ່ຫູ ຈົ່ມແບ່ະໆບໍ່ເຊົາປາກ ໝູ່ກໍເລີຍເວົ້າແດກໃສ່ດັ່ງນີ້ແຫລະ "*ຈົ່ມມັນໄດ້ປໂຍດອີ່ຫຍັງ? ໃຜບອກມຶງເກີດມາເປັນພິນໂບລົ້ງ*"



ພິມທີ່ *ປາກປາສັກ* ການພິມ
9–11 ຖນົນນ້ຳງຸ່ມ ວຽງຈັນ
[ ທາງແຄມຂອງ ]
☎ 2262
ພ.ສ. 2515 ທັນວາ –1/1,200

## ■ ປາໄນ ■



....ຜູ່ຢືນເປັນສະງ່າ ຢູ່ກາງອຸທິຍານອັກສຣ
ແຫ່ງແດນລານຊ້າງ ຫລັງຈາກຝົນອາຣົມ
ສ່ຽງອຸປສັກ ແລະສູ້ຣົບຕົບມືກັບອະທັມໃນ
ວົງສັງຄົມມະນຸດ ດ້ວຍຄວາມຄິດເວທນາຕໍ່
ຫົວໃຈໄຣ້ບ່ອນເພິ່ງຂອງເພື່ອນຮ່ວມຊາດ

## ■ ດອກເກດ ■



....ສາວໂສດຜູ່ມີຄວາມຮັກ ທີ່ປຣາສຈາກຢາ
ພິດ ແລະບໍ່ເປັນພັຍທັງຕໍ່ຕົນເອງແລະຜູ່ອື່ນ
ຍັງມຸ່ງຫວັງຕັ້ງໃຈຄັກແນ່ວ່າ ຈະຮ່ວມປູກ
ແປງສວນອັກສອນ ໃຫ້ປົ່ງດອກງອກງາມ
ຕໍ່ ໆ ໄປ

## ■ ແລງ ພູຜາເງິນ ■



....ເຂົາເຫັນນ້ຳຕາເປັນປວັຕສາຕຣັກ ອັນລ້ຳ
ຄ່າຂອງຍິງສາວ.... ເຫັນພັຍສົງຄາມເປັນບົດ
ຮຽນຂອງຊາດ.... ແລະເຫັນຄວາມສົມຫວັງ
ຂອງມະນຸດທຸກຮູບທຸກນາມ ເປັນແຕ່ພຽງ
ສິ່ງທີ່ມີຊື່ ແຕ່ບໍ່ຜາກົດຮູບຮ່າງຕົວຕົນ ບໍ່
ວ່າໃນໂລກນີ້ ຫລືໂລກອື່ນໃດກໍ່ຕາມ